ຮ່າງ ສະບັບວັນທີ 01 ມີນາ 2019

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ກະສິກຳ ແລະ ປ່າໄມ້ ເລກທີ__________/ກປ

ນະຄອນຫຼວງວຽງຈັນ, ວັນທີ:..................

# ‘ ຮ່າງ” ບົດຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳ ປີ 2018 ແລະ ທິດທາງແຜນການ ປີ 2019

- ອີງຕາມ ແຜນພັດທະນາ ກະສິກຳ ແລະ ປ່າໄມ້ 5 ປີຄັ້ງທີ VIII (2016-2020) ແລະ ແຜນພັດທະນາ ກະສິກຳ ແລະ ປ່າໄມ້ ປະຈຳປີ 2018.
- ອີງຕາມ ມະຕິຂອງກອງປະຊຸມ ສະພາແຫ່ງຊາດ ສະບັບເລກທີ 075/ສພຊ, 076/ສພຊ ລົງວັນທີ 17 ພະຈິກ 2017.
- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 397/ນຍ, ລົງວັນທີ 22 ທັນວາ 2018 ວ່າດ້ວຍການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານ ແຫ່ງລັດ ປະຈຳ ປີ 2018.
- ອີງຕາມ ການລາຍງານ ຂອງ ບັນດາກົມ, ສະຖາບັນ ອ້ອມຂ້າງກະຊວງ, ບົດລາຍງານ ຈາກ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ທົ່ວປະເທດ.

# ພາກທີ I: ສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາ ຊົນນະບົດ ປະຈຳ ປີ 2018

## I. ສະພາບລວມ:

ເພື່ອເປັນການສືບຕໍ່ ແນວທາງ ກະສິກຳ ໃຫ້ຖືກທິດຂະຫຍາຍຕົວ ຂອງ ຍຸກສະໄໝ ແລະ ໂດຍອີງໃສ່ ສະພາບການປ່ຽນ ອັນສັບສົນ ຂອງ ສະພາບ ດ້ານການເມືອງ-ເສດຖະກິດ ໃນພາກພື້ນ ແລະ ໃນໂລກ ກໍ່ຄື ສະພາບການປ່ຽນແປງ ດິນຟ້າອາກາດ, ອີງໃສ່ ບົດຮຽນຖອດຖອນກັບ ສສ ຫວຽດນາມ, ສປ ຈີນ ແລະ ບັນດາ ປະເທດ ອາຊຽນໃນຂົງເຂດ ປະເທດພາກພື້ນ ແລະ ໃນໂລກ, ບົນຈິດໃຈ ຊີ້ນຳ ຂອງ ລັດຖະບານ, ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ເຫັນຄວາມຈຳເປັນ ທີ່ຈະຕ້ອງໄດ້ ທົບທວນ ຄືນໃໝ່ ແລະ ຄົ້ນຄ້ວາ, ກຳນົດ ຍຸດທະສາດ ແລະ ນະໂຍບາຍ ຕໍ່ການຜະລິດ ກະສິກຳ ແລະ ຄຸ້ມຄອງ ປ່າໄມ້ ໂດຍ ກຳນົດເອົາ 03 ເສົາຄ□້າ ຄື: ກະສິກ□າ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ ແລະ 4 ແຜນງານຫຼັກ ເຊັ່ນ: 1): ແຜນງານຜະລິດ ສະບຽງ ອາຫານ ໃຫ້ມີຄວາມໝັ້ນຄົງ ແລະ ຄົບດ້ານໂພຊະນາການ; 2) ແຜນງານ ການຜະລິດເປັນສິນຄ້າ ທີ່ໄດ້ທັງປະລິມານ, ຄຸນນະພາບ ແລະ ເປັນກະສິກຳ ສະອາດ ແລະ 3) ແຜນງານ ການຄຸ້ມຄອງ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແບບຍືນຍົງ ແລະ 4) ແຜນງານ ພັດທະນາ ຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ. ພ້ອມດຽວກັນນີ້, ພວກເຮົາ ຍັງໄດ້ກຳນົດ 10 ແຜນດຳເນີນງານ ຊຶ່ງໄດ້ຜັນຂະຫຍາຍເປັນ ໂຄງການ ທີ່ມີ ຄາດໝາຍສູ້ຊົນ, ຕົວຊີ້ບອກ ລະອຽດ ພ້ອມ ສ້າງ ມາດຕະການ ຈັດຕັ້ງປະຕິບັດ ເພື່ອ ບັນລຸ ຕົວເລກ ທີ່ວາງອອກ.

ໂດຍສະເພາະ ແຜນການ ປີ 2018, ພວກເຮົາ ສືບຕໍ່ສຸມໃສ່ ຈັດຕັ້ງປະຕິບັດ ເພື່ອບັນລຸ ຄາດໝາຍສູ້ຊົນ ທີ່ກຳນົດໄວ້ ໃນມະຕິ ກອງປະຊຸມ ສະພາແຫ່ງຊາດ ສະບັບເລກທີ 075/ສພຍ, 076/ສພຊ ກໍ່ຄື ດຳລັດ ຂອງ ນາຍົກລັດຖະ

ມົນຕີ ສະບັບເລກທີ 397/ນຍ ເປັນຕົ້ນແມ່ນ ສືບຕໍ່ເຮັດໃຫ້ ລວມຍອດ ຜະລິດຕະພັນ ກະສິກຳ ແລະ ປ່າໄມ້ ຂະຫຍາຍ ຕົວ ໃນລະດັບ 2,8% ຂຶ້ນໄປກວມເອົາປະມານ 15,73% ຂອງ ໂຄງປະກອບເສດຖະກິດ ແຫ່ງຊາດ, ປະກອບສ່ວນໃຫ້ GDP ຂະຫຍາຍຕົວ ບໍ່ໃຫ້ຫຼຸດ 7%, ຊຶ່ງສູ້ຊົນຜະລິດເຂົ້າໃຫ້ໄດ້ 4,2 ລ້ານໂຕນ, ກາເຟ ໃຫ້ໄດ້ 137.500 ໂຕນ, ສາລີອາຫານສັດ ໃຫ້ໄດ້ 1.255.200 ໂຕນ. ອ້ອຍ ໃຫ້ໄດ້ 2.069.200 ໂຕນ. ຢາສູບ 71.500 ໂຕນ, ມັນຕົ້ນ 2.416.000 ໂຕນ, ສືບຕໍ່ສຸມໃສ່ ແກ້ໄຂຄອບຄົວທຸກຍາກ ໃຫ້ໄດ້ 4.833 ຄອບຄົວ; ແກ້ໄຂ ບ້ານທຸກ ຍາກ ໃຫ້ໄດ້ 220 ບ້ານ, ແກ້ໄຂ ເມືອງທຸກຍາກ ໃຫ້ໄດ້ 2 ເມືອງ; ສ້າງບ້ານພັດທະນາ ໃຫ້ໄດ້ 100 ບ້ານ, ສ້າງບ້ານ ໃຫຍ່ ໃຫ້ກາຍເປັນຕົວເມືອງນ້ອຍ ໃນຊົນນະບົດ ໃຫ້ໄດ້ ແຂວງລະ 2-3 ບ້ານ; ຈັດສັນພູມລຳເນົາຄົງທີ່ ແລະ ບ່ອນທຳ ມາຫາກິນ ຖາວອນ ໃຫ້ປະຊາຊົນ ໃຫ້ໄດ້ 163 ບ້ານ ແລະ ນຳສະເໜີ ປ່າສະຫງວນ ແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ປ່າສະຫງວນ ແຫ່ງຊາດ ນ້ຳແອດ-ພູເລີຍ ຂຶ້ນເປັນອຸທິຍານແຫ່ງຊາດ. ຂະແໜງ ກະສິກຳ ແລະ ປ່າໄມ້ ໄດ້ສຸມທຸກກຳລັງ ແຮງ ໃນການຊຸກຍູ້ ສົ່ງເສີມ ການຜະລິດ ຢ່າງຕັ້ງໜ້າ ແລະ ສາມາດຍາດໄດ້ ຜົນສຳເລັດທີ່ສຳຄັນ ໂດຍສະເພາະ ແມ່ນ ຄາດຄະເນການຂະຫຍາຍຕົວ ຂອງ ຂະແໜງ ກະສິກຳ ແລະ ປ່າໄມ້ ຢູ່ໃນລະດັບ 2,5%, ກວມ 15,7% ຂອງ ໂຄງ ປະກອບເສດຖະກິດແຫ່ງຊາດ ຊຶ່ງສະແດງອອກ ໃນການຜະລິດແຕ່ລະດ້ານດັ່ງຕໍ່ໄປນີ້.

## II. ການຈັດຕັ້ງປະຕິບັດແຕ່ລະເສົາຄ້ຳ:

### 1. <u>ເສົາຄ້ຳທີໜຶ່ງ: ກະສິກຳ.</u>

### 1.1 ແຜນງານຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ.

#### 1.1.1 ແຜນດຳເນີນງານຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ.

ການຜະລິດສະບຽງອາຫານ ພວກເຮົາໄດ້ ສຸມທຸກກຳລັງແຮງ ໃນການຊຸກຍູ້ ຫັນການຜະລິດ ໄປສູ່ ອຸດສະຫະກຳ ແລະ ທັນສະໄໝ ເປັນກ້າວໆ ແລະ ໄດ້ກຳນົດພື້ນທີ່ກ້ວາງ ເປັນຈຸດສຸມ ເພື່ອນຳເອົາກົນຈັກ ແລະ ນຳໃຊ້ ເຕັກນິກ-ເຕັກໂນໂລຊີໃໝ່ ເຂົ້າໃສ່ ການຜະລິດ ແນ່ໃສ່ ຍົກຜະລິດຕະພາບ ແລະ ຫຼຸດຕົ້ນທຶນ ການຜະລິດ ໂດຍສະເພາະ ການ ຜະລິດເຂົ້າ ປີ 2018 ສາມາດປະຕິບັດໄດ້ທັງໝົດ ໃນເນື້ອທີ່ 848.173 ເຮັກຕາ, ຜົນຜະລິດ 3,6 ລ້ານໂຕນ ຫຼື ເທົ່າ ກັບ 86% ຂອງແຜນການປີ (4,2 ລ້ານໂຕນ) ໃນນັ້ນ ເຂົ້ານາແຊງ 76.570 ເຮັກຕາ, ຜົນຜະລິດ ປະມານ 403.100 ໂຕນ, ເທົ່າກັບ 85% ຂອງແຜນການ (475.600 ໂຕນ), ເຂົ້ານາປີ 693.697 ເຮັກຕາ ຜົນຜະລິດ 3,02 ລ້ານກວ່າ ໂຕນບັນລຸ 84,5% ຂອງແຜນການການ (3,55 ລ້ານໂຕນ) ແລະ ເຂົ້າໄຮ່ 79.578 ເຮັກຕາ ຜົນຜະລິດ 158.900 ກວ່າໂຕນ.

ສາເຫດທີ່ເຮັດໃຫ້ ການຜະລິດເຂົ້າບໍ່ບັນລຸຕາມຄາດໝາຍ ເນື່ອງຈາກວ່າ <u>ການຜະລິດ ເຂົ້ານາແຊງ ບໍ່ບັນລຸ ຕາມ ຄາດໝາຍ</u> ຍ້ອນວ່າ 1) ປະຊາຊົນ ມີເຂົ້າ ຈາກການຜະລິດ ເຂົ້ານາປີ ແຮໄວ້ ພຽງພໍ ສຳລັບບໍລິໂພກ ພາຍໃນ ຄອບຄົວ ຈຶ່ງຫັນໄປ ປູກພືດອື່ນ ທີ່ມີເສດຖະກິດ ດີກວ່າ ການປູກເຂົ້າ, 2). ລາຄາເຂົ້າ ມີການເໜັງຕີງ ຂຶ້ນລົງ; ແຕ່ກົງກັນຂ້າມ ຕົ້ນທຶນ ການຜະລິດ ເຂົ້ານາແຊງ ແມ່ນສູງ ເຊັ່ນ: ກະແສໄຟຟ້າ, ແຮງງານ, ແນວພັນ, ຝຸ່ນ-ປຸ໋ຍ ແລະ ອື່ນໆ ມີລາຄາສູງ ສະເລ່ຍ ປະມານ 8.000.000 - 10.000.000 ກີບ ຕໍ່ເຮັກຕາ, ທຽບໃສ່ ລາຄາ ຂາຍຜົນຜະລິດ ທີ່ໄດ້ ແມ່ນ ຜົນກຳ ໄລ ບໍ່ເຖິງ 30%; 3) ບາງເຂດ ຂາດແຮງງານ ໃນການຜະລິດ ກະສິກຳ ເນື່ອງຈາກວ່າ ແຮງງານໄດ້ມີການເຄື່ອນຍ້າຍ ໄປເຮັດວຽກ ໃນຕົວເມືອງ. ເຖິງແມ່ນວ່າ ການຜະລິດເຂົ້າ ນາແຊງ ຈະບໍ່ໄດ້ຕາມຄາດໝາຍ ທີ່ວາງໄວ້ກໍ່ຕາມ ແຕ່ຖ້າເບິ່ງ ໃນການການຜະລິດ ໃນເຂດ ຊົນລະປະທານ ແມ່ນ ບັນລຸ ຕາມຄາດໝາຍ ເພາະພື້ນທີ່ ການຜະລິດ ສ່ວນໜຶ່ງ ແມ່ນ ຫັນໄປປູກພືຜັກ ທີ່ມີມູນຄ່າສູງກວ່າ ການຜະລິດເຂົ້າ. <u>ການຜະລິດເຂົ້ານາປີ</u> 2018 ໄດ້ຮັບຜົນກະທົບ ຈາກໄພທຳມະ ຊາດ ເຖິງ 119.600 ກວ່າເຮັກຕາ, ຊຶ່ງເຮັດເນື້ອທີ່ປູກເຂົ້ານາປີ ເສຍຫາຍ 90.670 ເຮັກຕາ ແລະ <u>ເຂົ້າໄຮ່ ເສຍຫາຍ</u> 7.500 ກວ່າເຮັກຕາ ເຮັດໃຫ້ຜົນຜະລິດເຂົ້າເສຍຫາຍທັງໝົດປະມານ 500.000 ໂຕນ. ເຖິງຢ່າງໃດກໍ່ຕາມ ພວກເຮົາ ກໍ່ສາມາດຄ້ຳປະກັນ ການສະໜອງເຂົ້າ ເພື່ອການບໍລິໂພກພາຍໃນ ແລະ ຮັກສາໄດ້ຄວາມສະຫງົບ ກໍ່ຄືການເໜັງຕີງ ຂອງລາຄາເຂົ້າ ແມ່ນ ຢູ່ໃນເກນທີ່ຄວບຄຸມໄດ້.

ການປູກພືດສະບຽງຕ່າງໆ ເປັນຕົ້ນແມ່ນເລັ່ງໃສ່ ພືດທີ່ຊົມໃຊ້ ເປັນສະບຽງອາຫານຫຼັກ, ຕິດພັນ ກັບການຈັດຕັ້ງ ຜັນຂະຫຍາຍ ຍຸດທະສາດ ໂພຊະນາການແຫ່ງຊາດ, ໂດຍສະເພາະ ແມ່ນ 4 ມາດຕະການ ທີ່ກະຊວງ ກະສິກຳ ແລະ ປ່າໄມ້ ຮັບຜິດຊອບ, ຜ່ານການຈັດຕັ້ງປະຕິບັດ ເຫັນວ່າມີການຂະຫຍາຍຕົວດີພໍສົມຄວນ ເຊັ່ນ: ສາລີຫວານ ປະຕິບັດ ໄດ້ 249.050 ໂຕນ, ເຜືອກມັນຕ່າງໆ 292.795 ໂຕນ, ໝາກໄມ້ຕ່າງໆ ຜົນຜະລິດ 1.639.270 ໂຕນ ແລະ ຜັກ ຕ່າງໆ 1.843.180 ໂຕນ.

ດ້ານການລ້ຽງສັດ ແລະ ການປະມົງ ໄດ້ມີຂະຫຍາຍຕົວດີພໍສົມຄວນ, ປະຈຸບັນຝູງສັດທົ່ວ ປະເທດ ທັງໝົດມີ: ຄວາຍ 1,20 ລ້ານໂຕ, ງົວ 2,04 ລ້ານໂຕ, ໝູ 3,82 ລ້ານໂຕ, ແກະ/ແບ້ 0,62 ລ້ານໂຕ ແລະ ສັດປີກ 39,21 ລ້ານໂຕ. ການຜະລິດຊີ້ນໄຂ່ ແລະ ປາ ລວມ ໄດ້ປະມານ 416.220 ໂຕນ, ບັນລຸລື່ນແຜນການ 0,7%, (413.300 ໂຕນ); ໃນນັ້ນ, ມີຊີ້ນ 202.252 ໂຕນ, ໄຂ່ 34.770 ໂຕນ ແລະ ປາ 179.200 ໂຕນ (ເປັນປາລ້ຽງ 118.700 ໂຕນ) ແລະ ຜົນຜະລິດ ຈາກການລ້ຽງແບບເປັນຟາມ ປະຕິບັດໄດ້ 76.402 ໂຕນ ກວມເອົາປະມານ 18,35% ຂອງ ຜົນຜະລິດຊີ້ນໄຂ່ ແລະ ປາ ທັງໝົດ (ໃນນັ້ນ, ເປັນຊີ້ນໝູ 33.450 ໂຕນ, ງົວ 194 ໂຕນ, ສັດປີກ 15.448 ໂຕນ, ໄຂ່ 34.770 ໂຕນ ແລະ ປາ 27.300 ໂຕນ).

## 1.2 ແຜນງານ ຜະລິດ ກະສິກຳ ແລະ ປ່າໄມ້ ເປັນສິນຄ້າ:

### 1.2.1 ແຜນດຳເນີນງານ ຜະລິດ ກະສິກຳ ແລະ ປ່າໄມ້ ເປັນສິນຄ້າ.

ສຳລັບ ການສົ່ງເສີມ ການຜະລິດພືດ ເປັນສິນຄ້າ ແມ່ນໄດ້ເອົາໃຈໃສ່ ຜະລິດພືດເປັນສິນຄ້າ ທີ່ສະພາແຫ່ງຊາດ ຮັບຮອງ ເຊັ່ນ: ສາລີແຂງ 732.630 ໂຕນ ບັນລຸ 58% ຂອງ ແຜນການປີ, ທຽບໃສ່ປີຜ່ານມາ ເຫັນວ່າມີທ່າອ່ຽງຫຼຸດລົງ. ກາເຟ ປະຕິບັດໄດ້ 154.435 ໂຕນ, ປະຕິບັດ ລື່ນແຜນການ 13%, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 2%. ມັນຕົ້ນ ປະຕິບັດໄດ້ 71.010 ເຮັກຕາ, ຜົນຜະລິດ 2.279.00 ກວ່າໂຕນ, ປະຕິບັດ 94% ຂອງ ແຜນການ, ຖ້າທຽບໃສ່ ປີຜ່ານມາ ເພີ່ມຂຶ້ນ 9%. ນອກນັ້ນ ຍັງໄດ້ເອົາໃຈໃສ່ ຜະລິດພືດສິນຄ້າ ທີ່ມີທ່າແຮງ ຕາມແຕ່ລະທ້ອງຖິ່ນ ເປັນຕົ້ນ ແມ່ນ: ຢາສູບ 54.000 ກວ່າໂຕນ, ຖົ່ວເຫຼືອງ 8.380 ໂຕນ, ຖົ່ວດິນ 48.885 ໂຕນ, ຖົ່ວຂຽວ 4.175 ໂຕນ, ຖົ່ວອື່ນໆ 3.125 ກວ່າໂຕນ. ຜະລິດຕະພັນ ດັ່ງກ່າວ ແມ່ນ ປຸງແຕ່ງ ຢູ່ພາຍໃນ ຈຳນວນໜຶ່ງ ແລະ ສົ່ງອອກ ເປັນວັດຖຸດິບ ໃຫ້ປະເທດ ອ້ອມຂ້າງ, ເປັນຕົ້ນ ແມ່ນ ຫວຽດນາມ, ສປ ຈີນ ແລະ ໄທ.

ການສົ່ງອອກ ຜົນຜະລິດ ກະສິກຳ ທີ່ເປັນທາງການ ໂດຍຜ່ານດ່ານສາກົນ ໄດ້ທັງໝົດ 689,76 ລ້ານໂດລາໃນນັ້ນ ປະເພດເຂົ້າ 17,41 ລ້ານໂດລາ, ປະເພດກາເຟ 69,90 ລ້ານໂດລາ, ໝາກກ້ວຍ 209,48 ລ້ານໂດລາ, ຢາງພາລາ 152,18 ລ້ານໂດລາ, ມັນຕົ້ນ 45,67 ລ້ານໂດລາ, ສາລີ 62,52 ລ້ານໂດລາ ແລະ ອື່ນໆ) ແລະ ພືດອື່ນໆ. ພ້ອມດຽວກັນນັ້ນ ກໍ່ໄດ້ຕິດຕາມ, ຊຸກຍູ້ ການສົ່ງເຂົ້າ ອອກໄປ ສປ ຈີນ ຕາມ ໂກຕາ 20.000 ໂຕນ ແມ່ນ ສົ່ງອອກ ແລ້ວ 18.500 ໂຕນ ເທົ່າກັບ 92,5% ຂອງແຜນການ ແລະ ຍັງສືບຕໍ່ສົ່ງອອກຢ່າງຕໍ່ເນື່ອງ ຄາດວ່າຈະບັນລຸຕາມໂກຕາ ໃນຕົ້ນປີ 2019. ພ້ອມດຽວກັນນັ້ນ ກໍ່ໄດ້ຕິດຕາມ ກວດກາການສົ່ງ ອອກຜົນຜະລິດກະສິກຳ ເປັນຕົ້ນແມ່ນ ໝາກໂມ, ໝາກອຶ, ສາລີຫວານ, ໝາກຖົ່ວຝັກຍາວ ເປັນຕົ້ນ. ຄຽງຄູ່ກັບນັ້ນ ກໍ່ໄດ້ຕິດຕາມ ການນຳເຂົ້າພືດແລະ ຜະລິດຕະພັນພືດ ທີ່ຜ່ານດ່ານກັກກັນພືດສາກົນ ທົ່ວປະເທດ ສັງລວມມູນຄ່ານຳເຂົ້າທັງໝົດ 58,59 ລ້າໂດລາ ໃນນັ້ນ ປະເພດເຂົ້າ 17,48 ລ້ານໂດລາ, ປະເພດພືດອຸດສະຫະກຳ 9,9 ລ້ານໂດລາ, ປະເພດພືດຜັກ 3,8 ລ້ານໂດລາ, ປະເພດໝາກໄມ້ 3 ກວ່າໂດລາ, ປະເພດດອກໄມ້ ແລະ ເບ້ຍໄມ້ 5,37 ລ້ານໂດລາ.

ການລ້ຽງສັດ ແລະ ການປະມົງ ກໍ່ມີການຂະຫຍາຍຕົວດີເຊັ່ນດຽວກັນ ໂດຍໄດ້ຫັນລ້ຽງເປັນຟາມ, ລ້ຽງເປັນໜອງ ເປັນກະຊັງ ຊຶ່ງກໍ່ຖືເປັນ ການຫັນໄປສູ່ ການຜະລິດແບບ ອຸດສະຫະກຳ ແລະ ທັນສະໄໝ ສ່ວນໃຫຍ່ ແມ່ນ ເລັ່ງໃສ່ ການລ້ຽງສັດໃຫຍ່ (ງົວ-ຄວາຍ) ເພື່ອສົ່ງອອກ ຕ່າງປະເທດ, ສ່ວນການລ້ຽງສັດນ້ອຍ ແລະ ປາແມ່ນ ເລັ່ງໃສ່ການລ້ຽງ ຮັບໃຊ້ພາຍໃນ, ໂດຍສະເພາະ ແມ່ນ ການລ້ຽງສັດ ແບບເປັນຟາມ ອອ້ມຕົວເມືອງໃຫຍ່ຕ່າງໆ ມາຮອດປະຈຸບັນຈຳນວນຟາມທົ່ວປະເທດ ມີຄື: ມີຟາມລ້ຽງຄວາຍ 6 ຟາມ, ມີຄວາຍ 723 ໂຕ (ໃນນີ້ ເປັນຟາມຄວາຍນົມ 1 ຟາມ), ງົວ 248 ຟາມ ມີງົວ 39.450 ໂຕ, ໝູ 590 ຟາມ ມີໝູ 321.370 ໂຕ, ແບ້ 72 ຟາມ ມີແບ້ 5.450 ໂຕ, ໄກ່ພັນໄຂ່ 274 ຟາມ ມີໄກ່ 1.413.640 ໂຕ, ໄກ່ພັນຊີ້ນ 101 ຟາມ ມີໄກ່ 1.585.300 ໂຕ, ເປັດພັນໄຂ່ 78 ຟາມ ມີເປັດ 102.310 ໂຕ, ເປັດພັນຊີ້ນ 19 ຟາມ, ມີເປັດ 33.860 ໂຕ, ນົກກະທາ 19 ຟາມ ມີນົກກະທາ 192.582 ໂຕ. ການລ້ຽງປາໃນໜອງຂອງຄອບຄົວ ແລະ ຟາມເອກກະຊົນ ກໍ່ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ກາຍເປັນ ສິນຄ້າບໍລິການຂາຍກັບທີ່ ແລະ ບໍລິການນັກທ່ອງທ່ຽວ, ຊຶ່ງສາມາດສະໜອງຜົນຜະລິດໄດ້ຫຼາຍກວ່າ 118.700 ໂຕນ ພົ້ນເດັ່ນແມ່ນການລ້ຽງປາໃນກະຊັງລຽບຕາມແມ່ນ້ຳຂອງ, ສາຂາ ແລະ ອ່າງເກັບນ້ຳ ລວມມີ ປະມານ 7.480 ກະຊັງ ຫຼາຍກວ່າໝູ່ຢູ່ ນະຄອນຫຼວງວຽງຈັນ ມີປະມານ 3.300 ກະຊັງ, ແຂວງ ສະຫວັນນະເຂດ 600 ກະຊັງ, ຈຳປາສັກ 1.700 ກະຊັງ. ນອກຈາກນີ້, ຍັງມີຢູ່ແຂວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ ແລະ ແຂວງອື່ນໆ ເຊິ່ງມີການລ້ຽງຫຼາຍກວ່າ 1.800 ກະຊັງ. ພ້ອມດຽວກັນນັ້ນ ກໍ່ໄດ້ລົງຕິດຕາມ ກວດກາດ້ານສຸຂານາໄມສັດຢູ່ໂຮງງານຂ້າສັດ ເພື່ອຮັບປະກັນ ການຈຳໜ່

າຍຊີ້ນອອກສູ່ສັງຄົມ, ໄດ້ຕິດຕາມການແລກປ່ຽນຊື້-ຂາຍສັດ ໃຫຍ່ງົວຄວາຍ ຕາມຊາຍແດນ ລາວ-ຈີນ ແລະ ລາວ-ຫວຽດນາມ ປະຕິບັດໄດ້ ຫຼາຍກວ່າ 96.300 ໂຕ (ໃນນັ້ນ ມີຄວາຍປະມານ 14.300 ໂຕ ແລະ ງົວ 82.000 ໂຕ).

ພ້ອມກັນນັ້ນ ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດບາງໜ້າວຽກ ທີ່ສຳຄັນ ໃນການຊຸກຍູ້ສົ່ງເສີມ ການຜະລິດ ສັດເປັນສິນຄ້າ ໃຫ້ເປັນລະບົບເຊັ່ນ: ການການສຳຫຼວດກຳນົດເຂດການລ້ຽງສັດ ແລະ ລ້ຽງປາ, ການປັບປຸງຂະຫຍາຍພັນສັດ ແລະ ພັນປາ, ດ້ານການຜະລິດອາຫານສັດອາຫານປາ ແລະ ການປູກພືດອາຫານສັດ, ການສະໜອງຢາສັດຕະວະແພດ ແລະ ຢາກັນພະຍາດສັດ, ການປັບປຸງການວິໄຈພະຍາດສັດ, ການປັບປຸງໂຮງຂ້າສັດ ແລະ ບ່ອນປຸງແຕ່ງຜະລິດຕະພັນຊີ້ນ ແລະ ສັດນ້ຳ, ການກໍ່ສ້າງ ແລະ ພັດທະນາບຸກຄະລາກອນ.

### 1.3 ບັນດາ 4 ແຜນດຳເນີນງານ ສະໜັບສະໜູນໃຫ້ 2 ແຜນງານຫຼັກ.

#### 1.3.1 ແຜນດຳເນີນງານ ຄຸ້ມຄອງ ແລະ ພັດທະນາ ດິນ ກະສິກຳ:

**1) ວຽກງານສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ**:

① ສຳຫຼວດດິນ ເພື່ອປັບປຸງຂໍ້ມູນແຜນທີ່ດິນລະດັບແຂວງຄື: ຜົ້ງສາ ລີ, ຫົວພັນ, ບໍ່ແກ້ວ, ອຸດົມໄຊ, ຫຼວງນ້ຳທາ, ຫຼວງພະບາງ, ໄຊຍະບູລີ, ຈຳປາສັກ, ເຊກອງ, ສາລະວັນ ແລະ ອັດຕະປື.

② ສຳລັບວຽກງານ ການສຳຫຼວດ ແລະ ວາງແຜນ ນຳໃຊ້ທີ່ດິນ ກະສິກຳ ແມ່ນ ໄດ້ ສຳເລັດ ການລົງສຳຫຼວດທີ່ດິນກະສິກຳ ລະດັບມະຫາພາກ (ລະດັບແຂວງ) ຈຳນວນ 1 ແຂວງ ຄື: ແຂວງບໍລິຄຳໄຊ ມີເນື້ອທີ່ກະສິກຳ ທັງໝົດ 211.641 ເຮັກຕາ; ລົງສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ ລະດັບເມືອງ ຈຳນວນ 2 ເມືອງ ແຂວງ ຄື: ເມືອງແບ່ງ ແລະ ເມືອງຮຸນ ແຂວງອຸດົມໄຊ. ມີເນື້ອທີ່ກະສິກຳທັງໝົດ 22.311 ເຮັກຕາ; ສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ ຂັ້ນກຸ່ມບ້ານ ມາດຕາສ່ວນ 1/10.000 ຈຳນວນ 4 ກຸ່ມບ້ານຄື: ກຸ່ມບ້ານຜາສັງ ເມືອງ ເຟືອງ ແຂວງວຽງຈັນ, ຈຸດສຸມລັງຄັງວັງມະນີ ເມືອງບົວລະພາ ແຂວງຄຳມ່ວນ, ຈຸດສຸມປ່າໝາມ ເມືອງມະຫາໄຊ ແຂວງຄຳມ່ວນ ແລະ ກຸ່ມບ້ານບໍເຍຍ ເມືອງໜອງແຮດ ຊຽງຂວາງ. ມີເນື້ອທີ່ກະສິກຳທັງໝົດ 13.814 ເຮັກຕາ; ຈັດສັນ ແລະ ວາງແຜນຄຸ້ມຄອງທີ່ດິນກະສິກຳຂັ້ນບ້ານ ຈຳນວນ 39 ບ້ານ, 9 ເມືອງ, 3 ແຂວງ. (ໂຄງການຮ່ວມມືລາວເຢຍລະມັນ GIZ). ສຳຫຼວດຂອບເຂດ ແລະ ປະເມີນຄຸນນະພາບດິນໃນທີ່ດິນນາເຂດຊົນລະປະທານ ມາດຕາສ່ວນ 1/5,000 (ໂຄງການຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ) 7 ເມືອງ ຢູ່ 7 ແຂວງ (ແຂວງ ຫຼວງນ້ຳທາ: ເມືອງ ຫຼວງນ້ຳທາ; ແຂວງບໍ່ແກ້ວ: ເມືອງ ຫ້ວຍຊາຍ; ແຂວງ ໄຊຍະບູລີ: ເມືອງ ໄຊຍະບູລີ; ແຂວງ ວຽງຈັນ: ເມືອງ ທຸລະຄົມ; ນະຄອນຫຼວງ: ເມືອງຫາດຊາຍຟອງ; ແຂວງ ບໍລິຄຳໄຊ: ເມືອງ ປາກຊັນ; ແຂວງ ຈຳປາສັກ: ເມືອງ ຊະນະສົມບູນ). ມີເນື້ອທີ່ດິນນາທັງໝົດ 56.011 ເຮັກຕາ, ມີ 486 ບ້ານ, (ເນື້ອທີ່ດິນນາໃນຊົນລະປະທານ ແລະ ໄດ້ປະເມີນຄຸນນະພາບດິນນາພ້ອມ 26.505 ເຮັກຕາ, ເນື້ອທີ່ດິນນານອກເຂດຊົນລະປະທານ 29.506).

③ ສ້າງແຜນທີ່ 10 ຊະນິດແຜນທີ່ຄື: (1) ແຜນທີ່ຂອບເຂດດິນນາຂອງເມືອງ, (2) ແຜນທີ່ຂອບເຂດດິນນາຢູ່ໃນເຂດທົດຊົນລະປະທານຂອງເມືອງ, (3)ແຜນທີ່ ລະດັບທາດອາຫານໃນດິນນາ N, (4) ແຜນທີ່ ລະດັບທາດອາຫານໃນດິນນາ P, (5) ແຜນທີ່ ລະດັບທາດອາຫານໃນດິນນາ K, (6)ແຜນທີ່ລະ ດັບທາດອິນຊີວັດຖຸ OM, (7) ແຜນທີ່ລະດັບປະຕິກິລິຍາຂອງດິນ pH, (8) ແຜນທີ່ຄວາມເໝາະສົມຂອງເຂົ້ານາ, (9) ແຜນທີ່ເນື້ອດິນ soil texture, (10) ແຜນທີ່ຄວາມເໝາະສົມສຳລັບພືດຫຼັກໃນລະດູແລ້ງ.

④ ສຳຫຼວດເຄມີດິນກະສິກຳໃນເຂດທົ່ງພຽງນ້ອຍ 2 ທົ່ງພຽງ (1) ທົ່ງພຽງເມືອງນານ ມີເນື້ອທີ່ດິນກະສິກຳ 4.443 ຮຕ, ເນື້ອທີ່ດິນນາ 198 **ເຮັກຕາ** ກວມເອົາ 22 ບ້ານ ແລະ (2) ທົ່ງພຽງເມືອງຊຽງເງິນ ມີເນື້ອທີ່ດິນກະສິກຳ 4.789,93 **ເຮັກຕາ**, ເນື້ອທີ່ດິນນາ 1.318,14 **ເຮັກຕາ** ກວມເອົາ 16 ບ້ານ ແລະ ໄດ້ມອບບົດລາຍງານ ແລະ ແຜນທີ່ຊະນິດຕ່າງໆ ໃຫ້ແຂວງ ແລະ ເມືອງ.

⑤ມອບຮັບ ປັກປ້າຍແຜນທີ່ ແລະ ບົດລາຍງານ ແຜນຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນຂອງບ້ານ ໄດ້ທັງໝົດ 41 ບ້ານ ຄື: ແຂວງຫຼວງພະບາງ ເມືອງຈອມເພັດ ມີ 8 ບ້ານ, ເມືອງ ໂພນໄຊ ມີ 17 ບ້ານ; ແຂວງ ຊຽງຂວາງ ເມືອງແປກ ມີ 6 ບ້ານ ແລະ ແຂວງເຊກອງ ເມືອງລະມາມ ມີ 13 ບ້ານ. ສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ ຂັ້ນບ້ານ ມາດຕາສ່ວນ 1/5.000 ຈຳນວນ 2 ບ້ານຄື: ບ້ານນາແວ່ນ ເມືອງພຽງ ແຂວງໄຊຍະ ແລະ ບ້ານໜອງສິງ ເມືອງຄຳເກີດ ແຂວງບໍລິຄຳໄຊ.

⑥ ບໍລິການ ວິໄຈດິນຮັບໃຊ້ພາກສ່ວນລັດ, ບັນດາໂຄງການຕ່າງໆ ແລະ ສ່ວນບຸກຄົນ ສາມາດມີຜົນສຳເລັດໄດ້ຄື: ວິໄຈທາດອາຫານໃນດິນໄດ້: 398 ຕົວຢ່າງ, ມີ 880 ລາຍການ, ມີຜົນວິໄຈ 23.094 ຜົນວິໄຈ.

**2) ວຽກງານຄຸ້ມຄອງ ການນຳໃຊ້ທີ່ດິນກະສິກຳ.**

ສຳເລັດ ວຽກຂຶ້ນສຳມະໂນດິນນາໃນເຂດຊົນລະປະທານ ໄດ້ 6 ເມືອງ 6 ແຂວງ ຄື: ເມືອງຫ້ວຍຊາຍ ແຂວງບໍ່ແກ້ວ, ເມືອງຫຼວງນ້ຳທາ ແຂວງຫຼວງນ້ຳທາ, ເມືອງໄຊຍະບູລີ ແຂວງໄຊຍະບູລີ, ເມືອງທຸລະຄົມ ແຂວງວຽງຈັນ, ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ, ເມືອງປາກຊັນ ແຂວງບໍລິຄຳໄຊ. ໄດ້ທັງໝົດ 178 ບ້ານ, ຈຳນວນ 9.885 ຄອບ ຄົວ, ອອກປື້ມສຳມະໂນທີ່ດິນກະສິກຳ ໄດ້ຈຳນວນ 9.885 ຫົວ, ຈຳນວນ 12.829 ຕອນດິນ, ມີເນື້ອທີ່ນາເຂດຊົນລະ ປະທານຈຳນວນ 11.560 ເຮັກຕາ.

ສຳເລັດ ການຂຶ້ນສຳມະໂນທີ່ດິນກະສິກຳ ແລະ ສ້າງລະບຽບຄຸ້ມຄອງທີ່ດິນກະສິກຳຂັ້ນບ້ານ ໄດ້ຈຳນວນ 10 ບ້ານ 5 ເມືອງຄື: ບ້ານຂວາງ, ບ້ານນາສະຫວ່າງ ເມືອງນາໝໍ້, ບ້ານນໍ້າແຫງ, ບ້ານຫຼັກ 32 ເມືອງໄຊ, ບ້ານຂອນ, ບ້ານນໍ້າຂອງ ເມືອງແບ່ງ, ບ້ານສີບຸນເຮືອງ, ບ້ານຊຽງດີ ເມືອງຮຸນ, ບ້ານໄຊຊະນະ, ບ້ານຫ້ວຍນໍ້າປາ ເມືອງປາກແບ່ງ ແຂວງອຸດົມໄຊ. ຈຳນວນ 4.035 ຄອບຄົວ, ອອກປື້ມສຳມະໂນທີ່ດິນກະສິກຳໄດ້ຈຳນວນ 4.035 ຫົວ, ຈຳນວນ 4.669 ຕອນດິນ, ມີເນື້ອທີ່ທັງໝົດ 4.367,46 ເຮັກຕາ.

ສຳເລັດ ການຂຶ້ນສຳມະໂນດິນກະສິກຳ ທີ່ເປັນບູລິມະສິດ ແລະ ເອກະລັກສະເພາະທ້ອງຖິ່ນ ລວມທັງໝົດ 2 ບ້ານຄື: ບ້ານໂກງຕາຢູນ ຈຳນວນ 324 ຄອບຄົວ, ບ້ານຫຼັກຂາວ ຈຳນວນ 127 ຄອບຄົວ, ລວມທັງໝົດ ມີ 451 ຄອບຄົວ, ອອກປື້ມສຳມະໂນທີ່ດິນກະສິກຳໄດ້ຈຳນວນ 451 ຫົວ, ທີ່ດິນກະສິກຳ 1.120 ຕອນ, ມີເນື້ອທີ່ທັງໝົດ 1.305,59 ເຮັກຕາ, ມີເນື້ອທີ່ປູກກາເຟ 914 ຕອນ, ມີເນື້ອທີ່ 1.083,3 ເຮັກຕາ ແລະ ສ້າງລະບຽບຄຸ້ມຄອງທີ່ດິນກະສິກຳຂັ້ນບ້ານ.

ສຳເລັດ ການຈັດຝຶກອົບຮົມ ໃຫ້ພະນັກງານ (ເມືອງ ແລະ ແຂວງ) ຢູ່ 4 ແຂວງ ພາກເໜືອ ວ່າດ້ວຍ ຂັ້ນຕອນ, ວິທີການ ຂຶ້ນສຳມະໂນ, ການອອກໃບຢັ້ງຢືນ, ແລະ ການອອກໃບພັດທະນາທີ່ດິນກະສິກຳ ແລະ ການນຳໃຊ້ກ້ອງສຳຫຼວດ RTK.(ໂຄງການພັດທະນາໂຄງລ່າງຊົນນະບົດ ພາກເໜືອ).

**3) ວຽກງານພັດທະນາທີ່ດິນ ແລະ ຄຸ້ມຄອງການນຳໃຊ້ຝຸ່ນ.**

ວຽກງານພັດທະນາທີ່ດິນກະສິກຳ: ສຳເລັດ ການຈັດຕັ້ງກຸ່ມເພື່ອ ພັດທະນາທີ່ດິນລ້ຽງສັດ ໄດ້ 540 ຄຄ ມີເນື້ອທີ່ປູກຫຍ້າທັງໝົດ 185 ຮຕ, ລ້ອມຮົ້ວ ພື້ນທີ່ເຂດລ້ຽງສັດ ໄດ້ 60.000 ຮຕ, ສ້າງອ່າງເກັບກັກນ້ຳໄດ້ 6 ແຫ່ງ, ປູກຖົ່ວແຮ ປັບປຸງດິນ ໄດ້ 120 ຮຕ, ຈັດຕັ້ງກຸ່ມປູກໝາກແໜ່ງ ແລະ ປ້ອງກັນດິນເຊາະເຈື່ອນໄດ້ 320 ຄຄ ເນື້ອທີ່ 6 ຮຕ, ປູກພືດລະດູແລ້ງປັບປຸງດິນນາ ໄດ້ 10 ເຮັກຕາ, ຜະລິດຝຸ່ນອິງຄະທາດ ໄດ້ 15 ໂຕນ, ແລະ ສຳເລັດການຝຶກອົບຮົມ ເຕັກນິກ ການປັບປຸງດິນ ແລະ ເຮັດຝຸ່ນບົ່ມ ໄດ້ 40 ຄົນ ມີ 5ບ້ານ ຂອງແຂວງ ຫົວພັນ (ໂຄງການ EFICAS). ນອກ ຈາກນັ້ນ ຍັງໄດ້ ເຮັດທົດລອງ/ສາທິດ ປູກພືດປະສົມປະສານ ລະຫວ່າງ ສາລີ ແລະ ພືດຕະກຸນຖົ່ວ ເພື່ອຈຸດ ປະສົງ ການປັບປຸງດິນ ແລະ ຍົກສະມັດຕະພາບ.

ວຽກງານຄົ້ນຄວ້າ ແລະ ຄຸ້ມຄອງການນຳໃຊ້ຝຸ່ນ: ສຳເລັດການສ້າງຊາວນາຕົວແບບປັບປຸງດິນນາຢູ່ 7 ເມືອງ 7 ແຂວງ: ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ, ເມືອງທຸລະຄົມ ຂ ວຽງຈັນ, ເມືອງໄຊຍະບູລີ ຂ ໄຊຍະບູລີ, ເມືອງຫ້ວຍຊາຍ ຂ ບໍ່ແກ້ວ, ເມືອງຫຼວງນໍ້າທາ ຂ ຫຼວງນໍ້າທາ, ເມືອງປາກຊັນ ຂ ບໍລິຄຳໄຊ, ແລະ ເມືອງຊະນະສົມບູນ ຂ ຈຳປາສັກ. ໄດ້ 7 ກຸ່ມ, 70 ຄອບ ຄົວ, 7 ບ້ານ ແລະ ສ້າງອາສາສະໝັກໝໍດິນຂັ້ນບ້ານໄດ້ 70 ຄົນ, ມີເນື້ອທີ່ 35 ເຮັກຕາ. ຜະລິດຝຸ່ນອິງຄະ ທາດໄດ້ທັງໝົດ 80100 ໂຕນ, ສະເລ່ຍຕໍ່ກຸ່ມໄດ້ 1,2-1,5 ໂຕນ. ເຮັດທົດລອງ ນຳໃຊ້ຝຸ່ນບົ່ມອິງຄະທາດ ໃນການປູກຜັກກະລຳປີ ເພື່ອຫຼຸດຜ່ອນການນຳໃຊ້ຝຸ່ນເຄມີ ຢູ່ເຂດພູພຽງບໍລະເວນ ຈຳນວນ 3 ບ້ານ ກວມເອົາ 3 ເມືອງ (ເລົ່າງາມ, ທ່າແຕງ, ປາກຊ່ອງ) ພ້ອມກັນນັ້ນ ກໍ່ໄດ້ ເຮັດທົດສອບ ແລະ ຕິດຕາມກວດກາປະສິດຕິພາບຂອງຝຸ່ນ ໂປຕາສ, ເຮັດທົດລອງການນຳໃຊ້ນໍ້າສົ້ມ (wood venigar) ຈາກການເຜົາຖ່ານ (ໄມ້ຕິ້ວ)ເພື່ອປ້ອງກັນແມງໄມ້, ການຜະລິດຝຸ່ນອິງຄະທາດຈາກສິ່ງເສດເຫຼືອກະສິກຳໄດ້ 2.300 ກິໂລ, ທົດລອງຝຸ່ນອິງຄະທາດໃນນາເຂົ້າລະດູຝົນ ພື້ນທີ່ສູນພັດທະນາທີ່ດິນ ແລະ ຄຸ້ມຄອງການນຳໃຊ້ຝຸ່ນ, ທົດລອງຍົກສະມັດຕະພາບເຂົ້າດ້ວຍຝຸ່ນອິງຄະທາດ ປະສົມເຄມີ ຢູ່ບ້ານ ໂພນໂຮງນາຝ້າຍ, ການທົດລອງຝຸ່ນເຄມີຕໍ່ກັບການປູກມັນຕົ້ນ ແລະ ສາລີຢູ່ບ້ານ ແສນດິນ, ເມືອງ ນາຊາຍທອງ, ແຂວງ ວຽງຈັນ. ກຳລັງປັບດິນເພື່ອກຽມຕັ້ງເຮືອນຮົ່ມ. ລົງຕິດຕາມເກັບກຳຂໍ້ມູນການທົດລອງ

ຮ່ວມກັບຊ່ຽວຊານຈາກ ຫວຽດນາມ ຢູ່ບ້ານເປົ້າໝາຍ 2 ບ້ານ ໃນ 2 ເມືອງ ສິບ ແລະ ເມືອງ ຊຽງຄໍ້ ແຂວງຫົວພັນ (ໂຄງການປັບປຸງລະບົບການປູກສວາລີຢູ່ເຂດພາກເໜືອຂອງ ສປປລາວ (ACIAR) ຮ່ວມມືລາວ ອົດສະຕຼາລີ.

ສຳເລັດການສ້າງອາສາສະໝັກໝໍດິນໄດ້ 213 ຄົນ, 58 ບ້ານ, 22 ເມືອງ, 12 ແຂວງ ຊຶ່ງໃນນີ້ນອນໃນບ້ານສາມສ້າງ 14 ບ້ານ, ເມືອງສາມສ້າງ 10 ເມືອງ ແລະ ແຂວງ ສາມສ້າງ 9 ແຂວງ ໃນຂອບເຂດທົ່ວປະເທດ. ສຳລັບການສ້າງໝໍດິນທີ່ໄດ້ສ້າງໄວ້ໄລຍະຜ່ານມາ ມີຈຳນວນທັງໝົດ 697 ຄົນ, 240 ບ້ານ. ຊຸກຍູ້ກຸ່ມຊາວນາຕົວແບບໄດ້ 170 ຄອບ ຄົວ, 7 ບ້ານ, ຢູ່ 7 ແຂວງ 7 ເມືອງ, ເນື້ອທີ່ 85 ເຮັກຕາ ເປັນນາສາທິດ, ຜະລິດຝຸ່ນໄດ້ 50,5 ໂຕນ, ຖ້າທຽບໃສ່ແຜນ ການປະຕິບັດໄດ້ 60%, ນອກຈາກນີ້ຍັງໄດ້ສະໜອງວັດຖຸປັດໃຈເປັນຕົ້ນແມ່ນ ຝຸ່ນເຄມີ 126 ເປົາ, ແນວພັນເຂົ້ານາ 2 ໂຕນ, ເຄື່ອງເຜົາແກບ 140 ເຄື່ອງ, ເຄື່ອງຈັກປະສົມຝຸ່ນ 14 ເຄື່ອງ, ຊີມັງ 7 ໂຕນແລະ ສັງກະສີ 210 ແຜ່ນ ເພື່ອເຮັດໂຮງເຮືອນຝຸ່ນ. ສຳເລັດການຈັດສິ່ງພິມຕ່າງໆ ກ່ຽວກັບເຕັກນິກການປັບປຸງບຳລຸງດິນ ເພື່ອແຈກຢາຍໃຫ້ແກ່ການຝຶກອົບຮົມ. ງານວາງສະແດງຕ່າງໆ ແຜ່ນພັບໄດ້ 5 ເລື່ອງ ໄດ້ທັງໝົດ 1.200 ສະບັບ, ພິມໂປສເຕີ 4 ເລື່ອງເພື່ອແຈກຢາຍ ແລະ ວາງສະແດງ ໃນວັນປູກຕົ້ນໄມ້ ວັນທີ່ 1 ມິຖຸນາ 2018 ທີ່ບ້ານຄຳປາແໜ ເມືອງຈຳພອນ ແຂວງສະຫວັນນະເຂດ, ວັນອາຫານໂລກທີ່ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້, ວັນດິນໂລກທີ່ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ.

### 1.3.2 ແຜນດຳເນີນງານ ພັດທະນາ ພື້ນຖານ ໂຄງລ່າງ ກະສິກຳ ແລະ ປ່າໄມ້:

**ດ້ານຊົນລະປະທານ:** ໄດ້ຕິດຕາມການສະໜອງນ້ຳການຜະລິດລະດູແລ້ງ ປີ 2017-2018 ໃນຂອບເຂດທົ່ວປະເທດ ສະໜອງນ້ຳໃຫ້ເນື້ອທີ່ການຜະລິດໄດ້ທັງໝົດ 156.000 ເຮັກຕາ ເທົ່າກັບ 97% ຂອງເນື້ອທີ່ແຜນການ ໃນນັ້ນ ເນື້ອທີ່ປູກເຂົ້ານາແຊງ 90.000 ເຮັກຕາ, ເທົ່າກັບ 95% ຂອງເນື້ອທີ່ແຜນການ ແລະ ເນື້ອທີ່ປູກພືດ ໃນເຂດຊົນລະ ປະທານ 66.000 ເຮັກຕາ. ສຳລັບ ການສະໜອງນ້ຳລະດູຝົນປີ 2018 ລວມເນື້ອທີທັງໝົດ 279.700 ຮຕ,ໃນນັ້ນເນື້ອທີ່ປູກເຂົ້ານາປີ 253.200 ຮຕ, ເນື້ອທີ່ປູກພືດ 26.500 ຮຕ, ຈຳນວນ 15.119 ໂຄງການ.

ສັງລວມ ແຜນສະເໜີຄວາມຕ້ອງການຟື້ນຟູ-ສ້ອມແປງລະບົບຊົນລະປະທານ ທີ່ເກົ່າແກ່ຊຸດໂຊມ ແລະ ບັນດາໂຄງການຊົນລະປະທານ ທີ່ໄດ້ຮັບຜົນກະທົບ ຈາກໄພທຳມະຊາດລະດູຝົນປີ 2018 ໃນຂອບເຂດທົ່ວປະເທດ ມີ 2 ບ້ວງ ຄື:

- **ບ້ວງຟື້ນຟູ-ສ້ອມແປງປົກກະຕິ** ປີ 2019 ແມ່ນໂຄງການທີ່ເກົ່າແກ່ຊຸດໂຊມ ລວມມີ 18 ແຂວງ ຈຳນວນ 351 ໂຄງການ, ເນື້ອທີ່ 25.656 ເຮັກຕາ, ລວມມູນຄ່າ 99 ຕື້ກີບ ບັນດາໂຄງການດັ່ງກ່າວ ແມ່ນທ້ອງຖິ່ນເປັນຜູ້ຂຶ້ນແຜນ ໂດຍຜ່ານສະພາທ້ອງຖິ່ນ ເພື່ອນຳສະໜີຕໍ່ລັດຖະບານອະນຸມັດຈັດຕັ້ງປະຕິບັດຕາມລະບຽບການ.
- **ບ້ວງຟື້ນຟູ-ສ້ອມແປງສຸກເສີນ** ແມ່ນໂຄງການທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ ສະເພາະໂຄງການທີ່ຈະສະໜອງນ້ຳໃຫ້ເນື້ອທີ່ການຜະລິດລະດູແລ້ງ ສົກປີ 2018-2019 ລວມມີ 11 ແຂວງ ມູນຄ່າ 35 ຕື້ກີບ ຈຳນວນ 242 ໂຄງການ, ຄວາມຄືບໜ້າຂອງການຟື້ນຟູ-ສ້ອມແປງມາຮອດປະຈຸບັນນີ້ ແມ່ນ ສຳເລັດ ການຈັດຕັ້ງປະຕິບັດໜ້າວຽກ ສືບຕໍ່ການປະກອບເອກະສານຂໍຖອນງົບປະມານເພື່ອຊຳລະ.

ພ້ອມດຽວກັນນັ້ນ ກໍ່ໄດ້ສັງລວມ ບັນຊີໂຄງການຈັກສູບນ້ຳໄຟຟ້າ ຢູ່ເຂດຈຸດສຸມການຜະລິດ ໂຄງການທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ ລວມມີ 8 ແຂວງ ຈຳນວນ 199 ໂຄງການ ເພື່ອສະເໜີປະຕິບັດນະໂຍບາຍ ຫຼຸດຄ່າກະແສໄຟຟ້າ 50% ໃນລະບົບແຮງດັນ 22 ກິໂລໂວນ ຈາກ 448 ກີບ/ກິໂລວັດ ຍັງເຫຼືອ 224 ກີບ/ກິໂລວັດ ການປະຕິບັດນະໂຍບາຍດັ່ງກ່າວແມ່ນເລີ່ມແຕ່ວັນທີ 1 ມັງກອນ 2019 ຫາ ວັນທີ 1 ມັງກອນ 2020 ຕາມແຈ້ງການຂອງ ກະຊວງພະລັງງານ ແລະ ບໍ່ແຮ່, ສະບັບເລກທີ 2685/ພບ, ລົງວັນ 28 ທັນວາ 2018.

❖ **ວຽກລົງທຶນພາຍໃນ ແລະ ຮ່ວມມືກັບຕ່າງປະເທດ.**

☆ **ວຽກລົງທຶນພາຍໃນ.**

ໂຄງການລົງທຶນພາຍໃນ ມີທັງໝົດ 22 ໂຄງການ, ມູນຄ່າທັງໝົດ 2.765,91 ຕື້ກີບ, ສະເລ່ຍການກໍ່ສ້າງສຳເລັດ 44% ຂອງມູນຄ່າທັງໝົດ ໃນນັ້ນ, ສຳເລັດການກໍ່ສ້າງ 100% ມີ 04 ໂຄງການ, ກຳລັງຈັດຕັ້ງການກໍ່ສ້າງ ມີ

ຄວາມຄືບໜ້າ ສຳເລັດ ຫຼາຍກວ່າ 50% ມີ 07 ໂຄງການ, ໜ້ອຍກວ່າ 50% ມີ 09 ໂຄງການ ແລະ ໂຄງການລົງທຶນພາຍໃນທີ່ໄດ້ເຊັນ MOU ເພື່ອພັດທະນາຊົນລະປະທານ ປະຈຸບັນມີ 10 ບໍລິສັດ, ສຳເລັດການສຶກສາຄວາມເປັນໄປໄດ້ ຈຳນວນ 03 ໂຄງການ.

- ✫ **ວຽກຮ່ວມມືກັບຕ່າງປະເທດ**

ໂຄງການພັດທະນາຊົນລະປະທານທີ່ໄດ້ຮັບການຊ່ວຍເຫຼືອລ້າ ແລະ ກູ້ຢືມມີທັງໝົດ 16 ໂຄງການ, ໃນນັ້ນ ໂຄງການ ການຊ່ວຍເຫຼືອລ້າ 5 ໂຄງການ ມູນຄ່າ 15,1 ລ້ານໂດລາ, ທຶນກູ້ຢືມ 11 ໂຄງການ ມູນຄ່າ 200 ລ້ານໂດລາ, ປະຕິບັດການກໍ່ສ້າງສຳເລັດແລ້ວ 100% ມີ 2 ໂຄງການ, ປະຕິບັດໄດ້ 50% ຂຶ້ນໄປມີ 5 ໂຄງການ, ປະຕິບັດໄດ້ຕໍ່າກວ່າ 50% ລົງມາມີ 9 ໂຄງການ. ນອກນັ້ນ ບັນດາໂຄງການຮ່ວມມືລົງທຶນກັບຕ່າງປະເທດ ທີ່ໄດ້ເຊັນ MOU ເພື່ອພັດທະນາຊົນລະປະທານ ປະຈຸບັນມີ 17 ບໍລິສັດ, ສຳເລັດການສຶກສາຄວາມເປັນໄປໄດ້ ຈຳນວນ 05 ໂຄງການ.

### 1.3.3 ແຜນດຳເນີນງານ ຄົ້ນຄວ້າ-ທົດລອງ ກະສິກຳ ແລະ ປ່າໄມ້:

ການຜະລິດແນວພັນເຂົ້າລຸ້ນ 1 ແລະ ລຸ້ນ 2 ຂອງບັນດາສູນຄົ້ນຄວ້າ ທີ່ຂຶ້ນກັບ ສະຖາບັນ ໄດ້ຈັດຕັ້ງປະຕິບັດຢູ່ 5 ສູນ ທີ່ຂຶ້ນກັບສະຖາບັນ ຜົນຜະລິດແນວພັນເຂົ້າບໍລິສຸດ ໄດ້ ຈຳນວນ 1,02 ໂຕນ, ລຸ້ນ 1 ຜົນຜະລິດໄດ້ 81,84 ໂຕນ ທຽບໃສ່ແຜນປີ 68.2%, ລຸ້ນ 2 ຜົນຜະລິດໄດ້ 722,38 ໂຕນ, ທຽບໃສ່ແຜນປີ 29% ເນື່ອງຈາກວ່າ ມີການປ່ຽນແປງຄວາມຮັບຜິດຊອບຂອງ ສູນສະຖານີ ຜະລິດແນວພັນ ປ່ຽນໄປຜະລິດແນວພັນ ລຸ້ນ 3 ແລະ ຍ້ອນໄດ້ຮັບຜົນກະທົບຈາກນ້ຳຖ້ວມແປງຂະຫຍາຍພັນ ເຮັດໃຫ້ຕົ້ນເຂົ້າຕາຍຈຳນວນໜຶ່ງ. ສ່ວນແນວພັນເຂົ້າລຸ້ນ 3 ແມ່ນ ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ ເປັນຜູ້ຮັບຜິດຊອບ ຜະລິດໄດ້ 1.803,99 ໂຕນ ທຽບໃສ່ແຜນໄດ້ 64%.

ປະຈຸບັນ ເຮົາມີແນວພັນເຂົ້າ 30 ກວ່າ ແນວພັນຈາກສູນຄົ້ນຄວ້າເຂົ້າ 16 ແນວພັນ. ໃນປີຜ່ານມາໄດ້ຈົດທະບຽນເຂົ້າເປັນພັນສົ່ງເສີມ 9 ແນວພັນ ແລະ ມໍ່ໆນີ້ຈະຈົດຕື່ມອີກ 2 ແນວພັນ, ແນວພັນແມ່ນມີແນວພັນ ທ່າດອກຄຳ 8 (TDK 8), TDK 11, TDK 13, ວຽງຈັນ 450-1 (VTE 450-1 ເຂົ້າຈ້າວ), VTE 450-2, ເຊບັ້ງໄຟ 1 (XBF 1), XBF 2 (ເຂົ້າຈ້າວ), XBF 3, ຫອມສະຫວັນ (HSV ເຂົ້າຈ້າວ) ແນວພັນທັງໝົດແມ່ນປູກບໍລິໂພກ ແລະ ເປັນສິນຄ້າພາຍໃນ ແລະ ພາຍນອກ ໂດຍສະເພາະ ແມ່ນ ສປ ຈີນ ເຊິ່ງໂກຕາ ສົ່ງອອກ ເຖິງ 20.000 ໂຕນ.

ສາມາດຜະລິດເມັດພັນຜັກ ໄດ້ທັງໝົດ 13 ຊະນິດ ໄດ້ 800 ກລ ທຽບໃສ່ແຜນປີ 50,8%. ນອກນັ້ນຍັງໄດ້ຜະລິດເບ້ຍໄມ້ໃຫ້ໝາກ ໄດ້ 14 ພັນກວ່າ ເບ້ຍ ມີເບັ້ຍໄມ້ໃຫ້ໝາກ 11 ຊະນິດ (ລຳໃຍ, ລິ້ນຈີ່, ໝາກນາວ, ໝາກຫຸ່ງ, ໝາກມ່ວງໂຊກອານັນ, ຂຽວສະເຫວີຍ, ນ້ຳດອກໄມ້, ຟ້າລັ່ນ, ໝາກຂຽບ, ໝາກຂາມ, ໝາກມີ້, ໝາກຂີ້ຫູດ ແລະ ໝາກກະທັນ) ສົມທຽບໃສ່ແຜນການເທົ່າກັບ 28,92% ແລະ ເບັ້ຍໄມ້ດອກໄມ້ປະດັບ 42 ຊະນິດ ມີ 3.576 ເບັ້ຍ 71,52%.

ຮັກສາສວນກາເຟນ້ອຍ ແລະ ກາເຟກາງ ສາມາດເກັບຜົນຜະລິດກາເຟນ້ອຍໄດ້ ຈຳນວນ 30 ໂຕນ (ກາເຟໝາກແດງ) ໃນເນື້ອທີ່ 12 ເຮັກຕາ, ຊຸກຍູ້ຄອບຄົວຊາວສວນຜະລິດເບ້ຍກາເຟ ໃນປີ 2018 ໄດ້ຈຳນວນ 950.000 ເບ້ຍ ເຊິ່ງສາມາດປູກໄດ້ 190 ເຮັກຕາ.

ໄດ້ບູລະນະຮັກສາສວນພໍ່ແມ່ພັນໄມ້ພາຍໃນສູນຄົ້ນຄວ້າປ່າໄມ້ (ນ້ຳຊວງ) ແລະ ສວນລວມພັນໄມ້ທີ່ປູກຜ່ານມາ ເພື່ອເປັນບ່ອນສຶກສາຄົ້ນຄວ້າ ແລະ ແຫລ່ງທອ່ງທ່ຽວໃນອານາຄົດ,ຊຶ່ງມີເນື້ອທີ່ທັງໝົດ 313 ເຮັກຕາ.ໃນນີ້ ມີສວນພໍ່ແມ່ພັນ 5 ແຫລ່ງ, ເກັບແກ່ນພັນໄມ້ ໄດ້ຈຳນວນ 139,2 ກິໂລ.

ໄດ້ເກັບຊື້ ແລະ ທ້ອນໂຮມແນວພັນປາ, ແນວພັນກົບໄດ້ຫລາຍກວ່າ 3.500 ກິໂລກຣາມ ເພື່ອເປັນພໍ່ແມ່ພັນໄວ້ໃນສູນເພື່ອຜະລິດໃນສົກປີ 2019 ລົງທ້ອນໂຮມ ແນວພັນປາທຳມະຊາດ ໃນ 2 ແຂວງ: ປາໂພງ ແຂວງ ຫົວພັນ ແລະ ປາແດງ ແຂວງ ຜົ້ງສາລີ (ຈຳນວນ 200 ກິໂລ), ຜະລິດແນວພັນປາ ແລະ ສັດນ້ຳ ສາຍພັນຕ່າງປະເທດ (ປານິນ, ປາອິນເດຍ,ປາຈີນ,ປາດຸກພັນ , ປາໄນ, ກົບ) ແລະ ປາພື້ນເມືອງ (ປາເຊັງ, ປາປາກ, ປາເຄິງ, ປາຊວາຍໝາກໄມ້, ປາເໜັ້ນ, ປາແກງ, ປາກົດ, ປາເຂັງ, ປາສ້ອຍ ແລະ ປາເພ້ຍ ) ລວມທັງໝົດ 1.300.000 ໂຕ ໃນນີ້ປາພື້ນເມືອງ 260.000 ໂຕ (ຖ້າທຽບໃສ່ແຜນປີຂອງສູນແມ່ນປະຕິບັດໄດ້ 87% ຂອງແຜນປີ), ສະໜອງລູກແນວພັນປາ ໃຫ້ແກ່ບັນດາຟາມເອກະຊົນ ແລະ ຜູ້ປະກອບ ເພື່ອນຳໄປລ້ຽງ ຈຳນວນ 353.247 ໂຕ ( ປາ ຊວຍໝາກໄມ້, ປາເໜັ້ນ, ປາ

ເຄິງ, ປານິນ, ປາມະລິການ, ປາໄນ, ປາປາກ ແລະ ກົບ )ໃນແຂວງຕ່າງໆເຊັ່ນ: ບໍລິຄຳໄຊ, ຄຳມ່ວນ, ສາລະວັນ, ວຽງຈັນ ແລະ ໄຊຍະບູລີ.

ສາມາດຄັດເລືອກ ແລະ ເຕົ້າໂຮມ ແນວພັນງົວພື້ນເມືອງ ເພື່ອການສຶກສາ, ຄົ້ນຄວ້າ, ອະນຸລັກ ແລະ ຂະຫຍາຍພັນ ຈຳນວນ 12 ໂຕ. ໃນນັ້ນ, ປະກອບມີງົວແມ່ 08 ໂຕ ແລະ ງົວຜູ້ (ງົວຊິນ) ຈຳນວນ 05 ໂຕ. ສາມາດຮັກສາລະດັບ ງົວແມ່ພັນຂະຫຍາຍ (ຮ່ວມທຶນກັບຜູ້ປະກອບການ) ຈຳນວນ 219 ໂຕ ທຽບໃສ່ແຜນການປີ 2018 (300 ໂຕ) ບັນລຸໄດ້ 73% ຂອງແຜນການ.ຜະລິດແນວພັນງົວລູກປະສົມ ໃນຂອບເຂດທົ່ວປະເທດ ໄດ້ທັງໝົດ 11.250 ໂຕ. ໃນນັ້ນ, ຜະລິດຢູ່ພາຍໃນສູນຄົ້ນຄວ້າການລ້ຽງສັດ ຈຳນວນ 79 ໂຕ ເທົ່າກັບ 29,26% ຂອງແຜນການ ປີ 2018 (270 ໂຕ) ເຫັນວ່າ ຍັງບໍ່ທັນສາມາດປະຕິບັດໄດ້ຕາມແຜນການທີ່ວາງໄວ້. ນອກຈາກນີ້ ຍັງສາມາດສະໜອງງົວພໍ່ພັນທີ່ດີ ໃຫ້ແກ່ຊາວກະສິກອນ ໃນຂອບເຂດທົ່ວປະເທດ ທັງໝົດ 60 ໂຕ, ເຊິ່ງສາມາດຄຸມຝຸງແມ່ພັນໄດ້ເຖິງ 1.800 ແມ່. ປະສົມພັນທຽມງົວ ໃນຂອບເຂດທົ່ວປະເທດ ສາມາດປະຕິບັດໄດ້ທັງໝົດ 1.490 ໂຕ ເຫັນວ່າ ເລື່ອນແຜນການທີ່ວາງໄວ້ (1.250 ໂຕ) ໃນນັ້ນ, ສູນຄົ້ນຄວ້າການລ້ຽງສັດ ປະຕິບັດໄດ້ 241 ໂຕ.

ສາມາດຜະລິດໝູນ້ອຍ ໄດ້ທັງໝົດ 1.098 ໂຕ ທຽບໃສ່ແຜນການ ປີ 2018 (1.300 ໂຕ) ບັນລຸໄດ້ 84,46% ຂອງແຜນການ. ສາມາດຮັກສາລະດັບແມ່ພັນ (ໝູຂາວ) ຢູ່ໃນສະຖານີ ຈຳນວນ 59 ໂຕ ທຽບໃສ່ແຜນການ ປີ 2018 (80 ໂຕ) ບັນລຸໄດ້ 73,75% ຂອງແຜນການ. ສາມາດຮັກສາລະດັບແມ່ພັນ (ໝູດຳ) ຢູ່ສະຖານນີ ຈຳນວນ 19 ໂຕ ທຽບໃສ່ແຜນການ ປີ 2018 (100 ໂຕ) ບັນລຸໄດ້ 19% ຂອງແຜນການ ເຫັນວ່າ ຍັງບໍ່ທັນສາມາດປະຕິບັດຕາມແຜນການທີ່ວາງໄວ້ ເນື່ອງຈາກວ່າ: ການສ້າງຄອກໝູພໍ່ແມ່ພັນຢູ່ນ້ຳຊ່ວງ ພາຍໃຕ້ ໂຄງການຮ່ວມມື ລາວ - ຮົງກາລີ ແມ່ນມີຄວາມຫຼ້າຊ້າ.

ຜະລິດລູກສັດປີກ ໄດ້ທັງໝົດ 63.985 ໂຕ ທຽບໃສ່ແຜນການ ປີ 2018 (72.000 ໂຕ) ບັນລຸໄດ້ 88,86% ຂອງແຜນການ. ສາເຫດທີ່ພາໃຫ້ບໍ່ໄດ້ຕາມແຜນການທີ່ວາງໄວ້ ແມ່ນຍ້ອນໄດ້ມີການຄັດແມ່ພັນອອກ ເພື່ອປັບປຸງໂຄງສ້າງຂອງຝຸງສັດຄືນໃໝ່ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ. ສາມາດຮັກສາລະດັບແມ່ພັນສັດປີກ ທັງໝົດ 702 ໂຕ. ໃນນັ້ນ, ປະກອບມີ ໄກ່ຕົອກ 370 ໂຕ; ໄກ່ລາຍໜອງແຕ່ງ 104 ໂຕ; ໄກ່ສາມສາຍເລືອດໜອງແຕ່ງ (F2) 96 ໂຕ ແລະ ເປັດເທບ 132 ໂຕ ທຽບໃສ່ແຜນການ ປີ 2018 (1.800 ໂຕ) ບັນລຸໄດ້ 39 % ຂອງແຜນການ ເຫັນວ່າ ຍັງບໍ່ທັນສາມາດບັນລຸໄດ້ຕາມແຜນການທີ່ວາງໄວ້ ສາເຫດທີ່ພາໃຫ້ບໍ່ສາມາດບັນລຸໄດ້ຕາມແຜນການທີ່ວາງໄວ້ ແມ່ນເນື່ອງມາຈາກຫຼາຍປັດໃຈ ຄື: 1) ຕະຫຼາດມີຄວາມຕ້ອງການໄກ່ນ້ອຍບາງສາຍພັນມີຕໍ່າ ເຮັດໃຫ້ລາຄາຕົກ ແລະ ບໍ່ຄຸ້ມຄ່າຕໍ່ການລົງທຶນ ເຊັ່ນ: ໄກ່ລາຍໜອງແຕ່ງ. ສະນັ້ນ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບໂຄງປະກອບຂອງຝຸງສັດຄືນໃໝ່; 2) ໄກ່ແມ່ພັນມີອາຍຸຫຼາຍປີ ເຮັດໃຫ້ປະສິດທິພາບໃນການຜະລິດຫຼຸດລົງ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຄັດອອກ ແລ້ວຄັດເລືອກແມ່ພັນໃໝ່ເຂົ້າທົດແທນ ເຊັ່ນ: ໄກ່ຕົອກ ເປັນຕົ້ນ.

ສະໜອງເມັດພັນພືດອາຫານສັດ ໃນຂອບເຂດທົ່ວປະເທດ ໄດ້ທັງໝົດ 201 ໂຕນ, ເຊິ່ງຈະສາມາດຂະຫຍາຍທົ່ງຫຍ້າລ້ຽງສັດ ປະມານ 13.000-16.000 ເຮັກຕາ ຖ້າທຽບໃສ່ແຜນການປີ 2018 (200 ໂຕນ) ສາມາດບັນລຸໄດ້ລື່ນແຜນການເລັກນ້ອຍ. ແຕ່ຖ້າທຽບໃສ່ ປີ 2017 ແມ່ນຫຼຸດລົງ 32% (ໃນປີ 2017 ຜະລິດເມັດພັນ ໄດ້ທັງໝົດ 296 ໂຕນ) ເນື່ອງຈາກວ່າ ພື້ນທີ່ຜະລິດເມັດພັນຢູ່ແຂວງວຽງຈັນ ຖືກຜົນກະທົບຈາກໄພນ້ຳຖ້ວມ.

### 1.3.4 ແຜນດຳເນີນງານ ສົ່ງເສີມ ແລະ ບໍລິການ ເຕັກນິກ ກະສິກຳ ແລະ ປ່າໄມ້.

**ວຽກສົ່ງເສີມເຕັກນິກການຜະລິດ ແລະ ກົນຈັກ ກະສິກຳ**: ກ່ຽວກັບການຫັນເປັນກົນຈັກ ແລະ ສົ່ງເສີມບໍລິການເຕັກນິກ ແມ່ນໄດ້ສຸມໃສ່ທົດລອງໃນພື້ນທີ່ກວ້າງ ຢູ່ນະຄອນຫຼວງ ວຽງຈັນ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳສັກ. ໃນເຂດຈຸດສຸມຜະລິດເຂົ້າເປັນສິນຄ້າ ນຳໃຊ້ກົນຈັກແມ່ນມີເນື້ອ ທີ່ເຖິງ 50.000 ຫາ 60.000 ເຮັກຕາ ຊຶ່ງໄດ້ຖືກຮັບຮອງ ແລະ ໄດ້ມາດຖານ ກະສິກຳສະອາດ (GAP) ແລະ ມີການພັດທະນາການຜະລິດແບບຕ່ອງໂສ້ ຕິດພັນກັບລະບົບໂຮງສີ ທີ່ມີເຖິງ 30 ໂຮງ. ໝາຍຄວາມ ວ່າໃນເຂດດັ່ງກ່າວ ແມ່ນໄດ້ພັດທະນາໃຫ້ມີການ ສຳພັນຮ່ວມມື ແລະ ສຳພັນເສດຖະກິດໃນຮູບແບບ 4 ຫຸ້ນສ່ວນ (ລັດ, ຜູ້ປະກອບການ, ຊາວກະສິກອນ, ທະນາຄານ). ໃນພື້ນທີ່ດັ່ງກ່າວ ໄດ້ມີການຈັດຕັ້ງເປັນກຸ່ມຜະລິດຢ່າງເປັນລະບົບ ແລະ ໃນຮູບແບບເປັນສະຫະກອນ ກວມເຖິງຫຼາຍພັນຄອບຄົວ ເຊັ່ນ: ຕົວຢ່າງ ກຸ່ມຜະລິດເຂົ້າເປັນສິນຄ້າ ຂອງ IDP, ກຸ່ມຜະລິດຂອງບໍລິສັດ ວັນນິດາ ແລະ ສະຫະກອນພັດທະນາກະສິກຳ ແຂວງຄຳມ່ວນ. ການທົດລອງຫັນເປັນກົນຈັກ ແລະ ການນຳໃຊ້ເຕັກນິກໃໝ່ ໄດ້ຢັ້ງຢືນວ່າມີຄວາມ

ອາດສາມາດເພີ່ມຜະລິດຜະພາບໄດ້ຫຼາຍຂື້ນ ແລະ ຫຼູດຕົ້ນທຶນການຜະລິດ ໂດຍສະເພາະຄ່າແຮງງານລົງຈາກ 60% ມາເຫຼືອພຽງ 10% ແລະ ຕົ້ນທຶນການຜະລິດເຂົ້າກໍ່ຫຼູດຈາກ 2.300-2.500 ກີບ/ກິໂລ ເຂົ້າ ເປືອກ ມາເຫຼືອພຽງ 1.400-1.900 ກີບ/ກິໂລ ເຂົ້າເປືອກ.

**ວຽກສົ່ງເສີມ ການປຸງແຕ່ງ ແລະ ທຸລະກິດ ກະສິກຳ:** ທົ່ວປະເທດ ມີໂຮງສີເຂົ້າທັງໝົດ 18.440 ແຫ່ງ. ໃນນີ້, ຂະໜາດໃຫຍ່ 162 ແຫ່ງ, ກາງ 6.338 ແຫ່ງ, ຂະໜາດນ້ອຍ 11.940 ແຫ່ງ. ພ້ອມດຽວກັນໄດ້ຮັບການຢັ້ງຢືນຈາກພາກລັດ ສ້າງເປັນກຸ່ມໂຮງສີເຂົ້າ ຫຼາຍພໍສົມຄວນເປັນຕົ້ນ ຢູ່ແຂວງຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ. ກຸ່ມໂຮງສີດັ່ງກ່າວ ແມ່ນໄດ້ເຮັດໜ້າທີ່ ສະໜອງປັດໃຈການຜະລິດ ແລະ ແນວພັນ ຕາມຕະຫຼາດຕ້ອງການ ເພື່ອສົ່ງເສີມກຸ່ມຜະລິດ ເຮັດການຜະລິດແບບເປັນຕ່ອງໂສ້; ສ້າງລະບົບການເກັບຊື້ແບບມີສັນຍາຮ່ວມກັບຊາວນາ, ປະຕິບັດຕາມມາດຕະຖານຂອງຕະຫຼາດຕ້ອງການເຊັ່ນ: ມາດຕະຖານ ກະສິກຳສະອາດ (GAP) ແມ່ນຈະໄດ້ລາຄາເພີ່ມ 10% ຂອງລາຄາຕະຫຼາດ. ພ້ອມນີ້, ກໍ່ໄດ້ມີການສົ່ງ ເສີມ ແລະ ພັດທະນາການປຸງແຕ່ງເຂົ້າໃຫ້ໄດ້ຄຸນນະພາບ ແລະ ມາດຕະຖານທີ່ດີ (GMP). ສະເພາະ ຢູ່ແຂວງຄໍມ່ວນ ມີ 6 ກຸ່ມໂຮງສີເຂົ້າ ເຮັດການສັນຍາກັບ 72 ກຸ່ມຜະລິດ ໄດ້ມາດຕະຖານກະສິກຳສະອາດ (GAP), ມີ 2.030 ຄອບຄົວ; ມີ 5 ໂຮງສີເຂົ້າ ໄດ້ປັບປຸງຕົນເອງ ໄດ້ຕາມມາດຕະຖານ ໂຮງງານປຸງແຕ່ງທີ່ດີ (GMP). ໃນປີ 2018 ນີ້ຜູ້ປະກອບການໂຮງສີເຂົ້າ ແຂວງຄຳມ່ວນ ໄດ້ສົ່ງເຂົ້າສານ ອອກຂາຍຕ່າງປະເທດໄດ້ເຖິງ 3.738 ໂຕນ, ມູນຄ່າ 2.242.800 ໂດລາສະຫະລັດ, ນອກຈາກນີ້ຍັງສົ່ງອອກເຂົ້າເປືອກ 5.000 ໂຕນ, ມູນຄ່າ 1.500.000 ໂດລາສະຫະລັດ. ຢູ່ແຂວງສະຫວັນນະເຂດ ສາມາດສົ່ງເຂົ້າອອກໄປຕະຫຼາດຈີນ, ອັງກິດ ແລະ ເອີລົບ ໄດ້ທັງໝົດ 965,3 ໂຕນ, ມູນຄ່າ 558.659 ໂດລາສະຫະລັດ. ໃນນີ້, ສະເພາະສົ່ງໄປຈີນ ໂດຍບໍລິສັດ ຊວນເຢ 445,3 ໂຕນ, ມູນຄ່າ 307.259 ໂດລາສະຫະລັດ; ສົ່ງອອກໄປ ປະເທດອັງກິດ ແລະ ເອີລົບ ໂດຍບໍລິສັດ ໄອດີພີ (IDP) 520 ໂຕນ, ມູນ 246.400 ໂດລາສະຫະລັດ.

**ວຽກສົ່ງເສີມ ການຜະລິດ ແລະ ນຳໃຊ້ແນວພັນ:** ໄດ້ມີການຈັດຕັ້ງ, ພັດທະນາ ແລະ ຄຸ້ມຄອງ ການຜະລິດເມັດເຂົ້າລຸ້ນ3 ຢູ່ໃນບັນດາສູນພັດທະນາກະສິກຳ, ກຸ່ມຜະລິດເມັດພັນ ແລະ ຜູ້ປະກອບການ ໂດຍມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາ ແລະ ອອກໃບຢັ້ງຢືນຄຸນນະພາບ ເມັດພັນ ເພື່ອສະໜອງແນວພັນໃຫ້ຊາວກະສິກອນ ແລະ ກຸ່ມຜະລິດເຂົ້າ ເປັນສິນຄ້າ. ມີການຈັດຕັ້ງ ກຸ່ມຜະລິດເມັດພັນເຂົ້າ ທີ່ເປັນເຄືອຄ່າຍ ຂອງສູນພັດທະນາ ກະສິກຳ ຈຳນວນ 58 ກຸ່ມ ແລະ ກຸ່ມຜະລິດເມັດພັນຂອງກຸ່ມໂຮງສີ ແລະ ຜູ້ປະກອບຈຳນວນໜຶ່ງ. ໃນປີ 2018 ຜ່ານສູນພັດທະນາ ກະສິກຳ 6 ສູນ ແລະ ກຸ່ມຜະລິດເມັດພັນ ຂຶ້ນກັບສູນ 58 ກຸ່ມ ສາມາດຜະລິດແນວພັນເຂົ້າລຸ້ນ 3 ດ້ທັງໝົດ 1.309,5 ໂຕນ, ຕອບສະໜອງ ແນວພັນເຂົ້າໃຫ້ ຊາວກະສິກອນ ເຮັດການຜະລິດໃນເນື້ອ 18.707 ເຮັກຕາ. ສຳລັບຄວາມອາດສາມາດສະໜອງແນວພັນເຂົ້າລຸ້ນ3 ໃຫ້ແກ່ການຜະລິດລະດູຝົນປີ 2019 ນີ້ ຄາດວ່າ ສູນພັດທະນາກະສິກຳ ແລະ ກຸ່ມຜະລິດເມັດພັນ ຈະສາມາດຜະລິດໄດ້ 2.675 ໂຕນ. ພ້ອມນີ້ຍັງກຸ່ມຜະລິດເມັດພັນຂອງກຸ່ມໂຮງສີ ແລະ ຜູ້ປະກອບການ ກໍ່ຈະສາມາດຜະລິດແນວພັນເຂົ້າລຸ້ນ3 ໄດ້ປະມານ 3.405 ໂຕນ ແລະ ຍັງມີແນວພັນເຂົ້າທີ່ດີແຮສະສົມນຳຊາວກະສິກອນອີກປະມານ 11.428 ໂຕນ. ສັງລວມແລ້ວເຫັນວ່າ ແຜນການຜະລິດເຂົ້າໃນລະດູຝົນປີ 2019 ນີ້ ຈະສາມາດສະໜອງແນວພັນເຂົ້າໃຫ້ໄດ້ຢ່າງພຽງພໍ ຕາມແຜນການຄວາມຕ້ອງການ 17.500 ໂຕນ ໃນຂອບເຂດທົ່ວປະເທດ.

**ວຽກງານການກໍ່ສ້າງ ແລະ ປັບປຸງສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້:** ໄດ້ມີການປັບປຸງສູນບໍລິການເຕັກນິກໃຫ້ມີຄວາມເຂັ້ມແຂງຮອບດ້ານໃນການສົ່ງເສີມການຜະລິດຂອງຊາວກະສິກອນ, ມາຮອດປັດຈຸບັນສູນບໍລິການເຕັກນິກໄດ້ຈັດເປັນສອງພາກສ່ວນ ທີ່ເຮັດໜ້າທີ່ປະກອບເປັນກົງຈັກການຈັດຕັ້ງຂອງກົມ ແລະ ໜ້າທີ່ຄວາມຮັບຜິດຊອບທີ່ສືບຕໍ່ໃນໄລຍະ ຜ່ານມາຈົນເຖິງປະຈຸບັນ ມີດັ່ງນີ້: ສູນພັດທະນາກະສິກຳ ມີທັງໝົດ 7 ສູນ, ສູນສາທິດ ແລະ ບໍລິການເຕັກນິກກະສິກຳຮ່ວມມື ລາວ - ຈີນ (ແຂວງ ອຸດົມໄຊ) ແລະ ສູນຝຶກອົບຮົມ ເຕັກນິກກະສິກຳ ແລະ ພັດທະນາຊົນນະບົດ ລາວ- ເກົາຫຼີ ທີ່ປະກອບເປັນກົງຈັກການຈັດຕັ້ງ ຂອງກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ.

- ໄດ້ສຳຫຼວດຄືນ ແລະ ຈັດບຸລິມະສິດຈຳນວນສູນ/ສະຖານີບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ຈາກເມື່ອກ່ອນ ມີ ສູນ ແລະ ສະຖານີບໍລິການເຕັກນິກ ກະສິກຳ ແລະ ປ່າໄມ້ ຈຳນວນ 262 ແຫ່ງ, ພາຍຫຼັງສຳຫຼວດ ແລະ ກຳນົດຄືນໃໝ່ໃນປີ 2016 ເຖິງປະຈຸບັນ ປີ 2018 ມີສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້ 187 ແຫ່ງ (ໃນນັ້ນສູນຈັດເປັນສູນບໍລິການເຕັກນິກ 40 ແຫ່ງຢູ່ຂັ້ນແຂວງຄຸ້ມຄອງ, ຈັດເປັນສະຖານນີບໍລິການເຕັກນິກ 140

ແຫ່ງ ຢູ່ຂັ້ນເມືອງຄຸ້ມຄອງ ແລະ ປັບປຸງເປັນສູນພັດທະນາກະສິກຳ ທີ່ປະກອບເປັນກົງຈັກການຈັກຕັ້ງ ຂອງ ກົມ ມີ 7 ແຫ່ງ.

- ສືບຕໍ່ຕິດຕາມການກໍ່ສ້າງ ສູນບໍລິການເຕັກນິກທີ່ຍັງບໍ່ທັນສຳເລັດ ແລະ ກຳລັງຈັດຕັ້ງປະຕິບັດຢູ່ ລວມມີ 2 ແຫ່ງ ມີ: ສະຖານນີບໍລິການເຕັກນິກກະສິກຳ ແກ້ວແສດ ແລະ ສະຖານນີບໍລິການເຕັກນິກ ສຳພັນໄຊ ເມືອງ ຄູນ, ແຂວງ ຊຽງຂວາງ ມາຮອດປະຈຸບັນການກໍ່ສ້າງສຳເລັດແລ້ວ 70%.
- ສຳລັບການກໍ່ສ້າງສູນບໍລິການເຕັກນິກກະສິກຳ ຮ່ວມມື ລາວ - ຫວຽດນາມ ຢູ່ ບ້ານອີ້ງ , ເມືອງ ຊຳເໜືອ, ແຂວງ ຫົວພັນ, ມາຮອດປະຈຸບັນໄດ້ສຳເລັດ100% ແລະ ໄດ້ນຳໃຊ້ເຂົ້າໃນການຈັດຕັ້ງ ແລະ ການເຄື່ອນໄຫວ ຕາມໜ້າທີ່ການເມືອງ.

## 2. <u>ເສົາຄ້ຳທີ ສອງ: ປ່າໄມ້.</u>

## 2.1 ແຜນງານຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້.

### 2.1.1 ແຜນດຳເນີນງານ ຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້.

#### 1) ດ້ານນິຕິກຳ.

ປັບປຸງກົດໝາຍປ່າໄມ້ ແລະ ບັນດານິຕິກຳລຸ່ມກົດໝາຍ ເພື່ອກຳຈັດສິ່ງອຸດຕັນ ທັງເປັນ ການເອື້ອອຳນວຍແກ່ ການຈັດຕັ້ງປະຕິບັດນະໂຍບາຍອັນສອດຄ່ອງ ເພື່ອສົ່ງເສີມ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ແລະທີ່ດິນປ່າໄມ້ ໃຫ້ມີປະສິດທິຜົນສູງ ແລະ ມີຄວາມຍືນຍົງ. ສຳເລັດການປະກາດສ້າງຕັ້ງ ອຸທິຍານແຫ່ງຊາດ ນຳແອດ-ພູເລີຍ ແລະ ນາກາຍ-ນ້ຳເທີນ ເປັນທາງການ ເພື່ອປະກອບສ່ວນການຈັດຕັ້ງປະຕິບັດ ນະໂຍບາຍ ແລະ ຍຸດທະສາດການເຕີບໂຕສີຂຽວ ແລະ ສົ່ງເສີມການທ່ອງທ່ຽວທຳມະຊາດ ໂດຍການ ອອກດຳລັດນາຍົກລັດຖະມົນຕີ ສະບັບເລກທີ 35/ນຍ ແລະ 36/ນຍ, ລົງວັນທີ 15 ກຸມພາ 2019. ຕິດພັນກັນນີ້ ກະຊວງ ກະສິກຳ ແລະປ່າໄມ້ ໄດ້ ຮັບຮອງເອົາ ຂໍ້ແນະນຳດ້ານວິຊາການ ກ່ຽວກັບ ການຄຸ້ມຄອງອຸດທິຍານແຫ່ງຊາດ 7 ສະບັບ ເພື່ອຜັນຂະຫຍາຍ 2 ດຳລັດ ດັ່ງກ່າວ; ລັດຖະ ບານອອກຄຳສັ່ງເລກທີ 09/ນຍ, ເພື່ອເພີ່ມທະວີປະສິດທິພາບ ແລະ ຄວາມຮັດກຸມ ໃນວຽກ ງານການນຳໃຊ້ທີ່ດິນເຂົ້າໃນວຽກງານພັດທະນາກະສິກຳ ແລະປ່າໄມ້, ໂດຍສະເພາະ ໄດ້ເປີດໂອກາດໃຫ້ມີການສົ່ງເສີມ ການລົງທຶນປູກໄມ້ອຸດສາ ຫະກຳໃຫຍ່ໄວ ເຊັ່ນໄມ້ວິກ ແລະ ກະຖິນນະໂລງ ໃນທີ່ດິນປ່າຜະລິດແຫ່ງຊາດທີ່ຊຸດໂຊມ ອີກດ້ວຍ. ພ້ອມກັນນີ້ ກະຊວງກະສິກຳ ແລະ ປ່າໄມ້ ກໍໄດ້ອອກ ຂໍ້ແນະນຳ ເພື່ອຜັນຂະຫຍາຍ ຄຳສັ່ງດັ່ງກ່າວໃຫ້ມີປະ ສິດທິຜົນສູງ. ປັບປຸງຍຸດທະສາດປ່າໄມ້ໃຫ້ສອດຄ່ອງກັບວິໄສທັດ 2030 ຂອງລັດຖະບານ ແລະ ປະກົດການປ່ຽນແປງ ທີ່ກ່ຽວຂ້ອງຕ່າງໆ ໃນລະດັບ ສາກົນ ແລະ ພາກພື້ນ.

#### 2) ວຽກງານຄຸ້ມຄອງປ່າປ້ອງກັນ.

ສຳເລັດ ການທົບທວນຄືນ ຂອບເຂດເນື້ອທີ່ປ່າປ້ອງກັນແຫ່ງຊາດ 03 ແຫ່ງ ຄື: ປ່າປ້ອງກັນແຫຼ່ງນ້ຳເຊລະນອງພູ ໂອ່ງ, ປ່າປ້ອງກັນແຫຼ່ງນ້ຳເຊຕະນວນພູນາກ, ແຂວງສະຫວັນນະເຂດ, ປ່າປ້ອງກັນຍອດນ້ຳເຊກອງເຊຂະໜານ, ແຂວງ ເຊກອງ ພ້ອມທັງຊຸກຍູ້ໂຄງການຍ່ອຍ ແລະ ເກັບກຳຂໍ້ມູນ ເພື່ອການຈັດສັນຄຸ້ມຄອງປ່າປ້ອງກັນແຫ່ງຊາດ ໄດ້ ຈຳນວນ 70 ບ້ານ. ກຳນົດຂອບເຂດປ່າປ້ອງກັນ ພູພຶງຜາທູນຕາດກວາງຊີ ແຂວງຫລວງພະບາງ ຄືນໃໝ່, ມີເນື້ອທີ່ທັງໝົດ 36.535 ເຮັກຕາ. ຕິດປ້າຍ ແລະ ປັກຫລັກໝາຍເຂດປ່າປ້ອງກັນແຫ່ງຊາດ ໃນຂອບເຂດທົ່ວປະເທດ ໄດ້ທັງໝົດ 09 ແຫ່ງ, ຕິດປ້າຍໄດ້ທັງໝົດ 216 ປ້າຍ ແລະ ປັກຫລັກ ໝາຍໄດ້ທັງໝົດ 566 ຫລັກ. ໄດ້ລົງສຳຫຼວດເກັບກຳຂໍ້ມູນທີ່ ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມເຂດໂຄງການ ຂໍສຳປະທານ ຂອງບໍລິສັດ ຢູ່ ເມືອງກະລືມ ແຂວງ ເຊກອງ. ເກັບກຳຂໍ້ມູນກ່ອນທີ່ຈະກໍ່ສ້າງເຂື່ອນໄຟຟ້ານ້ຳທາ 1, ເມືອງຜາອຸດົມ ແຂວງ ບໍ່ແກ້ວ. ເກັບກຳຂໍ້ມູນ ເສດຖະກິດສັງຄົມ ບ້ານເປົ້າໝາຍ ທີ່ນອນໃນປ່າປ້ອງກັນແຫ່ງຊາດ ນ້ຳມ່ວນນ້ຳຍອງ ແຂວງ ບໍລິຄຳໄຊ, ພ້ອມທັງ ປັບປຸງ ຮ່າງຄູ່ມື ການວາງ ແຜນຄຸ້ມຄອງປ່າປ້ອງກັນແຫ່ງຊາດ ໃນ ສປປ ລາວ ມາຮອດປະຈຸບັນ ສຳເລັດແລ້ວ 70 ເປີເຊັນ ແລະ ສ້າງລະບຽບຄຸ້ມ ຄອງປ່າປ້ອງກັນແຫ່ງຊາດ ພູໄຊ ແຂວງ ຄຳມ່ວນ ແລະ ເຮັດເປັນປຶ້ມ ໄດ້ 100 ຫົວ.

### 3) ວຽກງານຄຸ້ມຄອງປ່າສະຫງວນ.

① ສໍາເລັດ ການສ້າງ ສວນອຸທິຍານ ແຫ່ງຊາດ ນາກາຍ-ນໍ້າເທີນ ແລະ ນໍ້າແອັດ-ພູເລີຍ ຊຶ່ງ ລັດຖະບານ ໄດ້ ອອກດໍາລັດ ສະບັບເລກທີ 35/ນຍ ແລະ 36/ນຍ, ລົງວັນທີ 15 ກຸມພາ 2019 ແລະ ຕິດພັນກັນນີ້ ກະຊວງ ກະສິກໍາ ແລະປ່າໄມ້ ໄດ້ຮັບຮອງເອົາ ຂໍ້ແນະນໍາ ດ້ານວິຊາການ ກ່ຽວກັບ ການຄຸ້ມຄອງ ສວນອຸທິຍານ ແຫ່ງ ຊາດ 7 ສະບັບ ເພື່ອຜັນຂະຫຍາຍ 2 ດໍາລັດ ດັ່ງກ່າວ ຊຶ່ງຈະເປັນຜົນປະໂຫຍດ ສໍາລັບ ການປົກປັກຮັກສາ ເຂດ ປ່າໄມ້ ແບບຍືນຍົງຢ່າງແທ້ຈິງ ແລະ ທັງເປັນການ ຮັບປະກັນ ແຫຼ່ງນໍ້າ ທີ່ໝັ້ນຄົງ ໃຫ້ແກ່ ການຜະລິດກະສິກໍາ, ການຜະລິດໄຟຟ້າ ແລະ ທີ່ສໍາຄັນແມ່ນ ຈະເປັນເງື່ອນໄຂ ໃນການ ພັດທະນາ ອຸດສະຫະກໍາ ທ່ອງທ່ຽວ ຊຶ່ງຈະ ເປັນຖານ ແຫຼ່ງລາຍຮັບໃໝ່ ໃຫ້ປະເທດ ແລະ ສ້າງອາຊີບໃໝ່ ທີ່ໝັ້ນຄົງ ໃຫ້ຊາວຊົນນະບົດ ຢູ່ ເຂດອ່າງ ຮັບນໍ້າ.

②ສົມທົບກັບ ກົມມໍລະດົກໂລກ ກະຊວງຖະແຫຼງຂ່າວວັດທະນາທໍາ ແລະ ທ່ອງທ່ຽວ ດໍາເນີນການສໍາຫຼວດ ແລະ ສະໜອງຂໍ້ມູນຂອງປ່າສະຫງວນແຫ່ງຊາດຫີນໜາມໜໍ່ ເພື່ອກະກຽມສະ ເໜີໃຫ້ອົງການ ຢູເນັດສະໂກ້ ພິຈາລະ ນາ ແລະ ຮັບຮອງເຂົ້າເປັນມໍລະດົກໂລກທາງທໍາມະຊາດ.

③ ພ້ອມດຽວກັນນັ້ນ ກໍ່ໄດ້ ການສະເໜີ ອອກຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ວ່າດ້ວຍ ແຕ່ງຕັ້ງຄະນະກໍາມະການຊີ້ນໍາ ແລະ ໜ່ວຍງານຄຸ້ມຄອງໂຄງການ ຮ່ວມມືລະຫວ່າງ ລາວ ແລະ ສ. ເກົາຫຼີ ກ່ຽວ ກັບວຽກງານຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການທໍາລາຍປ່າໄມ້, ຢູ່ເຂດປ່າສະຫງວນແຫ່ງຊາດດົງຫົວສາວ (ເລກທີ 1885/ກປ, ລົງວັນທີ 15 ສິງຫາ 2018). ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ການ ສ້າງຕັ້ງອຸທິຍານແຫ່ງຊາດ ສະບັບເລກທີ 1854/ກປ, ລົງວັນທີ 09 ສິງຫາ 2108, ແລະ ຄະນະທີມງານວິຊາ ການ ຄຸ້ມຄອງປ່າສະຫງວນ ສະບັບເລກທີ 1720/ກປ, ລົງວັນທີ 18 ກໍລະກົດ 2018. ຮ່າງ ຄໍາແນະນໍາ ຂອງ ລັດຖະມົນຕີກະຊວງ ກະສິກໍາ ແລະ ປ່າໄມ້ ກ່ຽວກັບ ການສ້າງຕັ້ງກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ປະຈໍາ ແຂວງ ໃນຂອບເຂດທົ່ວປະເທດ ລວມທັງການກໍານົດພາລະບົດບາດ, ຂອບເຂດສິດ, ໜ້າທີ່ ແລະ ລະບົບ ກົງຈັກການຈັດຕັ້ງ ແລະ ທົບທວນ ແລະ ປັບປຸງ ເອກະສານກ່ຽວກັບສະຖານະພາບ ຂອງປ່າສະຫງວນແຫ່ງຊາດ 24 ແຫ່ງ.

ສໍາເລັດ ການສ້າງຕັ້ງກອງຄຸ້ມປ່າສະຫງວນແຫ່ງຊາດ 02 ເຂດ ຄື: ກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ນໍ້າ ແອດ-ພູເລີຍ ແຂວງຫົວພັນ ແລະ ກອງຄຸ້ມຄອງ ປ່າສະຫງວນແຫ່ງຊາດ ນາກາຍ-ນໍ້າເທີນ ແຂວງຄໍາມ່ວນ, ພ້ອມທັງ ສໍາເລັດ ການກໍານົດພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ຊຶ່ງໄດ້ນໍາສະເໜີໃຫ້ອົງການມໍລະດົກໂລກ ປະກາດເປັນອຸທິຍານທາງທໍາມະຊາດ ຕາມແລວຊາຍແດນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ.

### 4) ວຽກງານ ການຈັດສັນ ແລະ ຄຸ້ມຄອງປ່າຜະລິດແບບຍືນນານ.

ສໍາເລັດການປັບປຸງ ແຜນຈັດສັນປ່າຜະລິດ ໃນ 02 ແຂວງ ຄື: ແຂວງ ວຽງຈັນ ແລະ ໄຊສົມບູນ. ແຕ້ມແຜນທີ່, ວິເຄາະຂໍ້ມູນ ແລະ ຂຽນແຜນຈັດສັນປ່າຜະລິດໃນ 11 ເຂດປ່າຜະລິດ ນອນຢູ່ໃນ 07 ແຂວງຄື: ແຂວງອັດຕະປື, ເຊ ກອງ, ບໍລິຄໍາໄຊ, ໄຊຍະບູລີ, ອຸດົມໄຊ, ຫຼວງນໍ້າທາ ແລະ ແຂວງບໍ່ແກ້ວ. ປັກຫຼັກໝາຍ ແລະ ຕິດປ້າຍໃນເຂດປ່າ ຜະລິດໄດ້ທັງໝົດ ຈໍານວນ 70 ຫຼັກ ແລະ ຕິດປ້າຍ ຈ□ານວນ 60 ປ້າຍ. ຊຸກຍູ້ຕິດຕາມທີມງານປ່າໄມ້ເມືອງ ໃນການ ສ້າງແຜນປະຈໍາປີ 2018 ຂອງໂຄງການຄຸ້ມຄອງປ່າຜະລິດ ທີ່ແຂວງສາລະວັນ, ເຊກອງ, ອັດຕະປື ແລະ ແຂວງຈໍາປາ ສັກ ແລະ ຮ່າງປັບປຸງຂໍ້ຕົກລົງການຄຸ້ມຄອງປ່າໄມ້ແບບຍືນນານ ແລະ ມີສ່ວນຮ່ວມຢູ່ບັນດາບ້ານເປົ້າໝາຍຂອງໂຄງການ ລວມທັງລົງຊຸກຍູ້ຕິດຕາມ ໃນການກະກຽມ ສໍາລັບການຈັດຕັ້ງປະຕິບັດ ແຜນການຟື້ນຟູປ່າໄມ້ ຂອງບ້ານຈໍານວນ 326 ບ້ານ ລົງຊຸກຍູ້ຕິດຕາມກວດກາການ ຈັດຕັ້ງປະຕິບັດແຜນການຟື້ນຟູປ່າໄມ້ ທີ່ນໍາໃຊ້ທຶນຟື້ນຟູຈາກໂຄງ ການຄຸ້ມຄອງ ປ່າໄມ້ແບບຍືນນານໃນ 07 ເຂດປ່າຜະລິດ ໃນເຂດຄຸ້ມຄອງ 12 ເມືອງເປົ້າໝາຍ.

ການຄຸ້ມຄອງການຂຸດຄົ້ນໄມ້ ໃນເຂດປ່າຜະລິດ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ປະຕິບັດໄດ້ທັງໝົດ ຈໍານວນ 26.665,67 ແມັດກ້ອນ ເທົ່າກັບ 40% ຂອງແຜນການ.

ວຽກຢັ້ງຢືນປ່າໄມ້ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຂໍ້ບົກຜ່ອງ ຊຶ່ງທາງຜູ້ກວດສອບໄດ້ຍົກຂຶ້ນມາໃນ ລະຫວ່າງການກວດສອບປະຈໍາປີ 2017 ແລະ ສົມທົບທີມງານກວດສອບສາກົນໃນການດໍາເນີນການກວດສອບ

ປະຈຳປີ 2018. ຈັດຕັ້ງປະຕິບັດວຽກງານເຂດຢັ້ງຢືນປ່າໄມ້ຄືນໃໝ່ ໃນປີ 2018 ໄດ້ສຳເລັດການກວດສອບກັບທີມງານ ກວດສອບຢັ້ງຢືນປ່າໄມ້ ໃນ 02 ແຂວງ ມີເນື້ອທີ່ 175.790 ເຮັກຕາ.

**4) ວຽກງານ ການສົ່ງເສີມປູກໄມ້ ແລະ ຟື້ນຟູປ່າ ເຊື່ອມໂຊມ.**

**ການສົ່ງເສີມປູກໄມ້:** ສາມາດ ປູກໄມ້ ປະຕິບັດໄດ້ 8.051 ເຮັກຕາ ເທົ່າກັບ 29,81% ຂອງແຜນການ (27.000 ເຮັກຕາ), ເກັບແກ່ນໄມ້ ໄດ້ 25.076 ກິໂລ ເທົ່າກັບ 41,79% ຂອງແຜນການ (60.000 ກິໂລ), ຜະລິດເບ້ຍໄມ້ ໄດ້ 17.231.671 ເບ້ຍ ເທົ່າກັບ 123% ຂອງແຜນການ (4.000.000 ເບ້ຍ), ປູກຕົ້ນໄມ້ໃນງານໄມ້ໂລກທີ່ຫໍພິພິດຕະພັນແຫ່ງຊາດລວມທັງໝົດ 118 ຕົ້ນ, ຕົ້ນໄມ້ທີ່ນຳໄປປູກມີ 04 ຊະນິດພັນຄື: ໄມ້ຂະຍຸງ 78 ຕົ້ນ, ໄມ້ແຕ້ຂ່າ 20 ຕົ້ນ, ໄມ້ຍາງ 10 ຕົ້ນ ແລະ ໄມ້ດູ່ 10 ຕົ້ນ. ຈັດພິທີສ້າງຂະບວນການປູກໄມ້ແຫ່ງຊາດ ທີ່ສູນຄົ້ນຄວ້າວິທະຍາສາດປ່າໄມ້ເຂດນ້ຳຊວງ ເຊິ່ງມີເນື້ອທີ່ປະມານທັງໝົດ 4 ເຮັກຕາ ໂດຍປູກເບ້ຍໄມ້ຈຳນວນ 4.400 ເບ້ຍ, ການປູກແມ່ນເພື່ອແນ່ໃສ່ໃຫ້ກາຍ ເປັນປ່າ ແລະ ເປັນແຫຼ່ງ ພໍ່ພັນແມ່ພັນໄມ້ ສະໜອງແກ່ນໄມ້ໃຫ້ແກ່ການປູກໄມ້ໃນອານາຄົດ. ລົງເກັບກຳຂໍ້ມູນ ເນື້ອທີ່ປູກຢາງພາລາຕົວຈິງໃນການສະເໜີຂໍສຳປະທານ ເນື້ອທີ່ປູກຢາງພາລາ ແລະ ການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂອງບໍລິສັດ ຮ່ວມມືເສດຖະກິດ 385 ຢູ່ເມືອງພູວົງ ແລະ ເມືອງສາມັກຄີໄຊ ແຂວງ ອັດຕະປື ໃນເນື້ອທີ່ 1.842,71 ເຮັກຕາ.

**ການຟື້ນຟູປ່າໄມ້:** ການຟື້ນຟູປ່າໄມ້ ປະຕິບັດໄດ້ 97.380 ຮຕ, ເທົ່າກັບ 18,81% ຂອງ ແຜນການ (517.500 ເຮັກຕາ),ໃນນັ້ນ: ປ່າຜະລິດ ປະຕິບັດໄດ້ 31.072 ຮຕ, ເທົ່າກັບ 18,27% ຂອງ ແຜນການ (170.000 ເຮັກຕາ). ປ່າສະຫງວນ ປະຕິບັດໄດ້ 13.629 ຮຕ, ເທົ່າກັບ 18,17% ຂອງ ແຜນການ (75.000 ເຮັກຕາ). ປ່າປ້ອງກັນ ປະຕິບັດໄດ້ 30.030 ຮຕ, ເທົ່າກັບ 13,05% ຂອງແຜນການ (230.000 ເຮັກຕາ) ແລະ ນອກ 03 ປະເພດປ່າ ປະຕິບັດໄດ້ 22.576 ຮຕ, ເທົ່າກັບ 53,12% ຂອງແຜນການ (42.500 ເຮັກຕາ).

**5) ວຽກງານ ການພັດທະນາປ່າໄມ້ ຂັ້ນບ້ານ.**

**ວຽກຄຸ້ມຄອງປ່າໄມ້ບ້ານ:** ປະຕິບັດໄດ້ທັງໝົດ 302 ບ້ານ, 14 ເມືອງ, 09 ແຂວງ ໃນຂອບເຂດທົ່ວປະເທດ ເທົ່າກັບ 100,66% ຂອງແຜນການ (300 ບ້ານ). ກຳນົດຂອບເຂດທີ່ດິນປ່າໄມ້ຂັ້ນບ້ານ ແລະ ສ້າງບ້ານຕົວແບບໃນການປົກປັກຮັກສາປ່າໄມ້ຈຳນວນ 15 ບ້ານ, ທີ່ນອນໃນປ່າສະຫງວນແຫ່ງຊາດ 04 ແຫ່ງ.

**ວຽກຄຸ້ມຄອງເຄື່ອງປ່າຂອງດົງ**: ສາມາດປະຕິບັດໄດ້ ໄມ້ປ່ອງ 1.388.745 ລຳ, ເທົ່າກັບ 17,36% ຂອງແຜນການ. ໄມ້ຕື້ວ ປະຕິບັດໄດ້ 89.112,67 ແມັດກ້ອນ, ເທົ່າກັບ 102,9% ຂອງແຜນການ. ຫວາຍ, ເຄືອ ປະຕິບັດໄດ້ 1.861 ໂຕນ, ເທົ່າກັບ 7% ຂອງ ແຜນການ ແລະ ໄມ້ຟືນຈັດຕັ້ງປະຕິບັດໄດ້ 18.934 ແມັດກ້ອນ, ສຳເລັດ ການຈັດພິມປຶ້ມອະນຸຍາດຂຸດຄົ້ນເຄື່ອງປ່າຂອງດົງ ຈຳນວນ 200 ຫົວ, ປຶ້ມອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງພາຍໃນ ຈຳນວນ 200 ຫົວ, ປຶ້ມອະນຸຍາດສົ່ງອອກເຄື່ອງປ່າຂອງດົງຕ່າງປະເທດ ຈຳນວນ 100 ຫົວ ແລະ ໃບອະນຸຍາດຂຸດຄົ້ນເຄື່ອງປ່າຂອງດົງ ໃຫ້ບັນດາແຂວງ ຈຳນວນ 32 ຫົວ. ໃບອະນຸຍາດເຄື່ອນຍ້າຍພາຍໃນ ຈຳນວນ 17 ຫົວ, ໃບອະນຸຍາດເຄື່ອນຍ້າຍອອກເຄື່ອງປ່າຂອງດົງຕ່າງປະເທດ ຈຳນວນ 54 ຫົວ.

**6) ວຽກງານຄຸ້ມຄອງສັດນ້ຳ ແລະ ສັດປ່າ.**

ສຳເລັດ ການຮ່າງຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 05/ນຍ, ລົງວັນທີ 8/5/ 2018 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ກວດກາສັດນ້ຳ-ສັດປ່າ ແລະ ພືດປ່າ. ແຕ່ງຕັ້ງຜູ້ປະສານງານຄືນໃຫ່ມກ່ຽວກັບແຜນດຳເນີນງານ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການຄ້າຂາຍງາຊ້າງ ແລະ ຜະລິດຕະພັນ ຈາກງາຊ້າງແຫ່ງຊາດ (NIAP). ແຕ່ງຕັ້ງຜູ້ປະສານງານຮັບຜິດຊອບ ວຽກງານການອະນຸລັກສັດປ່າຂ້າມຊາຍແດນ ໃນຂົງເຂດລຸ່ມແມ່ນ້ຳຂອງ ໃນໂຄງການ APFNet ຂອງ ສປປ ລາວ ໄດ້ແລກປ່ຽນບົດຮຽນ ແລະ ປະສົບການ ວຽກງານຄຸ້ມຄອງສັດນ້ຳ-ສັດປ່າ ກັບບັນດາປະເທດທີ່ມີຊາຍແດນຕິດກັບ ສປ ຈີນ. ແຕ່ງຕັ້ງຜູ່ປະສານງານ ກ່ຽວກັບ ວຽກງານການອະນຸລັກເສືອໂຄ່ງ ແລະ ສົ່ງຂໍ້ຕົກລົງແຕ່ງຕັ້ງດັ່ງກ່າວ ໃຫ້ບັນດາປະເທດທີ່ເປັນພາຄີ ເປັນເຈົ້າການໃນການສ້າງຖານຂໍ້ມູນ ແລະ ສ້າງແຜນດຳເນີນງານ ສຳລັບວຽກງານການຄຸ້ມຄອງປະຊາກອນເສືອໂຄ່ງ ທີ່ມີໃນ ສປປ ລາວ ແລະ ສະເໜີຂໍ

ອະນຸມັດຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ໃນການແຕ່ງຕັ້ງຄະນະຮັບຜິດຊອບວຽກງານສົນທິສັນຍາສາກົນ ວ່າດ້ວຍ ການ ຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນ ພັນລະຫວ່າງຊາດ CITES.

ພ້ອມດຽວກັນນັ້ນ ກໍ່ໄດ້ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງແຕ່ຂັ້ນສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງ ສາກົນ ເປັນຕົ້ນແມ່ນ ສະມາຄົມອະນຸລັກສັດປ່າໂລກ (WCS), ກອງທຶນອະນຸລັກສັດປ່າໂລກ (WWF), ອົງການ ອະນຸລັກທຳມະຊາດໂລກ (IUCN), ສະມາຄົມສວນສັດໂລກ ແລະ ກອງເລຂາ CITES ເກັບກຳຂໍ້ມູນຄືນໃໝ່ ບັນດາ ຟາມລ້ຽງເສືອ ແລະ ການຢັ້ງຢືນຕົ້ນກຳເນີດ ຂອງ ສັດປ່າ ທີ່ໄດ້ນຳມາລ້ຽງ ເພື່ອການຂະຫຍາຍພັນ ແລະ ເພື່ອການຄ້າ ຫັນມາເປັນການລ້ຽງເພື່ອການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ແລະ ເພື່ອເປັນການທ່ອງທ່ຽວອະນຸ ລັກໂດຍການ ສ້າງເປັນສວນສັດ.

ສຳຫລວດເກັບກຳຂໍ້ມູນຂະຫຍາຍເນື້ອທີ່ອະນຸລັກໂອ່ງ-ມັ່ງ ເມືອງ ຊົນນະບູລີ ແຂວງ ສະຫວັນນະເຂດ ເພື່ອນຳ ສະເໜີສູນກາງ ຍົກລະດັບຈາກລະດັບປ່າສະຫງວນຂັ້ນແຂວງ ຂຶ້ນເປັນປ່າສະຫງວນລະດັບຊາດ ຊຶ່ງມີເນື້ອທີ່ທັງໝົດ 130.718 ຮຕ, ຊຶ່ງກວມເອົາ 05 ເມືອງ (ເມືອງຊົນນະບູລີ, ພະລານໄຊ, ພີນ, ສອງຄອນ ແລະ ທ່າປາງທອງ). ສ້າງ ສູນອະນຸລັກ ລະບົບນິເວດປ່າໂຄກ ໂອງ-ມັ່ງ ຈຳນວນ 01 ຫຼັງ, ຫໍພັກພະນັກງານ ຈຳນວນ 01 ຫຼັງ (ຕັ້ງຢູ່ເຂດ ເມືອງ ຊົນນະບູລີ, ແຂວງ ສະຫວັນນະເຂດ) ເພື່ອເປັນບ່ອນລວມສູນ ດ້ານຂໍ້ມູນ ລະບົບນິເວດປ່າໂຄກ ໂອງ-ມັ່ງ, ສ້າງເປັນ ບ່ອນພັກຜ່ອນ ທ່ອງທ່ຽວທຳມະຊາດແບບຍືນຍົງ ແລະ ເປັນບ່ອນສຶກສາຄົ້ນຄວ້າ ທາງດ້ານວິທະຍາສາດ. ພ້ອມທັງ ວາງແຜນຄຸ້ມຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດຄຸ້ມຄອງໂຄງການອະນຸລັກທີ່ດິນ ແລະ ປ່າໄມ້ໃນລະບົບ ນິເວດປ່າໂຄກໂອງ-ມັ່ງ ລວມມີ 05 ເມືອງຄື: ຊົນນະບູລີ, ສອງຄອນ, ທ່າປາງທອງ, ພະລານໄຊ ແລະ ເມືອງພີນ (16 ບ້ານ) ເພື່ອເປັນຂໍ້ມູນເບື້ອງຕົ້ນ ໃນການຄຸ້ມຄອງ ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍການຈັດສັນ ອາຊີບຄົງທີ່ໃຫ້ ປະຊາຊົນບັນດາເຜົ່າ ທີ່ມີສ່ວນຮ່ວມໃນວຽກງານ ອະນຸລັກ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ.

ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການບັງຄັບໃຊ້ ກົດໝາຍສັດນ້ຳ-ສັດປ່າ ,ນິຕິກຳຕ່າງໆ ຂອງ ສປປ ລາວ ແລະ ສົນທິ ສັນຍາ CITES (Lao Wildlife Enforcement Network ຫຼື Lao-WEN) ເພື່ອສະກັດກັ້ນ ແລະ ປາບປາມ ອາດຊະຍາກຳ ກ່ຽວກັບສັດປ່າ ໂດຍການເຊື່ອມໂຍງກັບ ເຄືອຂ່າຍທີ່ກ່ຽວຂ້ອງ ໃນລະດັບພາກພື້ນ ແລະ ສາ ກົນ ວຽກງານງານການຄຸ້ມຄອງສັດນ້ຳ-ສັດປ່າ ໄດ້ຮັບການຄຸ້ມຄອງດີຂຶ້ນເທື່ອລະກ້າວ.

**7) ວຽກງານກວດກາຊັບພະຍາກອນປ່າໄມ້.**

**ການກວດກາສັດນ້ຳ ແລະ ສັດປ່າ:** ຈັດຕັ້ງຜັນຂະຫຍາຍ ຄ□າສັ່ງ ເລກທີ 05/ນຍ, ລົງວັນທີ 08 ພຶດ ສະພາ 2018 ໃນການຄຸ້ມຄອງ ແລະ ການກວດກາ ສັດປ່າ ແລະ ພືດປ່າ ປະເພດ ຫວງຫ້າມ ທີ່ໃກ້ຈະສູນພັນ ໃຫ້ມີ ຄວາມສັກສິດ ຊຶ່ງເປັນການ ປະຕິບັດ ສັນຍາ ແລະ ລະບຽບ ສາກົນ ວາງໄວ້ ທີ່ ສປປ ລາວ ເຮົາເປັນພາຄີ ຊຶ່ງ ພວກເຮົາ ກໍ່ສຳເລັດ ການແກ້ໄຂບັນຫາ ທີ່ຄົງຄ້າງ ກ່ຽວກັບ ການປະຕິບັດ ສົນທິສັນຍາ ໄຊເຕັສ (CITES) ທີ່ສະສົມມາຍາວ ນານ ຈຳນວນທັງໝົດ 36 ຂໍ້ ຊຶ່ງສາມາດແກ້ໄຂໄດ້ແລ້ວ 30 ຂໍ້ ແລະ ຍັງຕ້ອງໄດ້ສືບຕໍ່ແກ້ໄຂຕື່ມອີກ 6 ຂໍ້ ຊຶ່ງມາຮອດ ປະຈຸບັນ ແມ່ນ ໄດ້ຖືກ ຍົກອອກ ຈາກ ບັນຊີ ເຝົ້າລະວັງປະເທດ ທາງຜ່ານ ໃນການ ຄ້າຂາຍ ສິ້ນສ່ວນ ສັດປ່າ ຫ້ວງ ຫ້າມ ເຊັ່ນ: ຜະລິດຕະພັນງາຊ້າງ ແລະ ຄ້າຍຄື ງາຊ້າງ ແລະ ນໍແຮດ. ຄຽງຄູ່ກັບການດຳເນີນການເຄື່ອນໄຫວກວດກາ ຕາມຈຸດຫຼໍ່ແຫຼມ, ເສັ້ນທາງ, ຕະຫຼາດ, ສູນການຄ້າ, ຮ້ານອາຫານ, ໂຮງແຮມ, ດ່ານຜ່ານແດນສາກົນ ແລະ ທ້ອງຖິ່ນ ແລະ ຕາມເບາະແສອື່ນໆ ຮ່ວມກັບບັນດາເຈົ້າໜ້າທີ່ກອງກວດກາປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ແລະ ເຄືອ ຂາຍ ບັງຄັບໃຊ້ກົດໝາຍສັດນ້ຳ ແລະ ສັດປ່າ ສປປ ລາວ, ສາມາດກັກຍຶດ ສັດປ່າຕາຍ ແລະ ສິ້ນສ່ວນ : ປະເພດຫວງ ຫ້າມ ຫຼື ບັນຊີ I ມີ 21 ຊະນິດ, ລວມທັງເປັນໂຕ ແລະ ສິ້ນສ່ວນນ້ຳໜັກ 1.187 ກິໂລ; ປະເພດຄຸ້ມຄອງ ຫຼື ບັນຊີ II ມີ 21 ຊະນິດ ລວມທັງເປັນໂຕ ແລະ ສິ້ນສ່ວນນ້ຳໜັກ 309 ກິໂລ; ປະເພດທົ່ວໄປ ຫຼື ບັນຊີ III ມີ 06 ຊະນິດ, ລວມທັງເປັນໂຕ ແລະ ສິ້ນສ່ວນນ້ຳໜັກ 625 ກິໂລ. ສັດປ່າທີ່ຍັງມີຊີວິດ : ມີ 05 ຊະນິດ ຈ□ານວນ 1.161 ໂຕ ໃນ ນັ້ນມີ ງູສິງ ງູຈົງອາງ, ງູເຫຼືອມ, ເຕົ່າງັບ, ໂຕເຫ້ຍ ປ່ອຍຄືນສູ່ທຳມະຊາດ. ຜະລິດຕະພັນຈາກສິ້ນສ່ວນສັດປ່າ: ງາຊ້າງ 71,5 ກິໂລກຼາມ, ແຂ້ວຊ້າງ 4,9 ກິໂລກຼາມ, ນໍແຮດ 1,8 ກິໂລກຼາມ, ເຂົາກວາງ 1,3 ກິໂລກຼາມ, ເຂົາຟານ 2 ກິໂລ ກຼາມ.

**ການກວດກາປ່າໄມ້:** ໄດ້ເພີ່ມທະວີຄວາມເຂັ້ມງວດ ຍຶດຖືລະບຽບກົດໝາຍເປັນຫຼັກ ໂດຍດຳເນີນການ ກວດກາກິດຈະການ, ໂຄງການປ່າໄມ້, ທຸລະກິດປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ເຄື່ອງປ່າຂອງດົງ,

ດຳເນີນການສືບສວນສອບສວນ ແລະ ນຳໃຊ້ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ອອກຄຳສັ່ງ ໃຫ້ຢຸດເຊົາການເຄື່ອນໄຫວ ກ່ຽວກັບກິດຈະການປ່າໄມ້ ທີ່ມີການກະທຳ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ. ເອົາໃຈໃສ່ປະຕິບັດ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13/05/2016 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້, ໄດ້ເຄື່ອນໄຫວກວດກາລາດຕະເວນ ເຂດພື້ນທີ່ຫຼໍ່ແຫຼມ ແລະ ຕາມເບາະແສລາຍງານ ຢ່າງຕັ້ງໜ້າ ແລະ ໄດ້ມີການກັກຍຶດຂອງກາງ, ກັກຕົວຜູ້ກະທຳຜິດ ສາມາດສະກັດກັ້ນໄດ້ ຂະບວນການລັກລອບຂຸດຄົ້ນ, ເຄື່ອນຍ້າຍ, ຂົນສົ່ງ ແລະ ສົ່ງອອກໄມ້ ອັນໄດ້ເຮັດໃຫ້ ສະພາບ ປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນ ໃນຂົງເຂດປ່າໄມ້ ແລະ ທຸລະກິດໄມ້ໄດ້ຄ່ອຍໆສະຫງົບລົງ. ຊຶ່ງສະແດງອອກ ໃນປີ 2018 ສາມາດຢຶດໄມ້ໄດ້ ທັງໝົດ: 10.609,52 ແມັດກ້ອນ ແລະ ນໍ້າໝັກ 132.818 ກິໂລກຼາມ, ໃນນັ້ນ: ໄມ້ທ່ອງທ້າມ ຈຳນວນ 345,45 ແມັດກ້ອນ, ໄມ້ພິເສດ ຈຳນວນ 4.773,92 ແມັດກ້ອນ, ໄມ້ຄຸ້ມຄອງ 1,2,3 ຈຳນວນ 5.490,14 ແມັດກ້ອນ.

**ການສືບສວນສອບສວນ ແລະ ການດຳເນີນຄະດີຕໍ່ຜູ້ກະທຳຜິດກົດໝາຍ:** ໃນຂອບເຂດທົ່ວປະເທດ ມີ ຄະດີທັງໝົດມີຈຳນວນ 694 ຄະດີ ລາຍລະອຽດມີຄື: ຄະດີກ່ຽວກັບໄມ້ມີຈຳນວນ 418 ຄະດີ, ຄະດີກ່ຽວກັບສັດນໍ້າສັດປ່າມີຈຳນວນ 59 ຄະດີ, ຄະດີກ່ຽວກັບສັດນໍ້າສັດປ່າມີຈຳນວນ 59 ຄະດີ, ກະດີກ່ຽວກັບທີ່ດິນປ່າໄມ້ມີຈຳນວນ 139 ຄະດີ, ຄະດີຈັກສະຕິນມີຈຳນວນ 31 ຄະດີ, ຄະດີກ່ຽວກັບປືນແກັບມີຈຳນວນ 4 ຄະດີ. ຈຳນວນເງິນປັບໃໝທັງໝົດ: 4.150.409.998 ກີບ ແລະ 61.560 ບາດ, (ໃນນີ້ ຄະດີກ່ຽວກັບໄມ້: 2.260.799.680 ກີບ ແລະ ເງິນບາດ ຈຳນວນ 61.560 ບາດ; ຄະດີສັດນໍ້າ ແລະ ສັດປ່າ: 2.260.799.680 ກີບ; ຄະດີເຄື່ອງປ່າຂອງດົງ: 287.709.000 ກີບ ແລະ ຄະດີທີ່ດິນປ່າໄມ້: 1.283.947.318 ກີບ).

## 3. <u>ເສົາຄໍ້າທີ ສາມ: ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ</u>:

### 3.1 ແຜນງານພັດທະນາ ຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ:

#### 3.1.1 ແຜນດຳເນີນງານ ພັດທະນາ ຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ:

ໃນປີ 2018 ຜ່ານມາ ເຖິງວ່າພວກເຮົາມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະການເງິນ ໂດຍສະເພາະແມ່ນພົບກັບໄພພິບັດທາງທຳມະຊາດຢ່າງໜັກໜ່ວງຢູ່ໃນຫຼາຍທ້ອງຖິ່ນກໍຕາມ, ແຕ່ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳຢ່າງໃກ້ສິດຂອງສູນກາງພັກ, ລັດຖະບານ ແລະ ສະພາແຫ່ງຊາດ, ບັນດາຂະແໜງການ, ອົງການທຽບເທົ່າຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໄດ້ເປັນເຈົ້າການຄົ້ນຄວ້າມາດຕະການຕ່າງໆ ແລະ ຈັດສັນແຫຼ່ງທຶນພາຍໃນທີ່ມີສົມທົບກັບການປຸກລະດົມຂົນຂວາຍຍາດແຍ່ງທຶນຮອນຈາກທັງພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງສາກົນຕ່າງໆ ສຸມໃສ່ຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ມີທັງໝົດ 1.486,39 ຕື້ກີບ ໃນນັ້ນ ເປັນທຶນພາຍໃນ 792,40 ຕື້ກີບ (ເປັນທຶນປ່ອຍສິນເຊື່ອຂອງທະນາຄານນະໂຍບາຍ 382,23 ຕື້ກີບ), ທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ (ODA) 693,99 ຕື້ກີບ, ຊຶ່ງສາມາດເຮັດໃຫ້ວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແລະ ມີຜົນສຳເລັດທີ່ຕັ້ງໜ້າໃນຫຼາຍດ້ານ ຊຶ່ງສະແດງອອກດັ່ງນີ້:

- ການຈັດຕັ້ງຜັນຂະຫຍາຍ ດຳລັດ ເລກທີ 348/ລບ ແລະ ບົດແນະນຳ ເລກທີ 0830/ກປ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ຕິດພັນກັບການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ, ໂດຍສະເພາະ ຂັ້ນຮາກຖານບ້ານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຂະບວນການໃນທົ່ວປະເທດ, ຊຶ່ງມາຮອດປະຈຸບັນ ມີ 1.735 ບ້ານ, 65 ເມືອງ ຂອງ 17 ແຂວງ ໄດ້ຈັດຕັ້ງການເຜີຍແຜ່ເຊື່ອມຊຶມ, ຝຶກອົບຮົມ ແລະ ດຳເນີນການເກັບກຳຂໍ້ມູນຂັ້ນບ້ານ ໃນນັ້ນ, ມີແຂວງບໍ່ແກ້ວ ແລະ ແຂວງຜົ້ງສາລີ ໄດ້ສຳເລັດການເກັບກຳຂໍ້ມູນໃນທົ່ວແຂວງ; ສຳລັບ ແຂວງຫຼວງນໍ້າທາ ສຳເລັດ 293 ບ້ານ; ແຂວງວຽງຈັນ ສຳເລັດ 157 ບ້ານ; ແຂວງໄຊຍະບູລີ ສຳເລັດ 80 ບ້ານ; ແຂວງສະຫວັນນະເຂດ ສຳເລັດ 28 ບ້ານ; ສ່ວນ ແຂວງບໍລິຄຳໄຊ ແລະ ແຂວງໄຊສົມບູນ ກໍ່ໄດ້ສຳເລັດການເກັບກຳຂັ້ນບ້ານໃນທົ່ວແຂວງ ແຕ່ຍັງບໍ່ທັນໄດ້ປ້ອນຂໍ້ມູນໃສ່ຖານຂໍ້ມູນເທື່ອ; ສ່ວນແຂວງອື່ນໆກໍພວມດຳເນີນເກັບກຳຂໍ້ມູນຢູ່ຂັ້ນບ້ານພາຍໃນແຂວງຂອງຕົນ, ສຳລັບແຂວງຊຽງຂວາງ ຈະຈັດຕັ້ງການເຊື່ອມຊຶມ, ຝຶກອົບຮົມ ແລະ ເຮັດທົດລອງ ໃນທ້າຍເດືອນມີນາ 2019; ພ້ອມກັນນີ້ ກໍ່ໄດ້ຈັດຕັ້ງການເຜີຍແຜ່ກົດໝາຍວ່າ

ດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ສະບັບເລກທີ 45/ສພຊ, ລົງວັນທີ 15/06/2018 ໃຫ້ບັນດາກະຊວງ, ອົງການຈັດຕັ້ງຂັ້ນສູນກາງ ແລະ ບັນດາແຂວງ ສຳເລັດໃນທົ່ວປະເທດ.

– ວຽກງານພັດທະນາຊົນນະບົດ ໄດ້ສືບຕໍ່ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ມີຄວາມຄືບໜ້າໃນຫຼາຍດ້ານ ເປັນຕົ້ນ ແມ່ນ ການພັດທະນາພື້ນຖານໂຄງລ່າງ ເປັນຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນຢູ່ຊົນນະບົດ, ຊຶ່ງສະແດງອອກ: ບ້ານທີ່ບໍ່ມີເສັ້ນທາງຄົມມະນາຄົມເຂົ້າເຖິງ ຫຼືທຽວໄດ້ແຕ່ລະດູດຽວ ໄດ້ຫຼຸດ 24 ບ້ານ, ຍັງເຫຼືອ 1.240 ບ້ານ, ເທົ່າກັບ 14,64%, ບ້ານທີ່ມີເສັ້ນທາງເຂົ້າເຖິງ ຫຼື ທຽວໄດ້ຕະຫຼອດປີໄດ້ເພີ່ມຂຶ້ນ ກວມ 85,36% ຂອງ ຈຳນວນບ້ານທັງໝົດທົ່ວປະເທດ; ມີ 7.066 ບ້ານ ກວມ 83,25% ແລະ ມີ 148 ເມືອງໃນທົ່ວປະເທດ ໄດ້ນຳໃຊ້ໂທລະສັບມືຖືຢ່າງສະດວກ; ບ້ານທີ່ໄດ້ໃຊ້ໄຟຟ້າ ເພີ່ມຂຶ້ນເປັນ 7.697 ບ້ານ ກວມ 90,87%, ຄອບຄົວໄດ້ຊົມໃຊ້ໄຟຟ້າ ເພີ່ມຂຶ້ນເປັນ 1.167.000 ກວ່າຄອບຄົວ ກວມ 93,33%; ບ້ານທີ່ບໍ່ມີໂຮງຮຽນປະຖົມ ຫຼືໃຊ້ເວລາຍ່າງໄປຫາໂຮງຮຽນທີ່ໃກ້ທີ່ສຸດ ຕ້ອງໃຊ້ເວລາຍ່າງຫຼາຍກວ່າ 1 ຊົ່ວໂມງ ໄດ້ຫຼຸດລົງຍັງເຫຼືອ 29 ບ້ານ, ເທົ່າກັບ 0,34%ໃນປີ 2018, ມີ 117 ເມືອງ ໄດ້ປະ-ກາດຈົບຊັ້ນມັດ-ທະ-ຍົມຕອນຕົ້ນບຳລຸງ; ການບໍລິການສາທາລະນະສຸກແບບຄົບຊຸດ ກວມ 6.528 ບ້ານ, ກອງທຶນໝູນວຽນຢາປະຈຳບ້ານ ກວມ 4.121 ບ້ານ, ບ້ານທີ່ບໍ່ມີສຸກສາລາ, ຖົງຢາປະຈຳບ້ານ ຫຼື ໃຊ້ເວລາຍ່າງໄປໂຮງໝໍເມືອງທີ່ໃກ້ທີ່ສຸດຕ້ອງໃຊ້ເວລາຍ່າງຫຼາຍກວ່າ 2 ຊົ່ວໂມງ ໄດ້ຫຼຸດລົງ 13 ບ້ານ, ຍັງເຫຼືອ 244 ບ້ານ, ເທົ່າກັບ 2,88%, ບ້ານທີ່ບໍ່ມີນ້ຳສະອາດຊົມໃຊ້ ໄດ້ຫຼຸດລົງ 18 ບ້ານ, ຍັງເຫຼືອ 222 ບ້ານ, ເທົ່າກັບ 2,62%, ອັດຕາການເຂົ້າເຖິງ ການບໍລິການສາທາ ລະນະສຸກ ຂັ້ນພື້ນຖານ ໄດ້ເພີ້ມຂຶ້ນ ກວມ 90%, ອັດຕາຄອບຄົວຊົມໃຊ້ນ້ຳສະອາດເພີ້ມຂຶ້ນ ກວມ 84%, ອັດ ຕາການຊົມໃຊ້ວິດຖ່າຍເພີ້ມຂຶ້ນ ກວມ 73,60%; ສ້າງຄອບຄົວວັດທະນະທຳໄດ້ 19.868 ຄອບຄົວ ເພີ່ມຂຶ້ນເປັນ 896.598 ຄອບຄົວ ກວມ 76,72%, ສ້າງບ້ານວັດທະນະທຳໄດ້ 205 ບ້ານ ເພີ່ມຂຶ້ນເປັນ 5.956 ບ້ານ ກວມ 70,18%; ໄດ້ຝຶກອົບຮົມວິຊາຊີບຕ່າງໆ ໄດ້ທັງໝົດ 53.678 ຄົນ, ຍິງ 22.465 ຄົນ; ການບໍລິການສິນເຊື່ອ ຫຼືການເງິນຈຸລະພາກເພີ້ມຂຶ້ນ ກວມ 83,06%, ບ້ານທີ່ມີກຸ່ມການຜະລິດ ແລະ ການບໍລິການສິນຄ້າເພີ້ມຂຶ້ນ ກວມເຖິງ 73,73%.

– ການພັດທະນາຈຸດສຸມທີ່ເປັນບູລິມະສິດ ຈຳນວນ 449 ຈຸດສຸມ ຕາມຂໍ້ຕົກລົງເລກທີ 65/ນຍ, ກໍ່ໄດ້ສືບຕໍ່ຮັບການຈັດສັນທຶນຮອນເຂົ້າໃນການຈັດຕັ້ງປະຕິບັດໂຄງການ ໃນຈຳນວນ 138 ຈຸດສຸມ, ລວມເປັນທຶນທັງໝົດ 165,33 ຕື້ກີບ, ມີ 722 ໂຄງການ ແລະ ສາມາດຈັດຕັ້ງປະຕິບັດ ໂຄງການສຳເລັດ 100% ໄດ້ 319 ໂຄງການ ໃນນີ້ ກໍ່ສ້າງ, ສ້ອມແປງ, ຍົກລະດັບເສັ້ນທາງ ໄດ້ 95 ເສັ້ນ, ຕັດຕາຜ້າຜັງບ້ານ ໄດ້ 34 ບ້ານ, ກໍ່ສ້າງຂົວ, ຂົວອູ່ ໄດ້ 23 ແຫ່ງ; ກໍ່ສ້າງສ້ອມແປງຊົນລະປະທານ/ຝາຍນໍ້າລົ້ນ ໄດ້ 26 ແຫ່ງກໍ່ສ້າງໂຮງຮຽນອະນຸບານ, ປະຖົມ ມັດທະຍົມ ແລະ ຫໍພັກຄູ ໄດ້ 40 ແຫ່ງ, ກໍ່ສ້າງສຸກສາລາ, ໂຮງໝໍ ນ້ອຍ ໄດ້ 13 ແຫ່ງ; ກໍ່ສ້າງນໍ້າລິນ, ນໍ້າປະປາຊຸມຊົນ ໄດ້ 30 ແຫ່ງ, ກໍ່ສ້າງຂະຫຍາຍຕະຂ່າຍໄຟຟ້າເຂົ້າບ້ານ ໄດ້ 28 ບ້ານ, ກໍ່ສ້າງຫ້ອງການ, ສະໂມສອນບ້ານ ໄດ້ 16 ບ້ານ, ກໍ່ສ້າງຕະຫຼາດຊຸມຊົນ ໄດ້ 5 ແຫ່ງ, ນອກຈາກນີ້ ກໍ່ໄດ້ບຸກເບີກເນື້ອທີ່ການຜະລິດ, ຈັດຝຶກອົບຮົມດ້ານເຕັກນິກການປູກ, ການລ້ຽງ ໃຫ້ແກ່ປະຊາຊົນ ແລະ ອື່ນໆ.

– ການສ້າງຄອບຄົວ, ບ້ານພັດທະນາ ແລະ ບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ໄດ້ມີຄວາມຄືບໜ້າ ແລະ ບັນລຸຕາມຄາດໝາຍທີ່ວາງໄວ້ ຊຶ່ງສະແດງອອກ: ໄລຍະປີ 2016-2018 ຄອບຄົວພັດທະນາໄດ້ເພີ່ມຂຶ້ນ 15.402 ຄອບຄົວ, ເປັນ 921.524 ຄອບຄົວ, ກວມ 76,24%, ບ້ານພັດທະນາ ໄດ້ເພີ່ມຂຶ້ນ 253 ບ້ານ, ສະເພາະປີ 2018 ເພີ່ມຂຶ້ນ 221 ບ້ານ, ເປັນ 4.138 ບ້ານ, ກວມ 48,85%, ບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ເພີ່ມຂຶ້ນ 28 ບ້ານ, ສະເພາະ ປີ 2018 ເພີ່ມຂຶ້ນ 25 ບ້ານ, ເປັນ 56 ບ້ານ.

– ການແກ້ໄຂຄວາມທຸກຍາກ ກໍໄດ້ມີຄວາມຄືບໜ້າຢ່າງຕໍ່ເນື່ອງ ແລະ ໄດ້ເຮັດໃຫ້ອັດຕາຄວາມທຸກຍາກຂັ້ນຄອບຄົວ, ບ້ານຫຼຸດລົງ ແລະ ບັນລຸຕາມຄາດໝາຍທີ່ວາງໄວ້ເຊັ່ນ: ໄລຍະປີ 2016-2018 ຄອບຄົວທຸກຍາກໄດ້ຫຼຸດລົງ 11.725 ຄອບຄົວ, ສະເພາະປີ 2018 ຫຼຸດລົງ 5.179 ຄອບຄົວ, ຍັງເຫຼືອ 64.593 ຄອບຄົວ, ທຽບໃສ່ຄາດໝາຍ ລື່ນ 346 ຄອບຄົວ; ບ້ານທຸກຍາກ ໄດ້ຫຼຸດລົງ 153 ບ້ານ, ສະເພາະ ປີ 2018 ຫຼຸດລົງ 120 ບ້ານ (ຄາດໝາຍ 220 ບ້ານ), ຍັງເຫຼືອ 1.536 ບ້ານ; ເມືອງທຸກຍາກ ຍັງມີ 23 ເມືອງ.

– ການຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ປະຊາຊົນ ຢູ່ບັນດາຈຸດສຸມຈັດສັນຂອງສູນກາງ, ທ້ອງຖິ່ນ ແລະ ບໍລິເວນທີ່ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາຂອງລັດ ແລະ ເອກະຊົນ ໄດ້ດຳເນີນໄປຕາມແຜນການທີ່

ວາງໄວ້. ໃນນີ້ ການຈັດສັນປະຊາຊົນຢູ່ບັນດາຈຸດສຸມຂອງສູນກາງ ແລະ ທ້ອງຖິ່ນ ໄດ້ທັງໝົດ 2.529 ຄອບຄົວ ,ໃນນີ້ ຢູ່ແຂວງວຽງຈັນມີ 135 ຄອບຄົວ, ສະຫວັນນະເຂດມີ 349 ຄອບຄົວ, ສາລະວັນ ມີ 21 ຄອບຄົວ, ເຊກອງ ມີ 1.336 ຄອບຄົວ ແລະ ແຂວງອື່ນໆ; ສໍາລັບຢູ່ 4 ຈຸດສຸມຈັດສັນພູມລ□າເນົາຂອງສູນກາງ, ສາມາດຈັດສັນໄດ້ 3 ບ້ານ, ມີ 688 ຄອບຄົວ,ໃນນີ້ ຢູ່ຈຸດສຸມນໍ້າພຽງ, ເມືອງບໍ່ແຕນ ແຂວງໄຊຍະບູລີ ມີ 01 ບ້ານ, ມີ 50 ຄອບຄົວ; ຈຸດສຸມຍາມຈະເລີນ, ເມືອງທ່າໂທມ, ແຂວງໄຊສົມບູນ ມີ 01 ບ້ານ, ມີ 159 ຄອບຄົວ; ຈຸດສຸມປາກຍອງ, ເມືອງທ່າໂທມ, ແຂວງໄຊສົມບູນ ມີ 2 ຈຸດ, ມີ 257 ຄອບຄົວ ແລະ ຈຸດສຸມນາກຸມ ເມືອງບໍລິຄັນ, ແຂວງບໍລິຄໍາໄຊ ມີ 1 ຈຸດ, ມີ 222 ຄອບຄົວ. ສໍາລັບບໍລິເວນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຂອງລັດ ແລະ ເອກະຊົນ ກໍ່ໄດ້ຈັດຕັ້ງປະຕິບັດໄປຕາມແຜນການທີ່ວາງໄວ້ ເຊັ່ນ: ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າງຽບ 1 ໄດ້ສໍາເລັດການຍົກຍ້າຍຈັດສັນປະຊາຊົນ ໃນຈ□ານວນ 5 ບ້ານ, ມີ 517 ຄອບຄົວ, ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າຂອງໄຊຍະບູລີ ຈໍານວນ 16 ບ້ານ ມີ 899 ຄອບ ຄົວ, ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າທາ 1 ຈໍານວນ 37 ບ້ານ 1.707 ຄອບຄົວ, ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າອູ 2,5,6 ຈໍານວນ 18 ບ້ານ,ມີ 820 ຄອບຄົວ, ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າເທີນ 1 ຈໍານວນ 7 ບ້ານ, ມີ 624 ຄອບຄົວ; ສໍາລັບປະຊາຊົນຈໍານວນ 19 ບ້ານ ມີ 3.540 ຄອບຄົວ ທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້າເຊປຽນເຊນ□້ານ້ອຍ ທີ່ເມືອງສະໜາມໄຊ, ແຂວງອັດຕະປືນັ້ນ, ຄະນະກໍາມະການສະເພາະກິດແກ້ໄຂໄພພິບັດລະດັບຊາດ ກໍ່ໄດ້ສົມທົບກັບອົງການປົກຄອງທ້ອງ ຖິ່ນ ແລະ ຜູ້ພັດທະນາໂຄງການ ດໍາເນີນການຟື້ນຟູຜົນເສຍຫາຍ ໃຫ້ເຂົ້າສູ່ສະພາບປົກກະຕິ; ສະເພາະ ປະຊາຊົນຈໍານວນ 6 ບ້ານ ມີ 1.221 ຄອບຄົວ ທີ່ໄດ້ຮັບຜົນກະທົບຮ້າຍແຮງ ກໍ່ໄດ້ຈັດສັນທີ່ພັກອາໄສຊົ່ວຄາວໃນ 5 ຈຸດ ແລະ ກໍາລັງກະກຽມພື້ນທີ່ຮອງຮັບການຍົກຍ້າຍຈັດສັນຢູ່ບ່ອນ ໃໝ່ໃນຈໍານວນ 3 ຈຸດ.

- ການສົ່ງເສີມຈັດຕັ້ງກຸ່ມ ແລະ ສະຫະກອນ, ກໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ, ຊຶ່ງສາມາດຂຶ້ນບັນຊີກຸ່ມ ແລະ ສະຫະກອນ ໄດ້ 582 ກຸ່ມ ແລະ 48 ສະຫະກອນ (ໃນຈໍານວນ 4.339 ກຸ່ມ ແລະ ສະຫະກອນທັງໝົດ). ໃນນັ້ນ, ສະຫະກອນການຜະລິດກະສິກໍາມີ 21 ສະຫະກອນ, ສະຫະກອນສິນເຊື່ອມີ 27 ສະຫະກອນ, ມີ 3 ສະຫະ ກອນ ທີ່ເປັນຕົວແບບ ເຊັ່ນ: ສະຫະກອນສົ່ງເສີມການຜະລິດກະສິກໍາ ເມືອງທົ່ງສາ, ສະຫະກອນໃຈກາເຟ ແລະ ສະຫະ ກອນພູພຽງບໍລະເວນ CPC ແຂວງຈໍາປາສັກ; ໄດ້ປັບປຸງນິຕິກໍາ ແລະ ຄູ່ມື ການສ້າງຕັ້ງ ຄຸ້ມຄອງກຸ່ມ ແລະ ສະຫະກອນການຜະລິດກະສິກໍາ ເພື່ອເຜີຍແຜ່ແນະນໍາ ແລະ ຝຶກອົບຮົມສ້າງຄູຝຶກໃຫ້ໜ່ວຍງານທີ່ກ່ຽວຂ້ອງ ຂັ້ນແຂວງ ແລະ ເມືອງ.
- ກອງທຶນພັດທະນາບ້ານຂອງລັດຖະບານ (ບ້ວງທຶນ 500 ລ້ານກີບຕໍ່ເມືອງທຸກຍາກ) ໄດ້ສືບຕໍ່ເຄື່ອນໄຫວຢູ່ 58 ເມືອງ ຂອງ 17 ແຂວງ, 1 ນະຄອນຫຼວງວຽງຈັນ, ມີກອງທຶນທັງໝົດ 597 ກອງທຶນ, ມີສະມາຊິກທັງໝົດ 31.771 ຄອບຄົວ, ມີທຶນໝູນວຽນທັງໝົດ 72,58 ຕື້ກີບ, ທຽບໃສ່ປີຜ່ານມາ ມີເງິນທຶນໝູນວຽນເພີ້ມຂຶ້ນ 17,58 ຕື້ກີບ. ໃນນັ້ນ ແຫຼ່ງທຶນຈາກລັດຖະບານ: 30,45 ຕື້ກີບ, ເງິນຝາກສະມາຊິກ 34,33 ຕື້ກີບ, ທຶນສະສົມ 3,78 ຕື້ກີບ, ດອກເບັ້ຍສະສົມ ກ່ອນການປັນຜົນ: 3,63 ຕື້ກີບ; ເງິນສະຕິຂອງສະມາຊິກ 380,19 ລ້ານກີບ.
- ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ສືບຕໍ່ຈັດຕັ້ງປະຕິບັດກິດຈະກໍາຢູ່ 326 ບ້ານ, ໃນນີ້ 285 ບ້ານ ແມ່ນເປັນບ້ານທຸກຍາກທີ່ສຸດ ນອນໃນ 43 ເມືອງ ຂອງ 10 ແຂວງ ເປົ້າໝາຍ ມີ 335 ໂຄງການ, ມູນຄ່າ 87,96 ຕື້ກີບ ໃນນັ້ນ ທຶນສົມທົບລັດຖະບານມີ 38 ໂຄງການ, ມູນຄ່າ 11 ຕື້ກີບ, ທຶນຕ່າງປະເທດ ມີ 297 ໂຄງການ, ມູນຄ່າ 76,96 ຕື້ກີບ, ມີຜູ້ໄດ້ຮັບຜົນປະໂຫຍດໂດຍກົງ 168.000 ຄົນ.
- ການປ່ອຍສິນເຊື່ອຂອງທະນາຄານນະໂຍບາຍໃນປີ 2018 ໄດ້ຮັບທຶນທັງໝົດ 382,23 ຕື້ກີບ, ໃນນັ້ນໄດ້ປ່ອຍຕົວຈິງ 220,77 ຕື້ກີບ ເທົ່າກັບ 57,75% ຂອງແຜນການປີ 2018, ໄດ້ຂະຫຍາຍຕາໜ່າງການບໍລິການສິນເຊື່ອຢູ່ ເມືອງທຸກຍາກ ມູນຄ່າ 162,45 ຕື້ກີບ, ມີ 72 ເມືອງ, 3.415 ບ້ານ, ໃນນັ້ນມີບ້ານທຸກຍາກ 1.271 ບ້ານ; ຢູ່ບັນດາຈຸດສຸມຂອງສູນກາງ ແລະ ທ້ອງຖິ່ນມີມູນຄ່າ 26,04 ຕື້ກີບ ໃນ 56 ເມືອງ, 414 ບ້ານ, ຈຸດສຸມວຽກງານສາມສ້າງ ມູນຄ່າ 32,28 ຕື້ກີບ ຈໍານວນ 62 ເມືອງ, 146 ບ້ານ; ບັນດາກິດຈະກໍາທີ່ສຸມໃສ່ຄື: ປູກຝັງ 78,55 ຕື້ກີບ, ລ້ຽງສັດ 133,60 ຕື້ກີບ, ຫັດຖະກໍາ 6,26 ຕື້ກີບ, ອຸດສະຫະກໍາປຸງແຕ່ງ 2,26 ຕື້ກີບ, ບໍລິການ 100 ລ້ານກີບ ແລະ ກິດຈະກໍາອື່ນໆຈໍານວນໜຶ່ງ.

ຜ່ານການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ກໍໄດ້ມີຫຼາຍແບບຢ່າງທີ່ດີ ທີ່ເປັນບົດຮຽນໃຫ້ແກ່ພວກເຮົາໃນການກຳນົດນະໂຍບາຍ, ວິທີການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຢູ່ປະເທດເຮົາໃນຊຸມປີຕໍ່ໜ້າ ເຊັ່ນ: ບ້ານແບບຢ່າງ ເຮັດທົດລອງວຽກງານ 3 ສ້າງ; ຕົວແບບການສ້າງຈຸດສຸມພັດທະນາ ຈຸດສຸມຮ່ອມມີ ພັດທະນາຊາຍແດນ ລາວຫວຽດນາມ ຕາມຮູບແບບການພັດທະນາຊົນນະບົດໃໝ່ຂອງ ສສ. ຫວຽດນາມ ຢູ່ 4 ແຂວງ, 5 ເມືອງ; ຕົວແບບການແກ້ໄຂຄວາມທຸກຍາກ ຕາມຮູບແບບສ້າງບ້ານໃໝ່ໃນຊົນນະບົດ ຂອງ ສປ. ຈີນ ຢູ່ 2 ບ້ານ, 2 ເມືອງ ຂອງ 2 ແຂວງ, ບ້ານແບບຢ່າງໃນການຈັດສັນພູມລຳເນົາ ແລະ ອາຊີບ ເພື່ອປົກປັກຮັກສາເຂດຊາຍແດນ (ບ້ານນ້ຳພຽງ, ເມືອງບໍ່ແຕນ, ແຂວງໄຊຍະບູລີ); ບ້ານແບບຢ່າງການຍົກຍ້າຍຈັດສັນພູມລຳເນົາໃໝ່ ແລະ ອາຊີບໝັ້ນຄົງໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຂອງລັດ ແລະ ເອກະຊົນ (ບ້ານນາແກ່ນຄຳ, ເມືອງຫົງສາ, ແຂວງໄຊຍະບູລີ), ບ້ານແບບຢ່າງໃນການແກ້ໄຂຄວາມທຸກຍາກດ້ວຍລັດ, ຜູ້ປະກອບການ ແລະ ປະຊາຊົນພ້ອມກັນເຮັດ (ທ່ານ ເກຍ ປະທານ ບໍລິສັດນ້ຳດື່ມປາໂລມາ) ຢູ່ບ້ານຄຳປາແພ, ບ້ານປ່າກວ້ຍ, ເມືອງຈຳພອນ ແຂວງສະຫວັນນະເຂດ; ຕົວແບບການແກ້ໄຂຄວາມທຸກຍາກຕາມຮູບແບບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນຢູ່ບ້ານເປົ້າໝາຍຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ); ຕົວແບບການສ້າງບ້ານຊົນ ນະບົດໃໝ່ແບບມີສ່ວນຮ່ວມ ຕາມຫຼັກການ ເຊມາອຶນດົງຂອງສ ເກົາລີ ຢູ່ 30 ບ້ານ ຂອງສອງແຂວງວຽງຈັນ ແລະ ສະຫວັນນະເຂດ; ແບບຢ່າງໃນການຍົກຍ້າຍຈັດສັນພູມລຳເນົາຄົງທີ່ໃຫ້ປະຊາຊົນ ທີ່ທຳມາຫາກິນແບບເລື່ອນລອຍ ຢູ່ເຂດພູດອຍຊົນເຜົ່າ ໃຫ້ມີອາຊີບທີ່ໝັ້ນຄົງຢູ່ຫຼາຍທ້ອງຖິ່ນ; ການແກ້ໄຂວຽກເຮັດງານທຳ ສ້າງອາຊີບໃໝ່ແກ້ໄຂຄວາມ ທຸກຍາກ ຕິດພັນກັບການລົງທຶນໂດຍກົງຂອງພາກເອກະຊົນ ທາງດ້ານກະສິກຳ ປ່າໄມ້ ແລະ ການບໍລິການຈຳນວນນຶ່ງ ແລະ ອື່ນໆ.

## 4. <u>ບັນດາ 2 ແຜນດຳເນີນງານ ສະໜັບສະໜູນໃຫ້ ການຈັດຕັ້ງປະຕິບັດແຜນການທັງໝົດ</u>:

### 4.1 ແຜນດຳເນີນງານ ປ້ອງກັນ ແລະ ແກ້ໄຂ ຜົນກະທົບ ຈາກໄພພິບັດ:

ປີ **2018** ເປັນປີ ທີ່ໄດ້ຮັບຜົນກະທົບຢ່າງຮ້າຍແຮງ ຈາກໄພນ້ຳຖ້ວມ ເມື່ອທຽບໃສ່ໄລຍະຜ່ານມາ ເນື່ອງຈາກ ໄດ້ຮັບ ອິດທິພົນ ຈາກພາຍຸ ເຊີນຕິນ **(Son-Tinh)** ແລະ ໃນໄລຍະເດືອນ ສິງຫາ 2018 ກໍ່ມີພາຍຸ ເບບິນກາ (**Bebinca**) ອັນໄດ້ເຮັດໃຫ້ ບັນດາແຂວງ ໃນຂອບເຂດ ທົ່ວປະເທດ ໄດ້ຮັບຜົນກະທົບ ເຊັ່ນ: **<u>ການຜະລິດເຂົ້ານາປີ</u>:** ໄດ້ຮັບຜົນກະທົບ ນ້ຳຖ້ວມ ທັງໝົດ ປະມານ 119.600 ກວ່າເຮັກຕາ ແລະ ເສຍຫາຍ 90.670 ເຮັກຕາ. **<u>ການຜະລິດເຂົ້າໄຮ່</u>:** ໄດ້ຮັບຜົນກະທົບ ຈາກໄພພິບັດ ທັງໝົດ 5.900 ກວ່າເຮັກຕາ ແລະ ເສຍຫາຍ 4.000 ເຮັກຕາ. **<u>ການຜະລິດພືດ</u>:** ເສຍຫາຍ ປະມານ 11.600 ກວ່າເຮັກຕາ. **<u>ການລ້ຽງສັດ</u>:** ຈຳນວນ ສັດລ້ຽງ ທີ່ໄດ້ຮັບຜົນ ເສຍຫາຍ ທັງໝົດ ມີ ງົວ 7.424 ໂຕ, ຄວາຍ 3.686 ໂຕ, ແບ້ 1.587 ໂຕ, ໝູ 4.100 ໂຕ ແລະ ສັດປີກ ປະມານ 70.137 ໂຕ. ນອກນັ້ນ ຍັງມີໜອງປາ ໄດ້ຮັບ ຜົນເສຍຫາຍ ທັງໝົດ 5.387 ໜອງໃນນັ້ນ ແຂວງ ທີ່ຖືກເສຍຫາຍຫຼາຍ ແມ່ນ ແຂວງສະຫວັນນະເຂດ 1.146 ໜອງ, ແຂວງ ຄຳມ່ວນ 1.019 ໜອງ, ນະຄອນຫຼວງວຽງຈັນ 1.325 ໜອງ ແລະ ແຂວງອື່ນໆ. **<u>ດ້ານລະບົບຊົນລະປະທານ</u>:** ໄດ້ຮັບຜົນກະທົບຕໍ່ ລະບົບຊົນລະປະທານ ໃນຂອບເຂດ ທົ່ວປະເທດ, ຖືກຜົນກະທົບ ມີ 597 ໂຄງການ, ກະທົບຕໍ່ລະບົບຫົວງານ 188 ແຫ່ງ ແລະ ກະທົບຕໍ່ລະບົບຄອງ ເໝືອງ 236 ແຫ່ງ, ຊຶ່ງເນື້ອທີ່ ຖືກກະທົບ 6.906 ເຮັກຕາ ແລະ ເສຍຫາຍ 3.999 ເຮັກຕາ. ໃນນັ້ນ ແຂວງ ທີ່ຖືກກະທົບຫຼາຍແມ່ນແຂວງ ຄຳມ່ວນ 133 ແຫ່ງ, ອຸດົມໄຊ 68 ແຫ່ງ, ສະຫວັນນະເຂດ 62 ແຫ່ງ, ຫຼວງນ້ຳທາ 60 ແຫ່ງ ແລະ ແລະແຂວງ ອື່ນໆ. ຕໍ່ກັບຜົນກະທົບດັ່ງກ່າວໄດ້ມີມາດຕະການແກ້ໄຂເບື້ອງຕົ້ນຄື: (1) ໄດ້ມອບລົດຕິດຕັ້ງປ້ຳຈັກສູບນ້ຳເຄື່ອນທີ່ ຈຳນວນ 02 ຄັນ ເພື່ອຮັບຜິດຊອບວຽກຕ້ານແລ້ງ-ຕ້ານຖ້ວມ ທີ່ເກີດຂຶ້ນ, ແຂວງ ພາກເໜືອມີ 01 ຄັນ ປະຈຳຢູ່ແຂວງ ໄຊຍະບູລີ ຮັບຜິດຊອບ ແຂວງ ອຸດົມໄຊ, ຫຼວງນ້ຳທາ, ບໍ່ແກ້ວ ແລະ ຫຼວງພະບາງ, ສະເພາະແຂວງພາກໃຕ້ມີ 01 ຄັນ ປະຈຳຢູ່ແຂວງ ຈຳປາສັກ ຮັບຜິດຊອບ ແຂວງ ສາລະວັນ, ເຊກອງ ແລະ ອັດຕະປື. (2) ໄດ້ສົ່ງພະນັກງານວິຊາການ ພ້ອມລົດຕິດປ້ຳຈັກສູບນ້ຳເຄື່ອນທີ່ ຈຳນວນ 02 ຄັນ ລົງຊ່ວຍແກ້ໄຂສະພາບນ້ຳຖ້ວມຂັງ ຢູ່ເມືອງໜອງແຮດ ແຂວງ ຊຽງຂວາງ ໂດຍສົມທົບກັບ ພະແນກໂຍທາ ແລະ ຂົນສົ່ງ ແຂວງ ເພື່ອພ້ອມກັນວາງແຜນ ແລະ ດູດລະບາຍນ້ຳ ອອກ ຕາມຕົວເມືອງ ແລະ ເສັ້ນທາງຫຼວງ, (3) ປະສານສົມທົບກັບກົມອຸຕຸນິຍົມ ແລະ ອຸທົກກະສາດ ແລະ ບັນດາເຂື່ອນຕ່າງໆ ເພື່ອເອົາຂໍ້ມູນລະດັບນ້ຳ ມາກຳນົດໃສ່ແຜນທີ່ນ້ຳຖ້ວມ ຕາມຈຸດທີ່ມີຄວາມສ່ຽງ ໂດຍສະເພາະໃນເຂດ 7 ທົ່ງພຽງໃຫຍ່ ເພື່ອແຈ້ງເຕືອນ ແລະ ກະກຽມຮັບມືກັບສະພາບນ້ຳຖ້ວມທີ່ອາດຈະເກີດຂຶ້ນ. **<u>ດ້ານປ່າໄມ້</u>:**

ເຫັນວ່າ ບໍ່ມີການເສຍຫາຍ ນອກຈາກ ແຂວງ ອັດຕະປື. ເນື້ອທີ່ປ່າໄມ້ ອຸດສະຫະກຳ ເສຍຫາຍ ທັງໝົດ 118 ເຮັກຕາ, ໃນນີ້ ເສຍຫາຍໜັກ 57 ເຮັກຕາ ແລະ ເສຍຫາຍປານກາງ 61 ເຮັກຕາ. ເນື້ອທີ່ປ່າໄມ້ທຳມະຊາດ ເສຍຫາຍທັງໝົດ 2.940 ເຮັກຕາ, ໃນນັ້ນ ນອນໃນເຂດປ່າປ້ອງກັນ ພູພຽງບໍລິເວນ ປະມານ 950 ເຮັກຕາ ແລະ ເຂດປ່າອື່ນໆ 1.990 ເຮັກຕາ (ອີງຕາມຂໍ້ມູນພາບຖ່າຍດາວທຽມ).

ນອກນັ້ນ ຍັງມີການລະບາດ ຂອງ **ເພ້ຍຈັກຈັ່ນ ຫຼັງຂາວ ແລະ ໜູຂີ ເຊັ່ນ: ແຂວງ ໄຊຍະບູລີ** ໄດ້ພົບມີການລະບາດຂອງ ຂອງເພ້ຍຈັກຈັ່ນ ໃນເຂົ້ານາປີ ມີເນື້ອທີ່ນາຖືກຜົນກະທົບ ລະດັບເສດຖະກິດ ຢູ່ໃນ 8 ເມືອງ ຄື: ເມືອງເງິນ, ເມືອງຊຽງຮ່ອນ, ເມືອງ ຫົງສາ, ເມືອງ ໄຊຍະບູລີ, ເມືອງ ບໍ່ແຕນ, ເມືອງ ພຽງ, ເມືອງຄອບ ແລະ ເມືອງປາກລາຍ ມີ 71 ບ້ານ, ມີ 4.031 ຄອບຄົວ, ເນື້ອທີ່ ຖືກກະທົບ ທັງໝົດ 3.500 ເຮັກຕາ, ໃນນີ້, ຄາດຄະເນເນື້ອທີ່ເສຍຫາຍເບື້ອງຕົ້ນ 234 ເຮັກຕາ ແລະ ຢູ່ **ແຂວງ ເຊກອງ** ຈຳນວນ 114 ເຮັກຕາ. ສຳລັບ ການປ້ອງກັນ ແລະ ກຳຈັດ ກະຊວງ ກະສິກຳ ແລະ ປ່າໄມ້ ກໍ່ຄື ກົມປູກຝັງ ໄດ້ຈັດສົ່ງຢາປາບສັດຕູພືດ ແລະ ເຄື່ອງຊີດພົ່ນຢາ ມອບໃຫ້ກັບບັນດາຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ທີ່ເກີດມີການລະບາດ ຂອງແມງໄມ້ສັດຕູພືດ (ເພ້ຍຈັກຈັ່ນຫຼັງຂາວ) ໄດ້ແຕ່ງຕັ້ງພະນັກງານວິຊາການ ລົງສົມ ທົບກັບເມືອງ, ໃຫ້ຄຳແນະນຳວິທີນຳໃຊ້ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ໃນການປ້ອງກັນ ແລະ ກຳຈັດແມງແມງ ໄມ້-ສັດຕູພືດ ບໍ່ໃຫ້ລະບາດອອກໄປໃນວົງກວ້າງ. ນອກນັ້ນ ຍັງມີການລະບາດ ແລະ ການທຳລາຍ ຂອງ ໜູຂີ ຢູ່ ແຂວງ ຫຼວງນ້ຳທາ ເຂົ້ານາປີ 05 ເຮັກຕາ ແລະ ເຂົ້າໄຮ່ 2.188 ເຮັກຕາ, ພືດ 12 ເຮັກຕາ.

ບັນດາ ຜົນເສຍຫາຍ ທີ່ກ່າວມາ ຂ້າງເທິງນັ້ນ **ມີມູນຄ່າເສຍຫາຍ ທັງໝົດ ປະມານ 1.260 ຕື້ກີບ**, ໃນນັ້ນ ດ້ານປູກຝັງ ເສຍຫາຍ 850 ຕື້ກີບ, ດ້ານລ້ຽງສັດ ແລະ ການປະມົງ 90 ຕື້ກີບ ແລະ ດ້ານຊົນລະປະທານ 320 ຕື້ກີບ, ຕໍ່ບັນຫາດັ່ງກ່າວ ກະຊວງ ກະສິກຳ ແລະ ປ່າໄມ້ ແມ່ນໄດ້ມີການຮັບມືຢ່າງທັນການ ໂດຍໄດ້ແຕ່ງຕັ້ງ ທີມງານຂັ້ນສູນກາງ ລົງສົມທົບກັບ ບັນດາແຂວງ ໃນຂອບເຂດທົ່ວປະເທດ ເພື່ອໃຫ້ຊ່ວຍເຫຼືອປະຊາຊົນ ແລະ ກຳເກັບຂໍ້ມູນ ຜົນເສຍຫາຍ ແລະ ມາດຕະການແກ້ໄຂ ໃນຕໍ່ໜ້າ, ພ້ອມທັງໄດ້ອອກຄຳສັ່ງ ຂອງລັດຖະມົນຕີ ສະບັບເລກທີ 2065/ກປ ລົງວັນທີ 05 ກັນຍາ 2018 ວ່າດ້ວຍ ການເພີ່ມທະວີ ຄວາມເອົາໃຈໃສ່ ການບົວລະບັດຮັກສາການຜະລິດ ໃນທ້າຍລະດູຝົນ 2018 ການແກ້ໄຂຟື້ນຟູການຜະລິດ ພາຍຫຼັງຖືກຜົນກະທົບຈາກໄພພິບັດ, ການຜະລິດ ເຂົ້ານາແຊງ ແລະ ພືດລະດູແລ້ງ ປີ 2018-2019. ໂດຍສະເພາະ ແມ່ນ ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ, ຈັດຕັ້ງກັນລົງ ຊຸກຍູ້ນຳພາ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ, ສູນ, ສະຖານີ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ກວດກາ ການບົວລະບັດເຂົ້ານາປີ, ເຂົ້າໄຮ່ ແລະ ພືດລະດູຝົນ ໃນບ່ອນທີ່ບໍ່ຖືກເສຍຫາຍ ຈາກໄພນ້ຳຖ້ວມຢ່າງທົ່ວເຖິງຕົວຈິງ, ເພື່ອສູ້ຊົນເຮັດໃຫ້ຜະລິດຕະພາບໄດ້ຕາມຄາດໝາຍວາງໄວ້.

ພ້ອມດຽວກັນນັ້ນ ຂະແໜງ ກະສິກຳ ແລະ ປ່າໄມ້ ກໍ່ໄດ້ສະເໜີແຜນຄວາມຕ້ອງການງົບປະມານ ໃນການຟື້ນຟູຜົນກະທົບຈາກໄພພິບັດ ຈາກລັດຖະບານ, ຊຶ່ງໄດ້ຮັບງົບປະມານ ສຸກເສີນ ຈຳນວນ 40 ຕື້ກີບ, ໃນນັ້ນ ໄດ້ຈັດສັນໃສ່ການຟື້ນຟູສ້ອມແປງຊົນລະປະທານ ຈຳນວນ 35 ຕື້ກີບ ແລະ ຈັດຊື້ແນວພັນເຂົ້າ ຈຳນວນ 5 ຕື້ກີບ. ໄດ້ຮັບການຊ່ວຍເຫຼືອຈາກ ກະຊວງພະລັງງານ ແລະ ບໍ່ແຮ່ (ບໍລິສັດໄຟຟ້າລາວ ມະຫາຊົນ) ເປັນຈຳນວນເງິນ 3 ຕື້ກີບ (ນຳໃຊ້ໃນການ ຊື້ອຸປະກອນການະລິດ, ຢາປ້ອງກັນ ແລະ ປິ່ນປົວພະຍາດສັດ, ຢາປາບສັດຕູພືດ ແລະ ອື່ນໆ. ງົບປະມານ ຈາກການລະດົມພາຍໃນ ຈຳນວນ 1,15 ຕື້ກີບ. ໄດ້ຮັບການຊ່ວຍເຫຼືອ ດ້ານແນວພັນ ຈາກບັນອົງການຈັດຕັ້ງສາກົນ ແລະ ບັນດາບໍລິສັດ ລົງທຶນຕ່າງປະເທດ ຢູ່ ສປປລາວ ຈຳນວນໜຶ່ງ ແລະ ໄດ້ຂົນຂວາຍ ການຊ່ວຍເຫຼືອ ຈາກພາຍໃນ ແລະ ອົງການຈັດຕັ້ງສາກົນ ເຊັ່ນ: ອົງການ ອາຫານ ແລະ ການກະເສດ (FAO) ຈຳວນ 800.000 ໂດລາສະຫະລັດ (ສຸມໃສ່ ສະເພາະ ແຂວງ ຄຳມ່ວນ), ໂຄງການຟື້ນຟູ ການຄ້ຳປະກັນສະບຽງອາຫານ ສຳລັບປະຊາຊົນທີ່ໄດ້ຮັບຜົນກະທົບ ຈາກໄພນ້ຳຖ້ວມ ທີ່ ແຂວງ ອັດຕະປື ຈຳນວນ 200.000 ເອີໂຣ (ຊ່ວຍເຫຼືອ ແຂວງ ອັດຕະປື) ທຶນການຊ່ວຍເຫຼືອ ທັງໝົດແມ່ນ ກຳລັງຢູ່ໃນຂັ້ນຕອນ ກະກຽມເອກະສານ.

### 4.2 ແຜນດຳເນີນງານ ພັດທະນາ ກົງຈັກ ການຈັດຕັ້ງ ແລະ ບຸກຄະລາກອນ:

**1). ວຽກກົງຈັກການຈັດຕັ້ງ.**

ສຳເລັດການຈັດກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ວ່າດ້ວຍການປັບປຸງຄຸນນະພາບການເຄື່ອນໄຫວຂອງກົງຈັກການຈັດຕັ້ງ ແລະ ການບັນຈຸລັດຖະກອນໃໝ່ສະບັບເລກທີ 03/ນຍ, ລົງວັນທີ 09 ກຸມພາ 2018 ໂດຍຄະນະວິຊາການຈາກກະຊວງພາຍໃນລົງມາຕິດຕາມ, ຊຸກຍູ້ ແລະ ແນະນ□າ ຊຶ່ງໄດ້ຄົ້ນຄວ້າສະພາບກົງຈັກ

ການຈັດຕັ້ງປັດຈຸບັນຂອງຫ້ອງການ, ບັນດາກົມ, ອົງການລັດທຽບເທົ່າກົມອ້ອມຂ້າງກະຊວງ ແລະ ບັນດາພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ, ນະຄອນຫຼວງວຽງຈັນ ເພື່ອເປັນບ່ອນອີງໃນການຄົ້ນຄວ້າປັບປຸງໃຫ້ສອດຄ່ອງຕາມຄໍາສັ່ງສະບັບເລກທີ 03/ນຍ ໂດຍສະເພາະແມ່ນກົງຈັກຂັ້ນພະແນກຂອງກົມ ແລະ ອົງການລັດທຽບເທົ່າກົມ ໃຫ້ກະທັດລັດ, ໜັກແໜ້ນ, ມີປະສິດທິຜົນ.ປັດຈຸບັນກໍາລັງນໍາສະເໜີຄະນະປັບປຸງກົງຈັກການຈັດຕັ້ງຂັ້ນກະຊວງເພື່ອຕົກລົງເປັນເອກະພາບກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງຂັ້ນພະແນກຂອງບັນດາກົມ ແລະທຽບເທົ່າຄືນໃໝ່.ວຽກງານການກໍານົດຕໍາແໜ່ງງານໄດ້ຄົ້ນຄວ້າ ແລະສັງລວມຂໍ້ມູນການກໍານົດຕໍາແໜ່ງງານແຕ່ ປີ 2018-2021 ຂັ້ນກົມ ແລະ ທຽບເທົ່າສໍາເລັດ 21 ຫົວໜ່ວຍຂອງຈໍານວນທັງໝົດ 23 ຫົວໜ່ວຍ;ສໍາລັບການກໍານົດຕໍາແໜ່ງງານຂອງພະແນກກະສິກໍາ ແລະປ່າໄມ້ ແຂວງຈໍານວນທັງໝົດ 18 ແຂວງ, ປັດຈຸບັນສໍາເລັດ 7 ພາກສ່ວນ.

**2). ວຽກຄຸ້ມຄອງພະນັກງານ-ລັດຖະກອນ**

ໄດ້ຖືວຽກງານພະນັກງານເປັນວຽກງານທີ່ສໍາຄັນຕົ້ນຕໍ ໂດຍໄດ້ເອົາໃຈໃສ່ຕໍ່ການຄຸ້ມຄອງແລະ ການບໍາລຸງກໍ່ສ້າງພະນັກງານ-ລັດຖະກອນ ຢ່າງເປັນລະບົບຕໍ່ເນື່ອງ. ໄດ້ເອົາໃຈໃສ່ໃນການສ້າງແຜນກໍານົດພະນັກງານ ເພື່ອຈັດວາງພະນັກງານ ທີ່ມີຄວາມຮູ້ຄວາມສາມາດສືບທອດປ່ຽນແທນ.ການຄຸ້ມຄອງນໍາໃຊ້ພະນັກງານ ແມ່ນໄປຄຽງຄູ່ກັບການປະຕິ ບັດນະໂຍບາຍທີ່ກໍານົດໄວ້.ຖັນແຖວພະນັກງານ-ລັດຖະກອນ ທົ່ວຂະແໜງກະສິກໍາ ແລະ ປ່າໄມ້ ໄດ້ຮັບການພັດທະນາ ທາງດ້ານປະລິມານ ແລະ ຄຸນນະພາບ ເປັນກ້າວໆມາ. ປັດຈຸບັນທົ່ວຂະແໜງກະສິກໍາ ແລະ ປ່າໄມ້ ມີພະນັກງານ-ລັດຖະກອນ ທັງໝົດ 11.151 ຄົນ (ຍິງ 3.057 ຄົນເທົ່າກັບ 27,42%, ຊາຍ 8.094 ຄົນ ເທົ່າກັບ 72,58%). ຢູ່ຂັ້ນກະຊວງສັງກັດບັນດາກົມ ແລະ ທຽບເທົ່າມີ 1.631 ຄົນ (ຍິງ 537, ຊາຍ 1.094 ຄົນ) ເທົ່າກັບ 14,62%, ຂັ້ນແຂວງ ມີ 3.533 ຄົນ (ຍິງ 931, ຊາຍ 2.620 ຄົນ) ເທົ່າກັບ 31,68%, ຂັ້ນເມືອງ ມີ 5.631ຄົນ (ຍິງ 1.430, ຊາຍ 4.201 ຄົນ) ເທົ່າກັບ 50,50% ແລະ ສັງກັດຢູ່ 4 ວິທະຍາໄລ ແລະ 1 ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບກະຊວງ ມີ 356 ຄົນ (ຍິງ 159, ຊາຍ 197 ຄົນ) ເທົ່າກັບ 3,20%. ໃນຈໍານວນລັດຖະກອນທັງໝົດປະກອບມີ ລະດັບປະລິນຍາເອກ 55 ຄົນ ເທົ່າກັບ 0,49% (ຍິງ 10, ຊາຍ 45 ຄົນ),ປະລິນຍາໂທ 735 ຄົນກວມເອົາ 6,59% (ຍິງ 108, ຊາຍ 627 ຄົນ); ປະລິນຍາຕີ 4.041 ຄົນກວມເອົາ 36,24% (ຍິງ 1.101, ຊາຍ 2.940 ຄົນ); ຊັ້ນສູງ 4.559 ຄົນກວມເອົາ 40,88% (ຍິງ 1.316, ຊາຍ 3.243 ຄົນ), ຊັ້ນກາງ ມີ 1.613 ເທົ່າກັບ 14,46% (ຍິງ 483, ຊາຍ 1.130 ຄົນ), ຊັ້ນຕົ້ນ ມີ 124 ຄົນ 1,11% (ຍິງ 34, ຊາຍ 90 ຄົນ), ບໍ່ມີວິຊາສະເພາະ ຈໍານວນ 24 ຄົນ ເທົ່າກັບ 0,22% (ຍິງ 5, ຊາຍ 19 ຄົນ). ໃນປີ 2018 ໄດ້ຮັບອະນຸມັດຕົວເລກລັດຖະກອນໃໝ່ຈໍານວນ 71 ຕົວເລກ ຊຶ່ງໄດ້ບັນຈຸຄື: ບັນດາກົມ, ສະຖາບັນ, ສູນ ອ້ອມຂ້າງກະຊວງ 18 ຕົວເລກ ເທົ່າກັບ 25,4%; ບັນດາວິທະຍາໄລກະສິກໍາ ແລະ ປ່າໄມ້ ແລະ ໂຮງຮຽນ ຈໍານວນ 10 ຕົວເລກ ເທົ່າກັບ 14% ; ຂັ້ນແຂວງ 16 ຕົວເລກ ເທົ່າກັບ 22,5%; ຂັ້ນເມືອງ ຈໍານວນ 20 ຕົວເລກ ເທົ່າກັບ 28,2%; ໃຫ້ເມືອງ 3 ສ້າງ ຈໍານວນ 07 ຕົວເລກເທົ່າກັບ 9,9%.

ວຽກງານຄຸ້ມຄອງພະນັກງານ-ລັດຖະກອນ ໄດ້ນໍາໃຊ້ລະບົບທັນສະໄໝ, ໄດ້ຮັບການອະນຸມັດອອກບັດພະນັກງານ-ລັດຖະກອນ ສັງກັດບັນດາກົມ ແລະ ທຽບເທົ່າຈາກກະຊວງພາຍໃນ ຈໍານວນທັງໝົດ 1.761 ຄົນ (ຍິງ 625 ຄົນ). ໄດ້ຈັດຕັ້ງເຊື່ອມຊຶມ, ເຜີຍແຜ່ ດໍາລັດ ແລະ ຄໍາແນະນໍາການຈັດຕັ້ງປະຕິບັດ ດໍາລັດວ່າດ້ວຍ ການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນໃຫ້ພະນັກງານ-ລັດຖະກອນ ຫ້ອງການ, ບັນດາກົມ, ບັນດາອົງການຈັດ ຕັ້ງລັດທຽບເທົ່າກົມ ທີ່ຂຶ້ນກັບກະຊວງກະສິກໍາ ແລະ ປ່າໄມ້ຊຶ່ງໄດ້ເລີ່ມຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນຕາມດໍາລັດໃໝ່ປະຈໍາປີ 2018.

**3) ວຽກການພັດທະນາບຸກຄະລາກອນ:**

ໄດ້ຈັດຕັ້ງເຊື່ອມຊຶມ, ເຜີຍແຜ່ ດໍາລັດສະບັບເລກທີ 294/ລບ, ລົງວັນທີ 04/09/2017 ວ່າດ້ວຍຝຶກອົບຮົມ ແລະ ພັດທະນາພະນັກງານລັດຖະກອນ; ສໍາເລັດການແຕ່ງຕັ້ງ ຄະນະກໍາມາທິການ ເພື່ອການພັດທະນາຊັບພະຍາກອນມະນຸດ ຂອງກະຊວງ ກະສິກໍາ ແລະປ່າໄມ້; ການແຕ່ງຕັ້ງຄະນະຮັບຜິດຊອບຝຶກອົບຮົມດ້ານເຕັກນິກວິຊາການ ກະສິກໍາ ແລະປ່າໄມ້ ໃຫ້ວິຊາການຂັ້ນບ້ານ ແລະ ຊາວກະສິກອນ; ສໍາເລັດ ການເກັບກໍາຂໍ້ມູນດ້ານຂີດຄວາມສາມາດ ຂອງພະນັກ ງານລັດຖະກອນ ທົ່ວກະຊວງກະສິກໍາ ແລະ ປ່າໄມ້ ພ້ອມທັງບັນທຶກເຂົ້າໃນລະບົບຖານຂໍ້ມູນ ພ້ອມທັງສໍາເລັດ

ການສ້າງແຜນກໍ່ສ້າງພະນັກງານລັດຖະກອນ ທີ່ໄປຮຽນຕ່າງປະເທດ 20192025 ສົ່ງໃຫ້ກົມກິດຈະການນັກສຶກສາ, ກະຊວງ ສຶກສາທິການ ແລະກິລາ. ໃນປີ 2018 ໄດ້ສົ່ງພະນັກງານລັດຖະກອນ ໄປຍົກລະດັບ ທາງດ້ານວິຊາສະເພາະ ໃນລະດັບຕ່າງໆ ຢູ່ພາຍໃນ ແລະຕ່າງປະເທດ ຈຳນວນທັງໝົດ 222 ຄົນ (ຍິງ 71 ຄົນ): ຢູ່ພາຍໃນປະເທດ ຈຳນວນ 185 ຄົນ (ຍິງ 61) ໃນນີ້ ລະດັບປະລິນຍາໂທ 38 ຄົນ (ຍິງ 14 ), ລະດັບປະລິນຍາຕີ 76 ຄົນ (ຍິງ 16), ຊັ້ນສູງ 71 ຄົນ (ຍິງ 31); ຢູ່ຕ່າງປະເທດ ຈຳນວນ 37 ຄົນ (ຍິງ 20) ໃນນີ້ ລະດັບປະລິນຍາເອກ 5ຄົນ (ຍິງ 1), ລະດັບປະລິນຍາໂທ 30 ຄົນ (ຍິງ 9).ໃນປີ 2018 ມີພະນັກງານຮຽນຈົບຢູ່ພາຍໃນ ແລະ ຕ່າງປະເທດ ຈຳນວນທັງໝົດ 373 ຄົນ (ຍິງ 82) ໃນນີ້ ລະດັບປະລິນຍາເອກ 3 ຄົນ (ຍິງ 0), ລະດັບປະລິນຍາໂທ 86 ຄົນ (ຍິງ 17), ລະດັບປະລິນຍາຕີ 175 ຄົນ (ຍິງ 31), ລະດັບຊັ້ນສູງ 109 ຄົນ (ຍິງ 29). ສຳລັບການຍົກລະດັບໄລຍະສັ້ນ, ໃນປີ 2018 ພະນັກງານລັດຖະກອນ ໄດ້ຮັບການຝຶກອົບຮົມ ໃນຫົວຂໍ້ວິຊາສະເພາະ ຕາມຕຳແໜ່ງງານໜ້າທີ່ຮັບຜິດຊອບ ຢູ່ພາຍໃນປະເທດຈຳນວນ 392 ເທື່ອຄົນ (ຍິງ 120 ); ເຂົ້າຮ່ວມຝຶກອົບຮົມ, ສຳມະນາ, ທັດສະນະສຶກສາຢູ່ຕ່າງປະເທດ ຈຳນວນ 536 ເທື່ອຄົນ (ຍິງ132).

ການສ້າງວິຊາການຂັ້ນບ້ານ ໄດ້ຈັດຝຶກອົບຮົມເຕັກນິກວິຊາການ ດ້ານກະສິກຳໃຫ້ພະນັກງານ ທີ່ປະຈຳຢູ່ບັນດາສູນສະຖານີ 19 ເມືອງເປົ້າໝາຍ ຂອງ 3 ແຂວງຄື: ແຂວງບໍລິຄຳໄຊ, ໄຊຍະບູລີ ແລະ ນະຄອນຫຼວງວຽງຈັນ ຢູ່ທີ່ສູນພັດທະນາເຕັກນິກວິຊາການ ດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ ເພື່ອສ້າງຄວາມຊຳນານລົງເລິກສະເພາະດ້ານໃຫ້ແກ່ພະນັກງານ ປະຈຳສູນສະຖານີ ເພື່ອເປັນຄູຝຶກດ້ານວິຊາການປູກ, ການລ້ຽງ, ປັບປຸງດິນ, ຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຄຸ້ມຄອງການນຳໃຊ້ ນ້ຳຊົນລະປະທານ ໃຫ້ແກ່ປະຊາຊົນ ຢູ່ຂັ້ນບ້ານ ຈຳນວນ 40 ຄົນ (ຍິງ 07 ຄົນ).

**4). ວຽກຄຸ້ມຄອງວິທະຍາໄລ ແລະ ໂຮງຮຽນ.**

ບັນດາ 4 ວິທະຍາໄລ ກປ ແລະ ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດຕັ້ງການຮຽນ-ການສອນຕາມຫລັດສູດໃໝ່ທີ່ໄດ້ຮັບອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ,ໂດຍເນັ້ນໃຫ້ມີຄວາມຊຳນານງານ ຊຶ່ງປະຕິບັດຕົວຈິງຫຼາຍກວ່າພາກທິດສະດີ (ອັດຕາສ່ວນ 60:40) ມີ 11 ສາຂາວິຊາຄື: ສາຂາວິຊາປູກຝັງ, ລ້ຽງສັດ, ປ່າໄມ້, ທຸລະກິດກະສິກຳ, ການປະມົງ, ສັດຕະວະແພດ, ວິທະຍາສາດດິນ, ປ້ອງກັນພືດ, ຊົນລະ ປະທານ, ຊັບພະຍາກອນນ້ຳ, ກົນຈັກກະສິກຳ. ສົກຮຽນປີ 2018-2019 ໄດ້ຮັບນັກຮຽນເຂົ້າຮຽນ ທັງໝົດ 522ຄົນ, ຍິງ 235 (ເທົ່າກັບ 41% ຂອງແຜນການຮັບທັງໝົດ 1.202 ຕົວເລກ) ຄື: ລະດັບຊັ້ນສູງລວມ 502 ຄົນ, ຍິງ 227 (ປູກຝັງ 96, ລ້ຽງສັດ 152, ປ່າໄມ້ 62, ທຸລະກິດກະສິກຳ 27, ການປະມົງ 19, ສັດຕະວະແພດ 25, ປ້ອງກັນພືດ 12, ວິທະຍາ ສາດດິນ 10, ຊົນລະປະທານ 65, ຊັບພະຍາກອນນ້ຳ 28, ກົນຈັກກະສິກຳ 6; ລະດັບຊັ້ນກາງ: 20 ຄົນຍິງ 8 (ປູກຝັງ 9, ລ້ຽງສັດ 9, ປ່າໄມ້ 2, ຊົນລະປະທານ 2). ຈຳນວນນັກຮຽນ ທີ່ຮຽນຈົບສົກປີ 2017-2018 ມີທັງໝົດ 1.000 ຄົນ (ຍິງ 448) ຄື: ສາຊາວິຊາປູກຝັງ 252 ຄົນ(ຍິງ 134), ລ້ຽງສັດ ແລະ ການປະມົງ 342 ຄົນ(ຍິງ 169), ປ່າໄມ້ 200 ຄົນ (ຍິງ 66), ທຸລະກິດກະສິກຳ 62 ຄົນ(ຍິງ 37), ຊົນລະປະທານ 99 ຄົນ(ຍິງ 18) ແລະ ຊັບພະຍາກອນນ້ຳ 45 ຄົນ(ຍິງ 24).

ສຳເລັດການສ້າງແຜນແມ່ບົດການພັດທະນາພື້ນຖານໂຄງລ່າງຂອງ 4 ວິທະຍາໄລ ແລະ ໂຮງຮຽນ ຮອດປີ 2028ໂດຍການ ສະໜັບສະໜູນ ທາງດ້ານວິຊາການຈາກ SKAT (ສູນຄົ້ນຄວ້າ ແລະ ທີ່ປຶກສາເພື່ອການພັດທະນາຂອງປະເທດ ສະວິດເຊີແລນ) ພ້ອມຈັດສັນງົບປະມານການກໍ່ສ້າງພື້ນຖານໂຄງລ່າງ ແລະ ເຄື່ອງມືອຸປະກອນສຳລັບຟາມຂອງແຕ່ລະວິທະຍາໄລ. ສະໜັບສະໜູນ ບັນດາວິທະຍາໄລທັງໝົດ ໃຫ້ມີລະບົບຄຸ້ມຄອງບໍລິຫານທີ່ດີ ໂດຍມີໜ່ວຍງານທີ່ດຳເນີນວຽກເຊັ່ນ: ຂະແໜງພັດທະນາດ້ານວິຊາການ, ຄະນະພັດທະນາຫຼັກສູດ, ທີມງານຮັບຜິດຊອບປະຈຳວິຊາສິດ ສອນແລະອື່ນໆ.

## III. ວຽກງານນະໂຍບາຍ ແລະ ນິຕິກຳ.

ວຽກງານນະໂຍບາຍ ແລະ ນິຕິກ□ທີ່ສະໜັບສະໜູນໃຫ້ແກ່ການຈັດຕັ້ງປະຕິບັດແຜນການຂ້າງເທິງນັ້ນ ຄືດັ່ງນີ້:

**1). ວຽກງານນະໂຍບາຍ:** ໄດ້ສ້າງຄວາມເຂັ້ມແຂງ ກ່ຽວກັບການສ້າງນະໂຍບາຍ ໃຫ້ພະນັກງານພາຍໃນກົມນະໂຍບາຍ ແລະ ນິຕິກຳ 8 ຄັ້ງ, ກົມຕ່າງໆ ພາຍໃນກະຊວງ 1 ຄັ້ງ ແລະ ທ້ອງຖິ່ນ 2 ຄັ້ງ; ໄດ້ຮ່າງ ຂັ້ນຕອນສ້າງ

ແລະ ຮັບຮອງ ນະໂຍບາຍ ໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ; ສຳເລັດສ້າງຫຼັກສູດຝຶກອົບຮົມ ສ້າງຄວາມເຂັ້ມແຂງ ຫົວຂໍ້ "ຄວາມຮູ້ພື້ນຖານກ່ຽວກັບການສ້າງນະໂຍບາຍ ໃນການພັດທະນາກະສິກຳ, ປ່າໄມ້ ແລະ ຊົນນະບົດ"; ສຳເລັດຂຽນບົດສັງເຂບດ້ານນະໂຍບາຍ 3 ສະບັບ: (1) ການນຳໃຊ້ຝຸ່ນໄນໂຕຣເຈນ ທີ່ມີປະສິດທິຜົນ ເພື່ອການປູກເຂົ້າ ແລະ ພືດຜັກ, (2) ການຈັດການຄຸ້ມຄອງນ້ຳໃນໜອງ ເພື່ອການປູກພືດໃນເຂດພື້ນທີ່ແຫ້ງ, (3) ການຄຸ້ມຄອງການນຳໃຊ້ຢາປາບສັດຕູພືດລະດັບເມືອງ; ສຳເລັດເກັບກຳຂໍ້ມູນການສະໜັບສະໜູນລະບົບນະວັດຕະກຳດ້ານກະສິກຳຂອງອົງການຕ່າງໆ ເພື່ອກຳນົດນະໂຍບາຍກ່ຽວກັບລະບົບກະສິກຳຮ່ວມສຳພັນ; ໄດ້ສະເໜີນະໂຍບາຍການແກ້ໄຂຟື້ນຟູການຜະລິດ ພາຍຫຼັງຖືກຜົນກະທົບຈາກໄພພິບັດ, ການຜະລິດເຂົ້າ ແລະ ພືດລະດູແລ້ງ ປີ 2018-2019; ສຳເລັດການສັງລວມຂໍ້ມູນການນຳໃຊ້ເນື້ອທີ່ດິນເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ ພ້ອມທັງລາຍງານໃຫ້ກະຊວງແຜນການ ແລະ ການລົງທຶນ; ແລະ ສຳເລັດຮ່າງແຜນດຳເນີນງານ ແລະ ໂຄງປະກອບແຜນແມ່ບົດການພັດທະນາຊົນລະກະເສດ ແລະ ການຈັດການນ້ຳ.

**2). ວຽກງານນິຕິກຳ:** ສຳເລັດການສ້າງ ແລະ ປັບປຸງນິຕິກຳຫຼາຍສະບັບ ເປັນຕົ້ນ: (1) ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ (ຖືກຮັບຮອງ, ປະກາດໃຊ້ ແລະ ໄດ້ຈັດຕັ້ງເຜີຍແຜ່ຢູ່ 3 ພາກຂອງທົ່ວປະເທດ); **(2)** ປັບປຸງກົດໝາຍວ່າດ້ວຍປ່າໄມ້ (ໄດ້ຜ່ານກອງປະຊຸມລັດຖະບານ ແລະ ກຽມນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດໃນຕົ້ນປີ 2019); **(3)** ຄົ້ນຄວ້າຜັນຂະຫຍາຍກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ອອກເປັນ 03 ຮ່າງດຳລັດ (ວ່າດ້ວຍອາຫານສັດ, ວ່າດ້ວຍຢາສັດຕະວະແພດ ແລະ ແລະ ຮ່າງດຳລັດ ວ່າດ້ວຍຂ້າສັດ ແລະ ກວດກາອະນາໄມຊີ້ນ) ກຽມນຳເຂົ້າຜ່ານກອງປະຊຸມລັດຖະບານໃນຕົ້ນປີ 2019 ແລະ ສ້າງຮ່າງຂໍ້ຕົກລົງ ລມຕ ວ່າດ້ວຍເງື່ອນໄຂໃນການນຳເຂົ້າສັດມີຊີວິດ ແລະ ຜະລິດຕະພັນສັດເຂົ້າ ສປປ ລາວ; **(4)** ຄົ້ນຄວ້າຜັນຂະຫຍາຍກົດໝາຍວ່າດ້ວຍການປ້ອງກັນ ແລະ ກັກກັນພືດ ອອກເປັນຕິຕິກຳໃຕ້ກົດໝາຍ (ຮ່າງດຳລັດແນວພັນພືດ, ຮ່າງຂໍ້ຕົກລົງ ລມຕ ວ່າດ້ວຍການຄຸ້ມຄອງທຸລະກິດຢາປາບສັດຕູພືດ, ຮ່າງຂໍ້ຕົກລົງ ລມຕ ວ່າດ້ວຍການຂຶ້ນທະບຽນຢາປາບສັດຕູພືດ, ຮ່າງຂໍ້ຕົກລົງ ລມຕ ວ່າດ້ວຍບັນຊີ ພືດ, ຜະລິດຕະພັນພືດ ແລະວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ສປປ ລາວ, ຮ່າງຂໍ້ຕົກລົງ ລມຕ ວ່າດ້ວຍການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແລະ ຮ່າງຂໍ້ຕົກລົງ ລມຕ ວ່າດ້ວຍມາດຕະການສຸຂານາໄມສຳລັບການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ); **(5)** ສືບຕໍ່ຄົ້ນຄວ້າ ແລະ ສ້າງຮ່າງດຳລັດວ່າດ້ວຍການຄຸ້ມຄອງທີ່ດິນກະສິກຳ ເພື່ອໃຫ້ໄດ້ນຳສະເໜີຕໍ່ກອງປະຊຸມລັດ ຖະບານ ໃນທ້າຍປີ 2019. ນອກນັ້ນຍັງສຳເລັດການສ້າງຫຼັກສູດຝຶກອົບຮົມກ່ຽວກັບ ເຕັກນິກການສ້າງນິຕິກຳ, ເຕັກນິກການກວດກາຄວາມສອດຄ່ອງຂອງຮ່າງນິຕິກຳ, ເຕັກນິກການສ້າງເອກະສານທາງລັດຖະການ ແລະ ຄວາມຮູ້ພື້ນຖານກ່ຽວກັບກົດໝາຍຂະແໜງການກະສິກຳ ແລະ ປ່າໄມ້ (ປະຈຸບັນກຳລັງ ກະກຽມຈັດພິມ ແລະ ແຈກຢາຍ); ສຳເລັດການຈັດຝຶກອົບຮົມກ່ຽວກັບເຕັກນິກການສ້າງນິຕິກຳໃຫ້ຜູ້ຮັບຜິດຊອບວຽກງານນິຕິກຳຂອງຫ້ອງການ, ບັນດາກົມ, ສະຖາບັນອ້ອມຂ້າງກະຊວງ ຄັ້ງທີ III; ສຳເລັດການຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບັນດາຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ນຳເຂົ້າຜ່ານກອງປະຊຸມລັດຖະບານຫຼາຍກວ່າ 30 ສະບັບ, ຕໍ່ບັນ ດາຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງຂະແໜງການອື່ນຫຼາຍກວ່າ 40 ສະບັບ; ເຂົ້າຮ່ວມຕິດຕາມການດ□າເນີນກອງປະຊຸມສະໄໝສາມັນເທື່ອທີ 5 ແລະ 6 ຂອງສະພາແຫ່ງຊາດຊຸດທີ VIII ປີ 2018 ທີ່ຫ້ອງປະຊຸມສະພາແຫ່ງຊາດ.

**3). ວຽກງານສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້:** ໄດ້ສົມທົບກັບບັນດາກົມ, ສະຖາບັນອ້ອມຂ້າງກະຊວງ ສັງລວມລາຍຊື່ຈາກພາກສ່ວນກ່ຽວຂ້ອງ ແລະ ຄົ້ນຄວ້າສະເໜີແຕ່ງຕັ້ງສະມາຊິກສະພາວິທະຍາສາດເຕັກ ນິກກະສິກຳ ແລະ ປ່າໄມ້.

## IV. ວຽກກວດກາລັດ:

### 1. ກວດກາຕາມແຜນການ:

ຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດ ພາລະບົດບາດຂອງ ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ປະຈຳປີ 2018. ການຈັດຕັ້ງປະຕິບັດ ແຜນພັດທະນາກະສິກຳ ແລະ ປ່າໄມ້ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ປະຈຳປີ 2018.

ເຂົ້າຮ່ວມເປັນຄະນະກຳມະການ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງໃນການລົງ ຕິດຕາມກວດກາການຈັດຕັ້ງປະຕິບັດ ບັນດາໂຄງການລົງທຶນຂອງລັດ ແລະຊ່ວຍເຫຼືອຈາກສາກົນ ທີ່ໄດ້ຈັດຕັ້ງປະຕິບັດຢູ່ບັນດາກົມ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ແລະ ເຂົ້າຮ່ວມ ກອງປະຊຸມເປີດຊອງປະມູນ, ການສົມທຽບລາຄາ, ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ຊ່ວຍເຫຼືອຈາກສາກົນ ທີ່ໄດ້ຈັດຕັ້ງປະຕິບັດຢູ່ບັນດາກົມ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ເຊັ່ນ: ໂຄງການ ອະນຸລັກຊີວະນາໆພັນຕາມແລວເຊື່ອມຈອດປ່າສະຫງວນ BBC. ພ້ອມທັງເປັນຄະນະກຳມະການກວດກາ, ກວດນັບຊັບສິນຂອງລັດ ໃນການຄົ້ນຄວ້າພິຈາລະນາ ລຶບລ້າງບັນດາຊັບສິນຂອງລັດທີ່ເກົ່າແກ່, ເປເພ່ ບໍ່ສາມາດໃຊ້ການໄດ້ ອອກຈາກບັນຊີ ຂອງບັນດາກົມອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້.

**2. ກວດກາຕາມຄຳສັ່ງ.**

ສົມທົບກັບອົງການກວດກາລັດຖະບານລົງກວດກາການຈັດຕັ້ງປະຕິບັດ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ່ 13/05/2016 ວ່າດ້ວຍການເພີ້ມທະວີຄວາມເຂັ້ມງວດໃນການຄຸ້ມຄອງແລະກວດກາການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ໃນຂອບເຂດທົ່ວປະເທດ ໂດຍສະເພາະ ລົງຕິດຕາມການເຄື່ອນຍ້າຍໄມ້ທີ່ບໍ່ຖືກຕ້ອງ, ລົງເກັບກຳກ່ຽວກັບການຂຸດຄົ້ນ ແລະ ຊື້-ຂາຍໄມ້, ການເກັບກຳຂໍ້ມູນກ່ຽວກັບການກວດກາ, ການສືບສວນ-ສອບສວນ, ກວດກາການລັກລອບຂົນສົ່ງໄມ້ອອກໄປຕ່າງປະເທດ, ຊຸກຍູ້ແກ້ໄຂໄມ້, ໂຮງງານປຸງແຕ່ງໄມ້ ແລະ ທຸລະກິດໄມ້.

ເຂົ້າຮ່ວມເປັນຄະນະຮ່ວມກັບຄະນະກວດສອບພາຍໃນຂອງກະຊວງກະສິກຳ ແລະ ປ່າໄມ້ ໃນການລົງກວດສອບ ການນຳໃຊ້ງົບປະມານ ຂອງກົມຊົນລະປະທານ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມພັດທະນາຊົນນະບົດ ແລະ ສະຫະກອນ ປະຈຳປີ 2018. ເຂົ້າຮ່ວມເປັນຄະນະ ໃນການລົງເຜີຍແຜ່ເອກະສານ ແລະ ວິທີການ ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດຂອງລັດຖະບານສະບັບເລກທີ 348/ລບ ວ່າດ້ວຍມາດຕະຖານພື້ນທຸກ ແລະ ມາດຕະຖານພັດທະນາ, ລົງເຄື່ອນໄຫວຊຸກຍູ້, ຕິດຕາມ ວຽກງານການຜະລິດລະດູແລ້ງ.

ສົມທົບກັບອົງການກວດກາລັດຖະບານ ດຳເນີນການກວດກາຄົ້ນຄວ້ານິຕິກຳ ແລະ ກວດກາບັນດາໂຄງການຊົນລະປະທານ ຢູ່ບັນດາແຂວງ ໃນຂອບເຂດທົ່ວປະເທດ.

**3. ວຽກງານຄົ້ນຄວ້າແກ້ໄຂຄຳຮ້ອງ ຄຳສະເໜີ.**

ໄດ້ມີການຄົ້ນຄວ້າ, ເຊື່ອມຊຶມບັນດາ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານ ແກ້ໄຂຄຳຮ້ອງ-ຄຳສະເໜີ ເພື່ອເປັນບ່ອນອີງໃນການປະກອບຄຳເຫັນເພື່ອແກ້ໄຂວຽກງານດັ່ງກ່າວ. ປະກອບຄຳເຫັນຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ທັງໝົດ 11 ສະບັບ, ມີພະນັກງານຖືກປະຕິບັດວິໄນເບື້ອງລັດ 11 ຄົນ, ໃນນັ້ນ, ຂັ້ນ 3 ມີ 6 ຄົນ, ຂັ້ນ 4 ມີ 5 ຄົນ; ຖືກປະຕິບັດວິໄນພັກ ຈຳນວນ 1 ສະຫາຍ ປະຈຸບັນກຳລັງລໍຖ້າສານຕັດສິນຄະດີ.

**4. ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.**

ເອົາໃຈໃສ່ໃນການຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ບັນດານິຕິກຳ ທີ່ກ່ຽວຂ້ອງກັບວຽກງານຕ້ານການສໍ້ລາດບັງຫຼວງທີ່ຂັ້ນເທິງວາງອອກ ມາເປັນທິດທາງແຜນການໃນການເຄື່ອນໄຫວວຽກງານຂອງຕົນ; ພ້ອມທັງໄດ້ມີການເຂົ້າຮ່ວມ ກອງປະຊຸມ ສຳມະນາ ກ່ຽວກັບວຽກງານດັ່ງກ່າວທີ່ອົງການກວດກາລັດຖະບານ ໄດ້ຈັດຂຶ້ນໃນໃນແຕ່ລະຄັ້ງ; ປະສານສົມທົບກັບ ກົມຕ້ານການສໍ້ລາດບັງຫຼວງ ອົງການກວດກາລັດຖະບານ ໃນການຈັດຕັ້ງປະຕິບັດ ການຈັດຕັ້ງເຜີຍແຜ່ບັນດາເອກະສານ, ນິຕິກຳກ່ຽວກັບວຽກງານດັ່ງກ່າວ ເຊິ່ງໄດ້ມີການລົງເຮັດວຽກຢູ່ບັນດາກົມ.

ລົງຊຸກຍູ້, ຕິດຕາມ ກວດກາ ໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ຕາມດຳລັດຂອງລັດຖະບານສະບັບເລກທີ 01/ລບ ທີ່ໄດ້ມີການຈັດຕັ້ງປະຕິບັດຢູ່ໃນຂະແໜງການກະສິກຳ ແລະ ປ່າໄມ້. ເຂົ້າຮ່ວມ ເປັນຄະນະກວດສອບກັບອົງການກວດສອບແຫ່ງລັດ ທີ່ໄດ້ລົງກວດສອບບົດສະຫຼຸບຂາດຕົວ ໃນການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດປະຈຳ ປີ 2017, ກວດຄືນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ແລະ ຜົນການຈັດຕັ້ງປະຕິບັດຄຳແນະນຳຂອງອົງການກວດສອບແຫ່ງລັດໃນປີຜ່ານມາຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ໄດ້ເອົາໃຈໃສ່ ຕິດຕາມການເກັບຮັກສາເອກະສານ ການແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານລັດຖະກອນຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງກະສິກຳ ແລະ ປ່າໄມ້ ທີ່ໄດ້ຮັບແຈ້ງ ສຳເລັດໃນປີ 2017.

**V. ວຽກງົບປະມານ ການລົງທຶນ ສຸມໃສ່ ຂະແໜງ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.**

**1. ການລົງທຶນຂອງລັດປະຈຳສົກປີ (PIP).**

ງົບປະມານສະເພາະ PIP: ງົບປະມານການລົງທຶນ ແລະ ລາຍຈ່າຍບໍລິຫານ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະເພາະປີ 2018 ມີທັງໝົດ 239.115,69 ລ້ານກີບ,ໃນນັ້ນ:

- ເງິນເດືອນ ແລະ ເງິນອຸນໜູນຕ່າງໆ (ພາກ 60) ຈຳນວນ 48.606 ລ້ານກີບ
- ເງິນນະໂຍບາຍ ແລະ ເງິນຊ່ວຍໜູນຕ່າງໆ (ພາກ 61) ຈຳນວນ 12.500 ລ້ານກີບ
- ເງິນ ລາຍຈ່າຍບໍລິຫານປົກກະຕິ (ພາກ 62) ຈຳນວນ 8.050 ລ້ານກີບ
- ລາຍຈ່າຍ ດັດສົມ, ສົ່ງເສີມ ແລະ ເງິນບຳລຸງ (ພາກ 63) ຈຳນວນ 24.676 ລ້ານກີບ
- ລາຍຈ່າຍ ຊື້ຊັບສົມບັດ ຄົງທີ່ ຮັບໃຊ້ກົງຈັກບໍລິຫານ (ພາກ 66) ມີ 0 ລ້ານກີບ
- ລາຍຈ່າຍ ພາກການລົງທຶນ (ພາກ 67) ຈຳນວນ 145.283,69 ລ້ານກີບ ໃນນັ້ນ ກະສິກຳ ແລະ ປ່າໄມ້ ຈຳນວນ 180 ໂຄງການ ມູນຄ່າ 88.426,77 ລ້ານກີບ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຈຳນວນ 187 ໂຄງການ ມູນຄ່າ 56.856,92 ລ້ານກີບ.

## ການຈັດຕັ້ງປະຕິບັດ ປີ 2018

**ຫົວໜ່ວຍ: ກີບ**

| ພາກ | ເນື້ອໃນພາກງົບປະມານ | ແຜນປີ 2018 | ແຜນດັດແກ້ ປີ2018 | ປະຕິບັດປີ 2018 | ສົມທຽບ ເປີເຊັນ |
|---|---|---|---|---|---|
| 60 | ເງິນເດືອນ ແລະ ເງິນອຸດໜູນ | 48.206.000.000 | 48.606.000.000 | 48.304.346.846 | 99.38 |
| 61 | ເງິນນະໂຍບາຍ ແລະ ເງິນຊ່ວຍໜູນຕ່າງໆ | 12.900.000.000 | 12.500.000.000 | 11.921.181.617 | 95.37 |
| 62 | ລາຍຈ່າຍບໍລິຫານປົກກະຕິ | 8.050.000.000 | 8.050.000.000 | 8.038.141.863 | 99.85 |
| 63 | ລາຍຈ່າຍດັດສົມ, ສົ່ງເສີມ ແລະ ເງິນບຳລຸງ | 24.676.000.000 | 24.676.000.000 | 24.675.969.000 | 99.99 |
| 66 | ຊື້ຊັບສົມບັດຄົງທີ່ຮັບໃຊ້ກົງຈັກບໍລິຫານ | - | | | - |
| 67 | ລາຍຈ່າຍລົງທຶນຂອງລັດ | 140.283.690.000 | 145.283.690.000 | 142.589.515.686 | 98.14 |
| | **ລວມທັງໝົດ** | 234.115.690.000 | 239.115.690.000 | 235.529.155.012 | 98.50 |

**2. ການລົງທຶນຂອງຕ່າງປະເທດ (ODA).**

ການຄຸ້ມຄອງການລົງທຶນ ຂອງຕ່າງປະເທດ ທີ່ກຳລັງຈັດຕັ້ງປະຕິບັດ ໃນປີ 2018 ມີທັງໝົດ 96 ໂຄງການ, ຊຶ່ງປະກອບມີ ສອງພາກສ່ວນຄື:

- ໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ ຈຳນວນ 71 ໂຄງການ ມີມູນຄ່າ ທັງໝົດ 732,66 ລ້ານໂດລາ, ໃນນັ້ນ ທຶນຕ່າງປະເທດ ມີ 678,13 ລ້ານໂດລາ, ທຶນພາຍໃນ 54,53 ລ້ານໂດລາ. ຜ່ານການຈັດຕັ້ງປະຕິບັດ ໃນປີ 2018 ສາມາດຈັດຕັ້ງປະຕິບັດໄດ້ ປະມານ 130,01 ລ້ານໂດລາສະຫະລັດ, (ທຶນພາຍໃນ 8,19 ລ້ານໂດລາ, ຕ່າງປະເທດ 121,82 ລ້ານໂດລາ) ບັນດາ ໂຄງການດັ່ງກ່າວ ແມ່ນຈັດຕັ້ງປະຕິບັດຢູ່ທ້ອງຖິ່ນໂດຍໄດ້ສຸມໃສ່ ການພັດທະນາ ກະສິກຳ ຕິດພັນກັບ ການປັບປຸງ ຊີວິດການເປັນຢູ່ ຂອງ ປະຊາຊົນ ໃຫ້ສູງຂຶ້ນ ແລະ ຫຼຸດພົ້ນອອກຈາກຄວາມ ທຸກຍາກ ຊຶ່ງຈັດຕັ້ງປະຕິບັດຢູ່ນະຄອນຫຼວງວຽງຈັນແລະ17 ແຂວງ ໃນຂອບເຂດທົ່ວປະເທດ ຊຶ່ງລວມມີວຽກ ພື້ນຖານໂຄງລ່າງຂອງຂະແໜງການເພື່ອພັດທະນາຊົນນະບົດ ຮັບໃຊ້ຊີວິດການເປັນຢູ່ຂອງ ປະຊາຊົນເຂດຊົນນະບົດຫ່າງໄກສອກຫຼີກ ແລະ ວຽກງານສົ່ງເສີມດ້ານວິຊາການ ຕິດພັນກັບການສ້າງວິຊາການ ກະສິກຳຂັ້ນບ້ານ, ສ້າງອາຊີບຄົງທີ່ໃຫ້ແກ່ປະຊົນໃນເຂດຊົນນະບົດ.
- ໂຄງການ NGO ຈຳນວນ 25 ໂຄງການ ມູນຄ່າ 29,56 ລ້ານໂດລາ ທີ່ລົງຈັດຕັ້ງປະຕິບັດຢູ່ທ້ອງຖິ່ນໂດຍກົງ ເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ຕາມເປົ້າໝາຍຂອງ ກະຊວງກະສິກຳ ແລະ ປ່າໄມ້ວາງອອກ.

ເຖິງແມ່ນວ່າງົບປະມານ ຂອງຂະແໜງການ ຈະມີຈຳກັດ ໂດຍສະເພາະການລົງທຶນຂອງລັດ ຊຶ່ງນັບມື້ນັບຫຼຸດລົງ ເນື່ອງຈາກ ການເກັບລາຍຮັບບໍ່ໄດ້ຕາມເປົ້າໝາຍ ກະຊວງ ກະສິກຳ ແລະປ່າໄມ້ ຈຶ່ງໄດ້ອອກແຮງຍາດແຫ່ງ ທຶນຂອງ

ຕ່າງປະເທດ ໂດຍການ ຫັນກິດຈະກຳຂອງ ບັນດາໂຄງການ ຊ່ວຍເຫຼືອລ້າ, ກູ້ຢືມ, ການລົງທຶນຂອງເອກະຊົນ ທັງພາຍ ໃນ ແລະ ຕ່າງປະເທດ ແລະ ເງິນສິນເຊື່ອທະນາຄານ ເພື່ອມາຮັບໃຊ້ ເປົ້າໝາຍຂອງຂະແໜງການ ເພື່ອຮັບປະກັນ ໂຕ ເລກຂາດໝາຍຂອງຂະແໜງການ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

### 3. ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ (FDI).

ການລົງທຶນ ທັງພາຍ ແລະ ຕ່າງປະເທດ ດ້ານການປູກພືດ, ການລ້ຽງສັດ, ການປູກໄມ້ ອຸດສະຫະກຳ ເພື່ອເປັນ ສິນຄ້າ. ພ້ອມດຽວກັນນີ້ ສືບຕໍ່ ຕິດຕາມ ຊຸກຍູ້ ແລະ ປະເມີນ ຄຸນນະພາບ ຂອງ ການຈັດຕັ້ງປະຕິບັດ ແຜນທຸລະກິດ ຂອງ ບໍລິສັດ ໃຫ້ໄປຕາມ ເນື້ອໃນ ທີ່ໄດ້ຕົກລົງກັນໄວ້ ໃນສັນຍາ ການລົງທຶນ ໂດຍສະເພາະ ບັນດາ ບໍລິສັດ ທີ່ໄດ້ ລົງທຶນ ໃນການ ສຳປະທານ ທີ່ດິນ ກະສິກຳ ແລະ ປ່າໄມ້ ທີ່ມີໃນປະຈຸບັນ ດັ່ງນີ້:

| ລ/ດ | ຊື່ຂະແໜງການການ ລົງທຶນພາຍໃນ ແລະ ຕ່າງປະເທດ | ຈຳນວນ ບໍລິສັດ | ທຶນທັງໝົດ | ທຶນຈົດທະບຽນ | ເນື້ອທີ່ (ເຮັກຕາ) | | |
|---|---|---|---|---|---|---|---|
| | | | | | ເນື້ອທີ່ສຳ ປະທານ | ເນື້ອທີ່ ສົ່ງເສີມ | ລວມ |
| 1 | ປູກຝັງ | 336 | 1.200.205.913 | 749.858.304 | 74.919 | 9.332 | 84.252 |
| 2 | ລ້ຽງສັດ | 190 | 346.549.096 | 222.580.241 | 3.537 | 158 | 3.694 |
| 3 | ປ່າໄມ້ | 263 | 1.808.106.927 | 734.642.341 | 231.468 | 38.364 | 269.832 |
| 4 | ບໍລິການ | 44 | 13.697.888 | 20.901.496 | | | |
| **ລວມ** | | **833** | **3.368.559.824** | **1.727.982.382** | **309.924** | **47.854** | **357.778** |

ການລົງທຶນ ຂອງ ຜູ້ປະກອບການ ພາຍໃນ ແລະ ຕ່າງປະເທດ (FDI) ກໍ່ມີການລົງທຶນໃສ່ ຂະແໜງ ການ ກະສິກຳ ແລະ ປ່າໄມ້ ຫຼາຍສົມຄວນ ຄືດັ່ງກ່າວມາຂ້າງເທິງນັ້ນ, ແຕ່ຜ່ານການຕີລາຄາ ເຫັນວ່າ ການລົງທຶນ ຍັງບໍ່ມີຈຸດ ສຸມ, ມີຫຼາຍໂຄງການ ບໍ່ປະຕິບັດຕາມລະບຽບການລົງທຶນ ກ່ຽວກັບ ການຈັດສັນເຂດພື້ນທີ່ລົງທຶນ, ໂຄງການເຊົ່າ ແລະ ສຳປະທານທີ່ດິນລັດສ່ວນໃຫຍ່ ໄດ້ສຸມໃສ່ເຂດອ້ອມແອ້ມເທດສະບານແຂວງ ທີ່ມີເສັ້ນທາງຄົມມະນາຄົມ ແລະ ການ ບໍລິການສາທາລະນະທີ່ສະດວກແລ້ວ, ຍັງລົງທຶນ ແບບຊະຊາຍ ໃນບາງທ້ອງຖິ່ນ ແລະ ຂາດການກວດກາ-ປະເມີນຜົນ ຢ່າງເປັນລະບົບ ຊຶ່ງເປັນສາຍເຫດ ເຮັດໃຫ້ ດິນທີ່ເຊົ່າ ແລະ ສຳປະທານ ໃນການປູກ-ການລ້ຽງ ບໍ່ຖືກນຳໃຊ້ ຕາມເງື່ອນ ໄຂສັນຍາ, ເຮັດໃຫ້ເສຍຜົນປະໂຫຍດ. ສະນັ້ນເຫັນວ່າ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ສົມທົບ ກັບ ແຂວງຕ່າງໆ ເພື່ອ ພ້ອມກັນລົງກວດກາ ແລະ ຊ່ວຍ ແຂວງ ແກ້ໄຂໃນບັນຫາ ດັ່ງກ່າວ ໂດຍໄວ້ ເພື່ອຍາດແຍ່ງແຫຼ່ງທຶນ ເຂົ້າໃສ່ ຈຸດ ສຸມພັດທະນາ ຂອງແຂວງ ໂດຍການໃຫ້ນະໂຍບາຍ ສະໜັບສະໜູນ ດ້ານຕ່າງໆ ທີ່ເໝາະສົມ.

ອີກປະເດັນໜຶ່ງ ທີ່ຄວນສຸມໃສ່ ແກ້ໄຂຮີບດ່ວນ ການເກັບລາຍຮັບຈາກ ຄ່າເຊົ່າ ແລະ ສຳປະທານທີ່ດິນ (ອີງ ຕາມລັດຖະບັນຍັດ 02/ປປທ, ລົງວັນທີ 18 ພະຈິກ 2009) ຈາກໂຄງການ ໂຄງການ ເຊົ່າ ແລະ ສຳປະທານ ໃນຂະແ ໜງ ການ ກະສິກຳ ແລະ ປ່າໄມ້ ເຫັນວ່າ ໃນປີໜຶ່ງ ລັດຖະບານ ອາດມີລາຍຮັບ ຈາກຄ່າເຊົ່າ ແລະ ສຳປະທານ ດັ່ງກ່າວ ຈຳນວນ 53 ລ້ານກວ່າໂດລາ ຊຶ່ງຖ້າເກັບ ທຸກໆໂຄງການ ລວມທັງ ມີການເຄື່ອນໄຫວ ແລະ ບໍ່ໄດ້ເຄື່ອນໄຫວ ໂດຍ ສະເພາະ ໂຄງການ ຂະແໜງກະສິກຳ ຈະໄດ້ຮັບ 1.307.540 ໂດລາ ຕໍ່ປີ (ເນື້ອທີ່ອະນຸມັດ) ແຕ່ຖ້າຄິດໄລ່ຕາມເນື້ອທີ່ ນຳໃຊ້ ຈະໄດ້ 490.066 ໂດລາ ຕໍ່ປີ ແລະ ໂຄງການ ຂະແໜງ ປູກໄມ້ ຈະໄດ້ຮັບ 7.922.102 ໂດລາ ຕໍ່ປີ (ເນື້ອທີ່ ອະນຸມັດ) ແຕ່ຖ້າຄິດໄລ່ຕາມເນື້ອທີ່ ນຳໃຊ້ຈະດ້ 5.200.282 ໂດລາ ຕໍ່ປີ, ຊຶ່ງກໍ່ເປັນ ງົບປະມານ ຈ□ານວນ ຫຼວງຫຼາຍ ທີ່ສາມາດ ນຳໃຊ້ ເຂົ້າໃນ ການພັດທະນາ ຕາມຈຸດສຸມ ບຸລິມະສິດ ຂອງ ແຂວງ. ແຕ່ຜ່ານມາ ຍັງປະຕິບັດ ບໍ່ ໄດ້ດີ ເຮັດໃຫ້ ລາຍຮັບ ດັ່ງກ່າວ ບໍ່ເຂົ້າໃນລະບົບ.

### 4. ການປ່ອຍສິນເຊື່ອ ຂອງ ທະນາຄານ.

ນອກນັ້ນ, ກໍ່ຍັງມີ ແຫຼ່ງ ສິນເຊື່ອ ທະນາຄານ ຊຶ່ງກໍ່ເປັນ ແຫຼ່ງໜຶ່ງ ທີ່ສຳຄັນ ຊຶ່ງມີການລົງທຶນໃສ່ ລະບົບສິນເຊື່ອ ທະນາຄານ ປະມານ 9.788 ຕື້ກີບ ໃນປີ 2019, ຊຶ່ງໃນປີ 2018 ຜ່ານມາ ການລົງທຶນໃສ່ ຂະແໜງການ ກະສິກຳ ແລະ ປ່າໄມ້ ສັງລວມ ຮອດ ໄຕມາດ ທີ 3 ໄດ້ມີການລົງທຶນໃສ່ ຂະແໜງ ກະສິກຳ ແລະ ປ່າໄມ້ ທັງໝົດ 5.753,86 ຕື້ກີບ.

## VI. ສັງເກດຕີລາຄາ ດ້ານດີ, ດ້ານອ່ອນ.

### 1. ດ້ານດີ.

1) ການຈັດຕັ້ງປະຕິບັດ ນະໂຍບາຍ ການຜະລິດ ກະສິກຳ ເປັນສິນຄ້າຂອງ ພັກ ແລະ ລັດຖະບານ ໄດ້ມີຫຼາຍໜໍ່ແໜ່ງໃໝ່ເກີດຂຶ້ນ ເຊັ່ນ: ການສ້າງເຂດແຫຼ່ງວັດຖຸດິບ ໄດ້ເກີດຂຶ້ນ ເປັນຮູບເປັນຮ່າງ ຢູ່ຫຼາຍເຂດແຄ້ວນທົ່ວປະເທດ, ການຜະລິດ ແລະ ສະໜອງສະບຽງອາຫານຈາກຟາມ ເປັນຕົ້ນ ແມ່ນຊີ້ນ, ໄຂ່, ປາ ແລະ ຜັກອິນຊີ ໄດ້ເພີ້ມຂຶ້ນ.
2) ການແກ້ໄຂ ຂໍ້ຫຍຸ້ງຍາກ ໃຫ້ປະຊາຊົນໃນການຜະລິດ, ຄຽງຄູ່ກັບການສົ່ງເສີມ ການຜະລິດແບບເປັນຟາມ, ການສົ່ງເສີມການຜະລິດ ເສດຖະກິດ ຂະໜາດນ້ອຍ, ຂະໜາດກາງ ມີການຂະຫຍາຍຕົວເປັນກ້າວໆ.
3) ຊາວກະສິກອນລາວ ໄດ້ຮຽນຮູ້ ແລະ ນຳໃຊ້ ເຕັກນິກ ວິທະຍາສາດ ແລະ ກົນຈັກ ເຂົ້າໃນການຜະລິດຫຼາຍຂຶ້ນ ຊຶ່ງເປັນການປະຢັດຕົ້ນທຶນ, ໃຫ້ສະມັດຕະພາບສູງ, ມີຜົນຕອບແທນເພີ່ມສາມເທົ່າຕົວເປັນຢ່າງຕ່ຳ ທຽບໃສ່ການຜະລິດແບບທັດຖະກຳ ຊຶ່ງສອດຄ່ອງກັບແນວທາງ ຫັນເປັນອຸດສະຫະກຳ ແລະ ທັນສະໄໝ.
4) ການຜະລິດເຂົ້າ, ການລ້ຽງສັດ ແລະ ການຜະລິດພືດອື່ນໆ ໄດ້ມີການຂະຫຍາຍຕົວ, ການປູກພືດ ເປັນສະບຽງ ແລະ ສິນຄ້າ ແມ່ນ ໄດ້ເພີ່ມຂຶ້ນ ກວ່າແຕ່ກ່ອນ, ພ້ອມດຽວກັນນັ້ນ ກໍ່ໄດ້ມີໜໍ່ແໜງ ດ້ານການປຸງແຕ່ງ ຜົນຜະລິດກະສິກຳ ເກີດຂຶ້ນຫຼາຍພໍສົມຄວນ.
5) ວຽກງານຄຸ້ມຄອງປ່າໄມ້ ກໍ່ໄດ້ເຂົ້າສູ່ລະບົບ ເປັນກ້າວໆ. ພ້ອມດຽວກັນນັ້ນ ວຽກງານ ການພັດທະນາ ຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ກໍ່ໄດ້ມີ ດຳລັດ ວ່າດ້ວຍມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາ ແລະ ໄດ້ມີຄຳແນະ ຂອງ ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ໃນການຈັດຕັ້ງປະຕິບັດ ດຳລັດ ດັ່ງກ່າວ ພ້ອມດຽວກັນນັ້ນ ກໍ່ເຫັນວ່າວຽກງານພັດທະນາ ຊົນນະບົດ ແລະ ແກ້ໄຊຄວາມທຸກຍາກ ໄດ້ ຫັນໂຄງການຈາກທຸກແຫຼ່ງທຶນ ລົງໃສ່ ຈຸດສຸມ ຕາມ ຂໍ້ຕົກລົງ ເລກທີ 65/ນຍ.
6) ການຈັດຕັ້ງປະຕິບັດງົບປະມານປະຈຳປີ ແມ່ນໄດ້ເຄື່ອນໄຫວໄປຕາມ ແຜນແບ່ງປັນ ແລະ ໄປຕາມແຜນຍຸດທະສາດຂອງກະຊວງ ຄືບັນດາໂຄງການລົງທຶນ ແມ່ນໄດ້ຫັນໄປຕາມ 3 ເສົາຄ້ຳ, 4ແຜນງານ ແລະ 10 ແຜນດຳເນງານຢ່າງເປັນລະບົບ.
7) ມີການກວດກາຕິດຕາມການນຳໃຊ້ງົບປະມານຢ່າງເປັນລະບົບຂອແຕ່ລະກົມ, ສະຖາບັນເປັນຮູບແບບອັນດຽວກັນຕາມທິດຊີ້ນຳຂອງກະຊວງແຜນການ ແລະ ການລົງທຶນກໍ່ຄືລັດຖະບານ.
8) ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໄດ້ຫັນມາສົນໃຈລົງທຶນ ໃນຂະແໜງ ກະສິກຳ ແລະ ປ່າໄມ້ ນັບມື້ນັບຫຼາຍຂຶ້ນ.

### 2. ດ້ານອ່ອນ.

1) ການຜະລິດ ກະສິກຳ ໂດຍລວມແລ້ວ ແມ່ນ ການຜະລິດ ຂະໜາດນ້ອຍ ກະແຈກກະຈາຍ ຂຶ້ນກັບທຳມະຊາດເປັນສ່ວນໃຫຍ່, ຍັງແມ່ນການຜະລິດ ທີ່ມີສະມັດຕະພາບຕ່ຳ, ຄຸນນະພາບບໍ່ສູງ, ເຂດຜະລິດສະເພາະ ເພື່ອສະ ໜອງ ວັດຖຸດິບໃຫ້ແກ່ ອຸດສະຫະກຳ ແລະ ປຸງແຕ່ງ ເກີດຂຶ້ນບໍ່ທັນຫຼາຍປານໃດ.
2) ການຜະລິດ ເພື່ອຄ້ຳປະກັນ ຄວາມໝັ້ນຄົງ ດ້ານສະບຽງອາຫານ ຍັງບໍ່ທັນໜັກແໜ້ນ, ເຂົ້າຄັງແຮ ຍັງບໍ່ທັນຄ້ຳປະກັນໄດ້ ຮອດ 3 ເດືອນ ໃນກໍລະນີ ມີໄພພິບັດ ທາງທຳມະຊາດ ເກີດຂຶ້ນ. ການຜະລິດຊີ້ນ, ປາ, ໝາກໄມ້ ບໍ່ທັນພຽງພໍ ຕອບສະໜອງ ໃຫ້ແກ່ ຕົວເມືອງໃຫຍ່ ແລະ ຮັບໃຊ້ໃຫ້ແກ່ ການບໍລິໂພກ ຂອງ ການລົງທຶນ ຂະໜາດໃຫຍ່ ລະດັບຊາດ, ພວກເຮົາຍັງຕ້ອງໄດ້ນຳເຂົ້າສະບຽງອາຫານ ຫຼາຍພໍສົມຄວນ.
3) ການຜະລິດ ກະສິກຳ ທີ່ເປັນຕ່ອງໂສ້ ບໍ່ທັນຄົບວົງຈອນ ບໍ່ຄົບຊຸດ ການຜະລິດບໍ່ທັນຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ, ການຈັດຕັ້ງການຜະລິດບໍ່ທັນເຂັ້ມແຂງແທ້, ການຈັດຕັ້ງກຸ່ມ, ສະຫະກອນ, ສະມາຄົມ ຫຼື ຄອບຄົວຕົວແບບ, ວິສະຫະກິດ ກະສິກຳ ພົບຄວາມຫຍຸ້ງຍາກ ສະນັ້ນ ເຮັດໃຫ້ ການສະໜອງສະບຽງອາຫານຊີ້ນ, ປາຈາກ ຟາມຕ່າງໆ ບໍ່ທັນກວມເອົາໄດ້ຮອດ 30% ຂອງ ຄວາມຕ້ອງການ ຂອງຜູ້ບໍລິໂພກ, ສະແດງໃຫ້ເຫັນວ່າແຫຼ່ງສະໜອງໃຫ້ແກ່ ຄວາມຕ້ອງການ ຍັງບໍ່ມີຄວາມໝັ້ນທ່ຽງ.

4) ກຳລັງການຜະລິດ ຍັງອ່ອນນ້ອຍ, ຫຼ້າຫຼັງ ເຊັ່ນ: ການນຳໃຊ້ກົນຈັກ, ເຕັກນິກ-ເຕັກໂນໂລຊີ, ວິທະຍາສາດ ເຂົ້າໃນ ການຜະລິດ ຍັງຈຳກັດ, ຊາວກະສິກອນ ຍັງຂາດຄວາມຮູ້ ທາງດ້ານການປູກ, ການລ້ຽງ ແລະ ການປຸງແຕ່ງ. ມີຂີດຈຳກັດ ດ້ານ ກະສິກຳ ທັນສະໄໝ ໃນການສະໃໝ ການເຊື່ອມໂຍງເສດຖະກິດ.

5) ການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ຜ່ານມາ ຂາດຄວາມສັກສິດ ແລະ ເຂັ້ມງວດ ເຮັດໃຫ້ ຊັບພະຍາກອນຂອງຊາດ ຖືກທຳລາຍ, ການຈັດອາຊີບ ໃຫ້ແກ່ ປະຊາຊົນ ໃນເຂດຍຸດຕິ ການຖາງປ່າ ເຮັດໄຮ່ ຫຼື ເຂດການເຮັດໄຮ່ ເລື່ອນລອຍ ຍັງບໍ່ທັນມີຄວາມໝັ້ນທ່ຽງ. ການຄຸ້ມຄອງ ນ□າໃຊ້ ປ່າໄມ້ບ້ານ ຍັງບໍ່ທັນຍືນຍົງ ຫຼາຍແຫ່ງຖືກບຸກລຸກ ແລະ ຈັບຈ່ອງບໍ່ຖືກກົດໝາຍ, ເປັນເຂດສຳປະທານບໍ່ແຮ່ ສຳປະທານໄປແລ້ວ ການປູກໄມ້ ກໍ່ບໍ່ໄດ້ຕາມຄາດໝາຍ. ການສຳປະທານ ປູກໄມ້ ອຸດສະຫະກຳ ແລະ ການນຳໃຊ້ ຂອງບຸກຄົນ ບໍ່ໄດ້ຮັບການຈັດສັນເປັນຢ່າງດີ.

6) ການພັດທະນາ ຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ ແມ່ນ ຍັງຂາດ ແຜນພັດທະນາ ແບບກວມລວມ, ກ່ຽວກັບ ການນຳໃຊ້ ແລະ ພັດທະນາ ທີ່ດິນ ບໍ່ທັນສົ່ງເສີມ ຈິດໃຈ ເປັນເຈົ້າ ຂອງ ຊາວກະສິກອນ, ຄອບຄົວທຸກຍາກເຂດພູດອຍ ຫ່າງໄກສອກຫຼີກ ແລະ ເຂດພື້ນຖານ ການປະຕິບັດ ຍັງມີຄວາມຫຍຸ້ງຍາກຫຼາຍ.

7) ການຄົ້ນຄວ້າ, ວິໄຈ, ສະຫຼຸບຖອດຖອນບົດຮຽນພຶດຕິກຳຕົວຈິງ ໃນການພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກ ໃນໄລຍະຜ່ານມາ ເພື່ອກຳນົດເປັນທິດສະດີ, ເປັນທັດສະນະຊີ້ນຳ, ເປັນຫຼັກການ, ເປັນຮູບແບບໃນການພັດທະນາຊົນນະບົດ ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດ ແລະ ເງື່ອນໄຂໃໝ່ ທີ່ເຊື່ອມໂຍງກັບພາກພື້ນ ແລະສາກົນ ຍັງເຮັດບໍ່ທັນໄດ້, ເຮັດໃຫ້ທັດສະນະ, ຄວາມຮັບຮູ້ເຂົ້າໃຈ ຂອງຄະນະພັກ, ຂະແໜງການ, ອົງ ການຂັ້ນສູນກາງ ແລະອົງການປົກຄອງທ້ອງຖິ່ນຈຳນວນໜຶ່ງ ບໍ່ເລິກເຊິ່ງ ແລະ ບໍ່ເປັນເອກະພາບກັນ, ການຊີ້ນຳ, ບັນຊາ ບໍ່ແທດເຖິງຕົວຈິງ ແລະ ມີລັກສະນະຖືເບົາ.

8) ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນໄດ້ເປັນເຈົ້າການສຶກສາຄົ້ນຄວ້າ, ສຳຫຼວດເກັບກຳຂໍ້ມູນ, ສ້າງເປັນແຜນການ, ໂຄງການອະອຽດ ແລະ ຕັ້ງໜ້າສຸມການຊີ້ນຳບັນຊາ, ສຸມທຶນຮອນ ແລະພະນັກງານເຂົ້າໃສ່ການພັດທະນາຈຸດສຸມຕ່າງໆທີ່ກຳນົດໄວ້ໃຫ້ໄປລວງດຽວກັນ, ຍັງເຮັດໄປຕາມຈຸດສຸມຂອງໃຜມັນຢູ່.

9) ການກຳນົດໂຄງການພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກຍັງບໍ່ທັນລວມສູນ, ຍັງເຮັດພໍໃຜພໍລາວ, ຍັງບໍ່ທັນໄດ້ກຳນົດແຈ້ງວ່າ: ໂຄງການອັນໃດ, ລະດັບໃດ, ຢູ່ໃນຂອບເຂດໃດ ຈຶ່ງແມ່ນໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ໂຄງການໃດ ແມ່ນໂຄງການປົກກະຕິຂອງຂະແໜງການ ແລະ ທ້ອງຖິ່ນ ຍັງປົນເປກັນຢູ່, ເຮັດໃຫ້ ການປະສານງານ, ການຕິດຕາມ, ກວດກາ ແລະ ສະຫຼຸບສັງລວມມີຄວາມຫຍຸ້ງຍາກ.

10) ການຈັດສັນທຶນຮອນເຂົ້າໃນວຽກງານພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກ ຍັງບໍ່ທັນລວມສູນ ໄປລວງດຽວກັນ, ແຫຼ່ງທຶນສ່ວນໃຫຍ່ ຍັງອີງໃສ່ແຕ່ງົບປະມານພາຍໃນຂອງລັດເປັນຕົ້ນຕໍ, ຍັງບໍ່ທັນໄດ້ເປັນເຈົ້າການເອົາໃຈໃສ່ ຄົ້ນຄວ້າຂຸດຄົ້ນທ່າແຮງບົ່ມຊ້ອນ ແລະ ກຳລັງແຮງຂອງທົ່ວສັງຄົມ ສຸມໃສ່ການພັດທະນາຢ່າງເຕັມສ່ວນເທື່ອ.

11) ກົນໄກປະສານງານ ລະຫວ່າງຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ບໍ່ທັນໄດ້ຮັບການປັບປຸງໃຫ້ເປັນລະບົບຕໍ່ເນື່ອງ ແລະ ມີຄວາມຄ່ອງຕົວເທື່ອ, ເຮັດໃຫ້ຂອດການປະສານງານໃນການສ້າງ, ຕິດຕາມ, ຊຸກຍູ້,ກວດກາ ການປະຕິບັດແຜນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ກໍ່ຄືການພັດທະນາຈຸດສຸມ ບໍ່ມີປະສິດທິພາບສູງເທົ່າທີ່ຄວນ.

12) ການພັດທະນາ ຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ ແມ່ນ ຍັງຂາດ ແຜນພັດທະນາ ແບບກວມລວມ ຍຸດທະສາດພັດທະນາຊົນນະບົດ, ກ່ຽວກັບ ການນຳໃຊ້ ແລະ ພັດທະນາ ທີ່ດິນ ບໍ່ທັນສົ່ງເສີມ ຈິດໃຈ ເປັນເຈົ້າ ຂອງຊາວກະສິກອນ, ຄອບຄົວທຸກຍາກ ເຂດພູດອຍ ຫ່າງໄກສອກຫຼີກ ແລະ ເຂດພື້ນຖານ ການປະຕິບັດ ຍັງມີຄວາມຫຍຸ້ງຍາກຫຼາຍ.

13) ການປະກອບເອກະສານການຂໍຖອນງົບປະມານປະຈຳງວດແມ່ນບໍ່ສາມາດບັນລຸຕາມເປົ້າໝາຍທີ່ວາງໄວ້ ເນື່ອງຈາກ ການແຈ້ງແຜນແບ່ງບັນງົບປະມານຊັກຊ້າ, ຂາດການປະກອບເອກະສານການຂໍຖອນຂອງບັນດາກົມ ທີ່ກ່ຽວຂ້ອງ, ເອກະສານທີ່ປະກອບການຂໍຖອນຍັງບໍ່ຖືກຕ້ອງ ແລະ ຄົບຖ້ວນ,ຈຶ່ງເຮັດໃຫ້ການຂໍຖອນງົບປະມານບໍ່ສາມາດປະຕິບັດຕາມແຜນ.

## ພາກທີ II:
## ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳປີ 2019

ເພື່ອເປັນການສືບຕໍ່ ແນວທາງ ກະສິກຳ ໃຫ້ຖືກທິດຂະຫຍາຍຕົວ ຂອງ ຍຸກສະໄໝ ແລະ ໂດຍອີງໃສ່ ສະພາບການປ່ຽນ ອັນສັບສົນ ຂອງ ສະພາບດິນ ຟ້າອາກາດ ກໍຄື ດ້ານການເມືອງ-ເສດຖະກິດ ໃນພາກພື້ນ ແລະ ໃນໂລກ, ອີງໃສ່ ບົດຮຽນຖອດຖອນກັບ ສສ ຫວຽດນາມ, ສປ ຈີນ ແລະ ບັນດາ ປະເທດ ໃນອາຊຽນໃນຂົງເຂດ ແລະ ໃນໂລກ ແລະ ບົນຈິດໃຈ ຊີ້ນຳ ຂອງ ລັດຖະບານ, ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ເຫັນຄວາມຈຳເປັນ ທີ່ຈະຕ້ອງໄດ້ທົບທວນ ຄືນໃໝ່ ແລະ ຄົ້ນຄ້ວາ, ກຳນົດ ຍຸດທະສາດ ແລະ ນະໂຍບາຍ ຕໍ່ການຜະລິດ ກະສິກຳ ແລະ ຄຸ້ມຄອງ ປ່າໄມ້ ເວົ້າລວມ ແລະ ເວົ້າສະເພາະຕໍ່ ການຜະລິດ ສະບຽງອາຫານ, ຜະລິດ ເປັນສິນຄ້າ ແລະ ຄຸ້ມຄອງ ປ່າໄມ້ ທີ່ເໝາະສົມ ກ່ວາເກົ່າ, ທີ່ສາມາດຊ່ວຍໃຫ້ ຜ່ານຜ່າ ບັນດາ ສິ່ງທ້າທາຍ ໃນຕໍ່ໜ້າ ແລະ ທີ່ສາມາດ ເຊື່ອມໂຍງ ເສດຖະກິດ ກະສິກຳ ຂອງ ລາວ ເຂົ້າສູ່ ເສດຖະກິດ ສາກົນໄດ້. ໃນແຜນການ ປີ 2019, ພວກເຮົາ ຈະສືບຕໍ່ສຸມໃສ່ ວຽກງານ ການຜະລິດເຂົ້າ ແລະ ສົ່ງເສີມ ການລ້ຽງສັດ ແລະ ປາ ເພື່ອຮັບປະກັນ ດ້ານຄວາມໝັ້ນຄົງ ອັນຍາວນານ, ຮັບປະກັນ ໃຫ້ມີສະບຽງ ພຽງພໍ, ມີສ່ວນແຮໄວ້ ແລະ ສາມາດເປັນພື້ນຖານ ຜະລິດເປັນ ສິນຄ້າ ໄດ້ ໃນໄລຍະຍາວນານ, ໂດຍບໍ່ໃຫ້ຂຶ້ນກັບ ແລະ ອາໃສແຕ່ ທຳມະຊາດ ອີກຕໍ່ໄປ. ອັນນີ້ ເປັນບັນຫາ ທ້າທາຍ ທີ່ທຸກປະເທດ ໃນໂລກ ກຳລັງປະເຊີນຢູ່ ແລະ ເປັນມະຕິໃໝ່ ຂອງ ອົງການ ສະຫາປະຊາຊາດ ຮອດປີ 2030 ທີ່ໄດ້ວາງທິດທາງ ໃຫ້ທຸກປະເທດ ໃນໂລກ ພະຍາ ຍາມ ແກ້ໄຂ ຄວາມຂາດແຄນ ດ້ານສະບຽງ ອາຫານ ແລະ ດ້ານໂພຊະນາການ ໃຫ້ສຳເລັດເຖິງ 100% ແລະ ເນັ້ນໃສ່ ການດຳເນີນ ການຜະລິດ ກະສິກຳ ທີ່ຍືນຍົງ ແລະ ເປັນມິດ ຕໍ່ສິ່ງແວດລ້ອມ ແລະ ຮັບປະກັນ ພ້ອມດຽວກັນ ໃຫ້ກາຍເປັນອາຊີບ ທີ່ມີ ຄວາມໝັ້ນຄົງ ດ້ານເສດຖະກິດ ໃຫ້ຊາວກະສິກອນ ແລະ ຊາວຊົນນະບົດ ໃນໄລຍະຍາວນານ.

**I. ຈຸດປະສົງ ແລະ ຄາດໝາຍລວມ.**

ສືບຕໍ່ເຮັດໃຫ້ການຂະຫຍາຍຕົວຂອງລວມຍອດຜະລິດຕະພັນ ກະສິກຳ ແລະ ປາໄມ້ ຂະຫຍາຍຕົວໃນລະດັບ 2,8% ຂຶ້ນໄປ, ກວມເອົາປະມານ 15,3% ຂອງ ໂຄງປະກອບເສດຖະກິດແຫ່ງຊາດ, ປະກອບສ່ວນໃຫ້ GDP ຂະຫຍາຍຕົວ ໃນລະດັບ 6,7% ຂຶ້ນໄປ.

**II. ຄາດໝາຍ ຂອງ 3 ເສົາຄ້ຳ, 4 ແຜນງານ ແລະ 10 ແຜນດຳເນີນງານ:**

**1. ເສົາຄ້ຳທີ ໜຶ່ງ: ກະສິກຳ.**

**1.1 ແຜນງານຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ.**

**1.1.1 ແຜນດຳເນີນງານຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ.**

ສູ້ຊົນຜະລິດເຂົ້າເປືອກລວມ ໃຫ້ຮັກສາໄວ້ ຢູ່ໃນລະດັບ 4,4 ລ້ານກວ່າໂຕນ ຊຶ່ງໃນນັ້ນ ຕ້ອງຮັບປະກັນ ເຂົ້າສະບຽງ ໃຫ້ໄດ້ 2,1 ລ້ານໂຕນ/ປີ, ຄັງແຮສຸກເສີນ 400.000 ໂຕນ, ບຸງແຕ່ງພາຍໃນ 500.000-600.000 ໂຕນ. ເພື່ອບັນລຸຄາດໝາຍດັ່ງກ່າວ ຕ້ອງສຸມໃສ່ ການຜະລິດເຂົ້ານາແຊງ ໃຫ້ໄດ້ 100.000 ເຮັກຕາ, ຜົນຜະລິດ 526.000 ໂຕນ. ເຂົ້ານາປີ ໃຫ້ໄດ້ 850.000 ເຮັກຕາ, ຜົນຜະລິດ 3.674.000 ໂຕນ ແລະ ເຂົ້າໄຮ່ ໃຫ້ຢູ່ໃນລະດັບ 100.000 ເຮັກຕາ, ຜົນຜະລິດ ປະມານ 200.000 ໂຕນ.

ພ້ອມດຽວກັນນີ້, ກໍ່ເອົາໃຈໃສ່ ການຜະລິດພືດ ສະບຽງອາຫານ ໃຫ້ໄດ້ ເຊັ່ນ: ຜະລິດ ສາລີຫວານ 291.000 ໂຕນ, ເຜືອກມັນຕ່າງໆ ໃຫ້ໄດ້ 388.700 ໂຕນ, ໄມ້ກິນໝາກລວມ ໃຫ້ໄດ້ 1,66 ລ້ານໂຕນ, ພືດຜັກລວມ ໃຫ້ໄດ້1,5 ລ້ານໂຕນ.

ດ້ານການລ້ຽງສັດ ສືບຕໍ່ປຸກລະດົມ ຊຸກຍູ້ຄອບຄົວ, ນັກທຸລະກິດ ເອກກະຊົນ, ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມ ໃນການ ຈັດຕັ້ງປະຕິບັດ ແຜນງານ ຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ ເພື່ອແນໃສ່ ການສະໜອງຊີ້ນ, ໄຂ່ ແລະ ປາ ໃຫ້ພຽງພໍຢ່າງໜັກແໜ້ນ ໃນຂອບເຂດທົ່ວປະເທດ ໃນນັ້ນ ຈະຕ້ອງສົ່ງເສີມເຮັດໃຫ້ ລະດັບການຂະຫຍາຍພັນຂອງຝູງສັດ 6% ຕໍ່ປີ (ຄວາຍ, ງົວ, ໝູ, ແກະ/ແບ້ ແລະ ສັດປີກ), ຮັກສາລະດັບການຜະລິດ

ປາ ແລະ ສັດນ້ຳປະເພດຕ່າງບໍ່ໃຫ້ຫລຸດບໍ່ໃຫ້ຖອຍລົງ ຊຶ່ງຈະຕ້ອງໄດ້ເອົາໃຈໃສ່ປົກປັກຮັກສາ ລະບົບນິເວດຂອງປາ ທຳມະຊາດ ແລະ ສັດນ້ຳປະເພດຕ່າງໆໃຫ້ມີຄວາມສົມດູນ, ຂະຫຍາຍ ການລ້ຽງປາ ທຸກຮູບແບບ ເຮັດໃຫ້ຜົນຜະລິດເພີ່ມຂຶ້ນ ໃນລະດັບ 10-15 % ຕໍ່ປີ. ທັງນີ້ ເພື່ອຕອບສະໜອງ ການບໍລິໂພກ ໃນປີ 2019 ໃຫ້ພຽງພໍຢ່າງໜັກແໜ້ນໃນຂອບເຂດທົ່ວປະເທດ ຈະຕ້ອງສູ້ຊົນ ຊຸກຍູ້ການຜະລິດຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ 457.980 ໂຕນ ເຊັ່ນ: ການຜະລິດຊີ້ນ 199,210 ໂຕນ, ໄຂ່ 43.770 ໂຕນ ແລະ ປາ 215.000 ໂຕນ, ລະດັບການບໍລິໂພກຕໍ່ຄົນໃນປີມີລະດັບປະມານ 62 ກິໂລ/ຄົນ/ປີ.

ຊຶ່ງພວກເຮົາ ຕ້ອງພະຍາຍາມ ສ້າງຄວາມເຂົ້າໃຈ ຕໍ່ບັນຫາການຮັບປະກັນ ດ້ານໂພຊະນາການ ໃຫ້ກະຈາຍອອກໃນທົ່ວສັງຄົມ ໂດຍສະເພາະ ໃນເຂດຊົນນະບົດ. ຄາດຫມາຍ ສູ້ຊົນ ດ້ານໂພຊະນາການ ແມ່ນເນັ້ນໃສ່ໃຫ້ ການກິນອາຫານ ທີ່ຖືກຕ້ອງ ໃຫ້ຄົບ 05 ໝູ່ ເພື່ອໃຫ້ໄດ້ ພະລັງງານ 2.600 ກິໂລກຼໍລີ/ຄົນ/ວັນ ຫຼື ກິນທາດແປ້ງ ບໍ່ໃຫ້ເກີນ 65 ຫາ 70%, ທາດຊີ້ນໃຫ້ໄດ້ 10 ຫາ 15%, ທາດໄຂມັນ ໃຫ້ໄດ້ 15 ຫາ 20% ແລະ ທາດວິຕາມິນ ແລະ ແຮ່ທາດປະມານ 3-5%. ແຕ່ໃນປັດຈຸບັນ ສັດສ່ວນ ທີ່ພວກເຮົາ ກິນທາດແປ້ງ ເກືອບກ່ວາ 90%.

### 1.2 ແຜນງານ ຜະລິດ ກະສິກຳ ແລະ ປ່າໄມ້ ເປັນສິນຄ້າ:

#### 1.2.1 ແຜນດຳເນີນງານ ຜະລິດ ກະສິກຳ ແລະ ປ່າໄມ້ ເປັນສິນຄ້າ.

ບົນພື້ນຖານ ການຮັບປະກັນ ຄວາມໝັ້ນຄົງດ້ານສະບຽງ ທີ່ມີພຽງພໍແລ້ວ ແລະ ຄາດໝາຍ ສົ່ງອອກ ເຂົ້າ ໃຫ້ໄດ້ 01 ລ້ານໂຕນ ໃນປີ 2020. ສຳລັບ ໃນປີ 2019 ສູ້ຊົນຜະລິດເຂົ້າ ເພື່ອສົ່ງອອກ ໃຫ້ໄດ້ 400.000 ໂຕນ (ລວມທັງສົ່ງອອກເປັນ ທາງການ ແລະ ບໍ່ເປັນທາງການ). ພ້ອມດຽວກັນນີ້, ກໍ່ເອົາໃຈໃສ່ ການຜະລິດພືດ ເປັນສິນຄ້າ ຕ່າງໆ ທີ່ມີທ່າແຮງທາງ ດ້ານການຜະລິດ ແລະ ການຕະຫຼາດ ເຊັ່ນ: ກາເຟ ໃຫ້ໄດ້ 160.000 ໂຕນ, ສາລີອາຫານສັດ ໃຫ້ໄດ້ 1 ລ້ານໂຕນ. ອ້ອຍ ໃຫ້ໄດ້ 1,94 ລ້ານໂຕນ. ຢາສູບ  65.800 ໂຕນ, ມັນຕົ້ນ 2,28 ລ້ານໂຕນ. ຖົ່ວດິນ 51.300 ໂຕນ ຖົ່ວເຫຼືອງ 9.300 ໂຕນ, ໝາກງາ 16.800 ໂຕນ, ໝາກເດືອຍ 279.480 ໂຕນ ແລະ ພືດອື່ນໆ. ໂດຍເອົາໃຈໃສ່ ຍົກລະດັບ ການຜະລິດ ຕາມມາດຕະຖານ ກະສິກຳ ທີ່ດີ (GAP). ເພື່ອບັນລຸຄາດໝາຍດັ່ງກ່າວ ຈະຕ້ອງໄດ້ ຫັນເປັນໂຄງການລະອຽດ ໂດຍສະເພາະ ແມ່ນ ສິນຄ້າທີ່ ເປັນບຸລິມະສິດ ເປັນຕົ້ນແມ່ນ ໂຄງການ ຜະລິດເຂົ້າ ກຳນົດເອົາ 05 ແຂວງ ປະກອບມີ ແຂວງ ຄຳມ່ວນ, ສະຫວັນນະເຂດ ເປັນແຂວງເກົ່າ ແລະ ສະເໜີຕື່ມ ນະຄອນຫຼວງວຽງຈັນ, ຈຳປາສັກ ແລະ ສາລະວັນ. ໂຄງການຜະລິດ ພືດຜັກ ກຳນົດເອົາ 03 ແຂວງ ຄື: ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງ ຈຳປາສັກ. ໂຄງການຜະລິດ ໝາກກ້ຽງ ກຳນົດເອົາ 02 ແຂວງ ຄື: ແຂວງ ຫຼວງພະບາງ (ໝາກກ້ຽງນ້ຳບາກ) ແລະ ແຂວງ ວຽງຈັນ (ເຂດວັງວຽງ-ກາສີ) ແລະ ພືດອື່ນໆ ກໍ່ສືບຕໍ່ເອົາໃສໃຈຊຸກຍູ້ສົ່ງເສີມຢ່າງເປັນປົກກະຕິ.

ດ້ານການລ້ຽງສັດ ແລະ ການປະມົງ ເປັນບູລິມະສິດໜຶ່ງທີ່ສຳຄັນ ເພື່ອຫັນເອົາໂຄງການຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ລົງສູ່ທາງເລິກໃນການຈັດຕັ້ງປະຕິບັດ ໃນເຂດທີ່ມີທ່າແຮງຢູ່ແຕ່ລະພາກເປັນຈຸດເລີ່ມຕົ້ນ ແລະ ຂະຫຍາຍອອກໃນອານາຄົດ. ໃນປີ 2019 ນີ້, ຈະຫັນເອົາໂຄງການລົງທຶນຂອງລັດສຸມໃສ່ການສຳຫລວດຈັດສັນແບ່ງເຂດການຜະລິດຢູ່ ໂຄງການຈຸດສຸມ ດ້ານວຽກງານ ລ້ຽງສັດ ແລະ ການປະມົງ ແມ່ນ ປະກອບມີ 3 ໂຄງການ ຊຶ່ງເຫັນວ່າ ການກຳນົດພື້ນທີ່ໂຄງການ ມີການປ່ຽນແປງ ທັງນີ້ ເນື່ອງຈາກ ທິດຊີ້ນຳ ຂອງ ທ່ານລັດຖະມົນຕີ ໄດ້ຊີ້ນຳເພີ່ມເຕີມຄື: 1) ໂຄງການ ລ້ຽງໝູ ກຳນົດເອົາ 05 ແຂວງ ຄື: ນະຄອນຫຼວງວຽງຈັນ, ແຂວງ ວຽງຈັນ, ແຂວງ ຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ, 2) ໂຄງການ ລ້ຽງປາ ກະຊັງ ກຳນົດເອົາ 03 ແຂວງ ຄື: ນະຄອນຫຼວງວຽງຈັນ, ແຂວງ ວຽງຈັນ ແລະ ແຂວງ ບໍລິຄຳໄຊ ແລະ 3) ໂຄງການ ລ້ຽງງົວ ກຳນົດເອົາ 03 ແຂວງ ຄື: ນະຄອນຫຼວງວຽງຈັນ, ຊຽງຂວາງ ແລະ ແຂວງ ໄຊສົມບູນ ໂດຍສຸມໃສ່ ສ້າງ ໂຄງການ ຕົວແບບ ຢູ່ ນະຄອນຫຼວງ ກ່ອນ ໃນໄລຍະລິເລີ່ມ. ໃນນັ້ນ, ຈະໄດ້ກຳນົດແບ່ງເຂດການການຜະລິດ, ການປົກປັກຮັກສາແນວພັນສັດ, ພັນສັດນ້ຳ ແລະ ເຂດສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ຕິດພັນກັບການປົກປັກຮັກສາສະພາບແວດລ້ອມໃຫ້ມີຄວາມຍືນຍົງ. ຄຽງຄູ່ກັບການສົ່ງເສີມຄວາມອາດສາມາດຂອງການຜະລິດສັດ ແລະ ປາ ເປັນສິນຄ້າ ໃນທຸກຮູບແບບ ເພື່ອສະໜອງໃຫ້ແກ່ ຕະລາດຕົວເມືອງໃຫ່ຍ ແລະ ນັກທ່ອງທ່ຽວ, ສ້າງເງື່ອນໄຂ ແລະ ບົດຮຽນກ້າວຂຶ້ນເຂົ້າຮ່ວມຕະລາດສາກົນໃນອານາຄົດ. ຂະຫຍາຍການຜະລິດພາຍໃນ ແລະ ສົ່ງເສີມການລົງທຶນຈາກຕ່າງປະເທດ ເຂົ້າສູ່ຈຸດສຸມພັດທະນາການຜະລິດໃນເຂດທົ່ງພຽງ ແລະ ເຂດເນີນສູງຢ່າງຕັ້ງໜ້າ ເພື່ອເຮັດການຜະລິດເປັນອັນສະເພາະແບບຄົບວົງຈອນ ຕິດພັນກັບການປຸງແຕ່ງ

ທີ່ມີຄຸນນະພາບ ແລະ ມີຄວາມປອດໄພ ເພື່ອເປັນສິນຄ້າຂາອອກເທື່ອລະກ້າວ ແນໃສ່ເຂົ້າຮ່ວມ ຕະລາດສາກົນເທື່ອລະກ້າວ.

**1.3 ບັນດາ ແຜນດຳເນີນງານ ສະໜັບສະໜູນ ໃຫ້ 2 ແຜນງານຫຼັກ.**

**1.3.1 ແຜນດຳເນີນງານ ຄຸ້ມຄອງ ແລະ ພັດທະນາ ດິນກະສິກຳ:**

**1) ວຽກງານສຳຫຼວດ, ຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ.**

ສືບຕໍ່ ສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ ໃນລະດັບ ມະຫາພາກ ແລະ ຈຸລະພາກ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

- ວຽກງານ ສຳຫຼວດຂອບເຂດ ແລະ ປະເມີນຄຸນນະພາບ ດິນນາເຂດຊົນລະປະທານຢູ່ 10 ແຂວງຈຸດສຸມ ເພື່ອຮັບປະກັນພື້ນທີ່ດິນນາ ຈັດສັນໃຫ້ມີຄວາມເໝາະສົມກັບ ສະພາບເງື່ອນໄຂຕົວຈິງໃນທົ່ວເມືອງ ແລະ ເພື່ອປະເມີນຄຸນນະພາບຂອງພືດປູກ ສຳລັບຊາວນາຢູ່ເຂດຊົນລະປະທານ ຂອງ 10 ແຂວງຈຸດສຸມ ຄາດວ່າ ຈຳນວນ 10 ເມືອງ ໃນ 10 ແຂວງຄື:(1) ເມືອງສິງ ແຂວງຫລວງນໍ້າທາ; (2) ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ; (3) ເມືອງພຽງ ແຂວງໄຊຍະບູລີ; (4) ເມືອງ ໂພນໂຮງ ແຂວງວຽງຈັນ; (5) ເມືອງໄຊທານີ ນະຄອນຫຼວງ; (6) ເມືອງທ່າພະບາດ ແຂວງບໍລິຄຳໄຊ, (7) ເມືອງໄຊບົວທອງ ແຂວງຄຳມ່ວນ; (8) ເມືອງໄກສອນ ແຂວງສະຫວັນນະເຂດ; (9) ເມືອງວາປີ ແຂວງສາລະວັນ; (10) ເມືອງຈຳປາສັກ ແຂວງຈຳປາສັກ.
- ວຽກງານ ການສຳຫຼວດທີ່ດິນກະສິກຳ ລະດັບມະຫາພາກ ເພື່ອສຳຫຼວດ ແລະ ວາງແຜນການນຳໃຊ້ທີ່ດິນກະສິກຳ ໃຫ້ສອດຄ່ອງກັບເງື່ອນເສດຖະກິດສັງຄົມ ແລະ ສະພາບເງື່ອນໄຂຕົວຈິງຂອງແຕ່ລະເຂດ ໃນລະດັບມະຫາພາກ ຄາດວ່າ ຈຳນວນ 2 ແຂວງ ຄື: ແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ.
- ວຽກງານ ການສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ ຂັ້ນກຸ່ມບ້ານ ເພື່ອຮັບປະກັນໃຫ້ທີ່ດິນກະສິກຳ ໄດ້ຖືກກຳນົດ ການວາງແຜນນຳໃຊ້ທີ່ດິນກະສິກຳ ໃນຂັ້ນກຸ່ມບ້ານ ໃຫ້ ເໝາະສົມກັບສະພາບເງື່ອນໄຂຕົວຈິງ, ຕາມສະພາບພື້ນທີ່ ແລະ ທ່າແຮງຂອງແຕ່ລະຂົງເຂດພື້ນທີ່ ຄາດວ່າ ຈຳນວນ 15 ກຸ່ມບ້ານ ຄື: (1) ກຸ່ມຜາສັງ ເມືອງເຟືອງ, (2) ກຸ່ມບ້ານເມືອງຄີ ເມືອງແມດ, (3) ກຸ່ມບ້ານຜາປ່ອງ ເມືອງຫີນເຫີບ ແຂວງວຽງຈັນ; (4) ກຸ່ມບໍເຍຍ ເມືອງ ໜອງແຮດ, (5) ກຸ່ມບຸນຖິ່ນ ເມືອງຄຳ ແຂວງຊຽງຂວາງ; (6) ກຸ່ມບ້ານຈອມທອງ ເມືອງວຽງທອງ, (7) ກຸ່ມບ້ານທົ່ງແສນ ເມືອງຄຳເກີດ, (8) ຈຸດສຸມພັດທະນາໜອງກອກ ເມືອງຄຳເກີດ, (9) ຈຸດສຸມຜາເມືອງມີ 9 ບ້ານ ເມືອງບໍລິຄັນ ແຂວງບໍລິຄຳໄຊ; (10)ຈຸດສຸມລັງຄັງ-ວັງມະເນີ ເມືອງບົວລະພາ, (11)ຈຸດສຸມປ່າໝາມ ເມືອງມະຫາໄຊ, (12)ຈະແລດ, ບົວລະພາ (ສະເໜີໃໝ່) ເມືອງມະຫາໄຊ, (13) ບ້ານມ່ວງໄຂ (ສະເໜີໃໝ່) ເມືອງຫີນບູນ ແຂວງຄຳມ່ວນ; (14). ກຸ່ມບ້ານຕັ້ງອາໄລ ເມືອງນອງ, (15) ກຸ່ມບ້ານລະໂກ ເມືອງເຊໂປນ ແຂວງສະຫັວນນະເຂດ.
- ວຽກງານ ການສຳຫຼວດແຜນທີ່ດິນ ເພື່ອຮັບປະກັນ ການສຳຫຼວດ ເກັບກຳຂໍ້ມູນທາງດ້ານດິນ ສາມາດຈຳແນກປະເພດດິນອອກເປັນ ກຸ່ມດິນ, ໝວດດິນ, ປະເພດດິນ ແລະ ຫົວໜ່ວຍຊະນິດຂອງດິນ ໃນແຕ່ລະທ້ອງຖິ່ນ ຄາດວ່າ ຈຳນວນ 10 ເມືອງຄື: ເມືອງຫີນເຫີບ, ເມືອງບໍ່ແຕນ ແລະ ເມືອງແກນທ້າວ ແຂວງໄຊຍະບູລີ ; ເມືອງຮຸນ, ເມືອງແບ່ງ, ແຂວງອຸດົມໄຊ; ເມືອງຈອມເພັດ, ເມືອງຫຼວງພະບາງ, ເມືອງນໍ້າບາກ, ເມືອງນານ, ເມືອງງອຍ ແຂວງຫຼວງພະບາງ.
- ວຽກງານ ການພັດທະນາຂໍ້ມູນຂ່າວສານທາງພູມສາດ ເພື່ອປັບປຸງຂໍ້ມູນ GIS ໃນຮູບແບບ Spatial data ແລະ ສ້າງມາດຖານ ຂອງຂໍ້ມູນໃຫ້ມີລະບົບ ແລະ ໃນຮູບແບບສາກົນ ໃຫ້ຮູ້ແຫຼ່ງທີ່ມາຂອງຂໍ້ມູນຂ່າວສານທາງພູມສາດ GIS ໃຫ້ມີຄວາມຊັດເຈນ, ລະອຽດ ແລະ ຖືກຕ້ອງທີ່ສຸດ ໃນລະດັບມະຫາພາກ ຄາດວ່າ ຈຳນວນ 2 ແຂວງຄື: ແຂວງໄຊຍະບູລີ ແລະ ແຂວງອຸດົມໄຊ.
- ວຽກງານ ພັດທະນາບຸກຄະລາກອນ ສຳລັບພະນັກງານວິຊາການສຳຫຼວດ ແລະ ວາງແຜນການນຳໃຊ້ທີ່ດິນກະສິກຳ ຂັ້ນແຂວງ ແລະ ເມືອງທົ່ວປະເທດ ເພື່ອສ້າງຄວາມເຂັ້ມແຂງທາງດ້ານເຕັກນິກວິຊາການໃນດ້ານຕ່າງໆເຊັ່ນ: ການສຳຫລວດດິນ, ການນຳໃຊ້ລະບົບ ຂໍ້ມູນຂ່າວສານທາງພູມສາດ (GIS) ແລະ ການວາງແຜນນຳໃຊ້ທີ່ດິນກະສິກຳ ຄາດວ່າ ຈຳນວນ 3 ແຂວງຄື: ແຂວງອັດຕະປື, ແຂວງເຊກອງ, ແຂວງ ສາລະວັນ.

**2) ວຽກງານອະນຸລັກ ແລະ ພັດທະນາທີ່ດິນກະສິກຳ.**

**ວຽກງານອະນຸລັກ ແລະ ປັບປຸງດິນ**: ສືບຕໍ່ສ້າງແຜນປັບປຸງ ສວນທົດສອບການປູກພືດປ້ອງກັນການເຊາະເຈື່ອນຂອງດິນ ພື້ນທີ່ສູນພັດທະນາທີ່ດິນກະສິ ກຳ ແລະ ຄຸ້ມຄອງນຳໃຊ້ຝຸ່ນ. ສືບຕໍ່ປັບປຸງປຶ້ມຄູ່ມືເຕັກນິກການປູກພືດແບບຕ້ານກັນເຈື່ອນຂອງດິນກະສິກຳ. ສືບຕໍ່ເກັບກຳຂໍ້ມູນ ເຕົ້າໂຮມແນວພັນຖົ່ວຈຳນວນ 50 ແນວພັນໃນພື້ນທີ່ ສູນພັດທະນາທີ່ດິນກະສິກຳ ແລະ ຄຸ້ມຄອງນຳໃຊ້ຝຸ່ນ. ກະກຽມການປູກພືດ ໃສ່ໃນໂຖດິນທີ່ເອົາມາຈາກ 4 ແຂວງ ເພື່ອວາງສະແດງໃນວັນດິນໂລກປະຈຳປີ 2017. ສືບຕໍ່ເຂົ້າຮ່ວມເປັນຄູຝຶກ ຮ່ວມກັບໂຄງການຮ່ວມມືລາວເຢຍລະມັນ (GIZ), ຂອງພະແນກຄຸ້ມຄອງ ແລະ ພັດທະ ນາທີ່ດິນກະສິກຳ.

**ວຽກງານພັດທະນາທີ່ດິນກະສິກຳ**: ກະກຽມລົງສຳຫຼວດ 03 ທົ່ງພຽງ, ແຂວງຜົ້ງສາລີ, ເມືອງຍອດອູ, ແຂວງອຸດົມໄຊ, ເມືອງແບງ ແລະ ເມືອງຮຸນ. ສືບຕໍ່ສ້າງສູດຝຸ່ນອິງຄະທາດ ແລະ ຜະລິດຝຸ່ນອິງຄະທາດສູດໃໝ່. ສືບຕໍ່ທົດລອງອັດຕາຝຸ່ນອິງຄະທາດ ແລະ ນ້ຳສະກັດຈາກປາຕໍ່ກັບພືດຜັກໃນເຮືອນຮົ່ມ. ສືບຕໍ່ປູກພືດໝູນວຽນໃນລະດູຝົນໃນພື້ນທີ່ສູນພັດທະນາທີ່ດິນ ແລະ ຄຸ້ມຄອງນຳໃຊ້ຝຸ່ນ.

ວຽກງານຂໍ້ມູນຂ່າວສານ ແລະ ຝຶກອົບຮົມ: ຈັດຕັ້ງປະຕິບັດໂຄງການສ້າງຊາວນາຕົວແບບປັບປຸງດິນນາ 10 ແຂວງຈຸດສຸມລັດຖະບານ ຈຳນວນ 11 ເມືອງ. ສືບຕໍ່ຈັດລຽງ ແລະ ອອກແບບຄູ່ມືສຳລັບວິຊາການດິນຂັ້ນບ້ານ. ສືບຕໍ່ສັງລວມເອກະສານ, ບົດລາຍງານ, ຄູ່ມື, ແຜ່ນພັບ ແລະ ສິ່ງພິມຕ່າງໆ ໃຫ້ພະແນກຄຸ້ມຄອງທີ່ດິນກະສິກຳ ເພື່ອໂຄສະນາ ແລະ ເຜີຍແຜ່ ລົງເວັບໄຊຂອງກົມ ຄພດກ. ສືບຕໍ່ສັງລວມ ແລະ ດັດແກ້ ແຜ່ນພັບ ຈຳນວນ 10 ເລື່ອງ , ໂປດເຕີ 7 ເລື່ອງ ແລະ ຮູບຈຳລອງ 1 ເລື່ອງ ເພື່ອວາງສະ ແດງໃນກອງປະຊຸມວັນດິນສາກົນ ທີ່ໃນທ້າຍເດືອນ ພະຈິກ 2017 ແລະ ວາງສະແດງ. ສືບຕໍ່ກະກຽມ ແລະ ສັງລວມຂໍ້ມູນ ເພື່ອເຮັດເປັນວີດີໂອ ເຜີຍແຜ່ກ່ຽວກັບພາລະບົດບາດ ແລະ ໜ້າທີ່ຂອງສູນ ອພດ ໃນກອງປະຊຸມວັນດິນສາກົນ ທີ່ໃນທ້າຍເດືອນ ພະຈິກ 2017. ຂຶ້ນແຜນງົບປະມານໃນການລົງເກັບກຳຂໍ້ມູນ ເພື່ອວາງແຜນພັດທະນາທີ່ດິນກະສິກຳ ທີ່ ບ້ານ ປ່າກວ້ຍ ແລະ ບ້ານ ຄຳປ່າແໜ, ເມືອງ ຈຳພອນ, ແຂວງ ສະຫວັນນະເຂດ ແລະ ລົງຈັດຕັ້ງປະຕິບັດ. ກະກຽມຈັດພິມແຜ່ນພັບກ່ຽວກັບເຕັກການປັບປຸງດິນ ຈຳນວນ 1.000 ສະບັບ.

**3) ວຽກງານຄຸ້ມຄອງ ທີ່ດິນກະສິກຳ:**

- ສືບຕໍ່ຜັນຂະຫຍາຍ ແຜນຍຸດທະສາດ ຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມາເປັນແຜນກິດຈະກຳລະອຽດ ໂດຍອີງໃສ່ພາລະບົດບາດ ຂອງພະແນກຄຸ້ມຄອງທີ່ດິນກະສິກຳ, ແມ່ນຈະຕ້ອງໄດ້ສືບຕໍ່ສຸມໃສ່ບັນດາໜ້າວຽກ ທີ່ໄດ້ລະບຸໄວ້ໃນບົດສະເໜີໂຄງການ ທີ່ໄດ້ສະເໜີເອົາໄວ້ ຮອດປີ 2020 ເຊິ່ງມີລາຍລະອຽດຂອງແຕ່ລະໂຄງການລົງທຶນແຫ່ງລັດ ແລະ ໂຄງການຮ່ວມມືລາວ-ເຢຍລະມານຄື:
  1). ໂຄງການ ຂຶ້ນສຳມະໂນດິນນາທີ່ນອນໃນ 10 ແຂວງຈຸດສຸມຂອງລັດຖະບານ, ແຜນການເຄື່ອນໄຫວຈັດຕັ້ງປະຕິບັດ ໃນເນື້ອທີ່ 32,930 ເຮັກຕາ ຈຳນວນ 218 ບ້ານ, ໃນ 10 ເມືອງ 10 ແຂວງ ຈຸດສຸມຂອງລັດຖະບານ (ແຂວງຫຼວງນ້ຳທາ, ແຂວງບໍ່ແກ້ວ, ແຂວງໄຊຍະບູລີ, ແຂວງວຽງຈັນ, ແຂວງນະຄອນຫຼວງວຽງຈັນ, ແຂວງບໍລິຄຳໄຊ, ແຂວງຄຳມ່ວນ, ແຂວງສະຫັວນນະເຂດ ແລະ ແຂວງຈຳປາສັກ).
  2). ໂຄງການ ສ້າງເຄືອຄ່າຍ ແລະ ພັດທະນາລະບົບຖານຂໍ້ມູນທີ່ດິນກະສິກຳ ທົ່ວປະເທດ (146 ເມືອງ 17 ແຂວງ) ແຜນການເຄື່ອນໄຫວ ຈັດຕັ້ງປະຕິບັດຢູ່ 02 ແຂວງຄື: (ແຂວງສາລະວັນ) ມີຈຳນວນ 07 ເມືອງຄື: ເມືອງຕາໂອ້ຍ, ເມືອງຕຸ້ມລານ, ເມືອງວາປີ, ເມືອງນະຄອນເພັງ, ເມືອງຄົງເຊໂດນ, ເມືອງເລົ່າງາມ ແລະ ເມືອງສະມ້ວຍ; (ແຂວງຈຳປາສັກ) ມີຈຳນວນ 10 ເມືອງຄື: ເມືອງປາກເຊ, ເມືອງຊະນະສົມບູນ, ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ, ເມືອງປະທຸມພອນ, ເມືອງໂພນທອງ, ເມືອງຈຳປາສັກ, ເມືອງສຸຂຸມາ , ເມືອງມູນລະປະໂມກ ແລະ ເມືອງໂຂງ.
  3). ໂຄງການ ຄຸ້ມຄອງ ການນຳໃຊ້ປະໂຫຍດເຂດທີ່ດິນກະສິກຳ ທີ່ເປັນບູລິມະສິດ ແລະ ເອກະລັກສະເພາະທ້ອງຖິ່ນ ແຜນການເຄື່ອນໄຫວ ຈັດຕັ້ງປະຕິບັດຢູ່ ແຂວງເຊກອງ (ເມືອງທ່າແຕງ) ບ້ານປ່ອງ ຈຳນວນ 36 ຄອບຄົວ, ແລະ ບ້ານຫ້ວຍເຊ ຈຳນວນ 45 ຄອບຄົວ.
  4). ໂຄງການ ອອກໃບຢັ້ງຢືນການນຳໃຊ້ ແລະ ພັດທະນາທີ່ດິນກະສິກຳ ແຜນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ຈຳນວນ 38 ບ້ານ, 10 ເມືອງ 02 ແຂວງ ( ແຂວງອຸດົມໄຊ 06 ເມືອງ ) ເມືອງນາໝໍ້, ເມືອງງາ

, ເມືອງແບງ, ເມືອງໄຊ, ເມືອງຮຸນ ແລະ ເມືອງປາກແບງ; (ແຂວງເຊກອງ 04 ເມືອງ) ເມືອງລະມາມ, ເມືອງດາກຈຶງ, ເມືອງທ່າແຕງ ແລະ ເມືອງກະລຶມ.

5). ໂຄງການຮ່ວມມືລາວ-ເຢຍລະມານ ມີແຜນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຢູ່ແຂວງ ແລະ ເມືອງເປົ້າໝາຍ ເຊິ່ງປະກອບມີ 02 ແຜນງານຄື:

– ແຜນງານຄຸ້ມຄອງທີ່ດິນ ແລະ ການວາງແຜນແບບມີສ່ວນຮ່ວມ (LMDP) ຈັດຕັ້ງປະຕິບັດວຽກງານ ຈັດສັນທີ່ດິນ ແລະ ການວາງແຜນຄຸ້ມຄອງທີ່ດິນກະສິກຳ ແບບມີສ່ວນຮ່ວມຂັ້ນບ້ານ ຢູ່ 04 ແຂວງ ( ແຂວງໄຊຍະບູລີ) ເມືອງຊຽງຮ່ອນ ແລະ ເມືອງພຽງ; (ແຂວງຫຼວງນໍ້າທາ) ເມືອງລອງ ແລະ ເມືອງສິງ; (ແຂວງຄຳມ່ວນ) ເມືອງບົວລະພາ ແລະ ເມືອງມະຫາໄຊ;(ແຂວງຫົວພັນ) ເມືອງວຽງໄຊ ແລະ ເມືອງຊຳເໜືອ; ຖ້າເປັນໄປໄດ້ ແມ່ນຈັດຕັ້ງປະຕິບັດວຽກງານຕື່ມອີກ 01 ເມືອງຂອງແຂວງໄຊຍະບູລີ ແລະ ຄາດໝາຍວ່າເຮັດ 08 ບ້ານຕໍ່ເມືອງ.
– ແຜນງານເສີມສ້າງຄວາມໝັ້ນຄົງໃນການຄຸ້ມຄອງທີ່ດິນ (ELTeS) ຈັດຕັ້ງປະຕິບັດວຽກງານຈັດສັນທີ່ດິນ ແລະ ການວາງແຜນຄຸ້ມຄອງທີ່ດິນກະສິກຳ ແບບມີສ່ວນຮ່ວມຂັ້ນບ້ານ ຢູ່ 04 ແຂວງ ( ແຂວງໄຊຍະບູລີ) ເມືອງຊຽງຮ່ອນ ແລະ ເມືອງພຽງ; (ແຂວງຫຼວງນໍ້າທາ) ເມືອງລອງ ແລະ ເມືອງສິງ; (ແຂວງຄຳມ່ວນ) ເມືອງບົວລະພາ ແລະ ເມືອງມະຫາໄຊ; (ແຂວງຫົວພັນ) ເມືອງວຽງໄຊ ແລະ ເມືອງຊຳເໜືອ; ຄາດໝາຍວ່າເຮັດ 05 ບ້ານຕໍ່ເມືອງ.

6). ໂຄງການສ້າງ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ(ຮ່າງດຳລັດວ່າດ້ວຍທີ່ດິນກະສິກຳ, ຄຳສັ່ງ, ຂໍ້ຕົກລົງ, ແຈ້ງການຂອງລັດຖະມົນຕີ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ.

7). ໂຄສະນາເຜີຍແຜ່ ຂໍ້ມູນຂ່າວສານ ແລະ ສ້າງຖານຂໍ້ມູນ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາທີ່ດິນ.

### 1.3.2 ແຜນດຳເນີນງານ ພັດທະນາ ພື້ນຖານ ໂຄງລ່າງ ກະສິກຳ ແລະ ປ່າໄມ້:

**(1) ດ້ານຊົນລະປະທານ:** ສູ້ຊົນສະໜອງນ�້າ ໃຫ້ແກ່ ການຜະລິດລະດູແລ້ງ ປີ 2019 ໃຫ້ໄດ້ 165.000 ເຮັກຕາ, ໃນນັ້ນ ສະໜອງໃຫ້ແກ່ ເນື້ອທີ່ປູກເຂົ້າ ນາແຊງ 100.000 ເຮັກຕາ, ແຜນການສະໜອງ ໃຫ້ແກ່ ການປູກພືດ ໃນເຂດ ຊົນລະປະທານ 65.000 ເຮັກຕາ. ພ້ອມທັງ ສືບຕໍ່ ຟື້ນຟູ ສ້ອມແປງ ລະບົບ ຊົນລະປະທານ ທີ່ເກົ່າແກ່ຊຸດໂຊມ ໃຫ້ທັນກັບ ລະດູການ, ຊຸກຍູ້ການປົກປັກ ຮັກສາ ແຫຼ່ງນໍ້າ ເພື່ອບໍ່ໃຫ້ມີສະພາບປົກແຫ້ງ, ຕື້ນເຂີນເກີດຫາດຊາຍ ແລະ ສືບຕໍ່ປັບປຸງສ້າງແຜນຍຸດທະສາດການພັດທະນາຊົນລະປະທານ ຮອດປີ 2025 ວິໄສທັດຮອດປີ 2030.

**(2) ດ້ານ ການຄົ້ນຄວ້າ ທົດລອງ:** ສືບຕໍ່ປັບປຸງ ສູນ/ສະຖານີ ຈຳນວນ 06 ແຫ່ງ ເພື່ອໃຫ້ສາມາດ ສະໜອງ ແນວພັນ ພືດ, ສັດ ແລະ ສັດນໍ້າ ໃຫ້ແກ່ ຊາວກະສິກອນ, ກຸ່ມຜະລິດ, ຜູ້ປະກອບການ.

**(3) ສູນບໍລິການເຕັກນິກ:** ສືບຕໍ່ປະສານສົມທົບກັບ ທ້ອງຖິ່ນ ປັບປຸງ ແລະ ກໍ່ສ້າງສູນ/ສະຖານນີ ບໍລິການ ເຕັກນິກ ກະສິກຳ ໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະ ສູນທີ່ມີແລ້ວ ໃນປະຈຸບັນໃຫ້ໄດ້ 20 ສູນ ແລະ 33 ສະຖານີ ໂດຍເລັ່ງໃສ່ ບັນດາສູນ ທີ່ນອນຢູ່ໃນ 10 ແຂວງເປົ້າໝາຍ ຜະລິດສະບຽງອາຫານ ຂອງ ລັດຖະບານ ແລະ ໃນຂອບເຂດ ທົ່ວປະເທດ ໃຫ້ສາມາດ ເຮັດໜ້າທີ່ ໃນການ ບໍລິການ ດ້ານເຕັກນິກການຜະລິດໃຫ້ກັບ ຊາວກະສິ ກອນ ໃຫ້ໄດ້ 95% ຂຶ້ນໄປ.

### 1.3.3 ແຜນດຳເນີນງານ ຄົ້ນຄວ້າ-ທົດລອງ ກະສິກຳ ແລະ ປ່າໄມ້:

ສືບຕໍ່ ຜະລິດແນວພັນເຂົ້າ ໃຫ້ໄດ້ທັງໝົດ 61.320 ໂຕນ, ໃນນັ້ນ ແນວພັນ ລຸ້ນ1 ຈຳນວນ 120 ໂຕນ, ແນວພັນ ລຸ້ນ 2 ຈ�ານວນ 2.700 ໂຕນ, ແນວພັນລຸ້ນ 3 ຈ�ານວນ 8.500 ໂຕນ ແລະ ແນວພັນດີ ຈຳນວນ 50.000-60.000 ໂຕນ. ແນວພັນ ສາລີ 200 ໂຕນ, ຖົ່ວ ແລະ ພືດຕ່າງໆ 10 ໂຕນ, ແນວພັນຜັກ 1,5 ໂຕນ, ເບ້ຍໄມ້ໃຫ້ໝາກ 50.000 ເບ້ຍ, ແນວພັນຫຍ້າ ແລະ ພືດອາຫານສັດ 200 ໂຕນ ແລະ ຜະລິດເບັ້ຽໄມ້ 1.000.000 ເບັ້ຍ. ແນວພັນສັດ ບໍລິການ ປະສົມພັນທຽມ ແລະ ຂະຫຍາຍ ແນວພັນງົວ 4.000 ແມ່, ຂະຫຍາຍແນວພັນໝູລາດ 1.500 ໂຕ, ຜະລິດ ແລະ ຂະຫຍາຍແນວພັນສັດປີກ ໃຫ້ໄດ້ 80.000 ໂຕ, ພ້ອມທັງ ສືບຕໍ່ ເອົາໃຈໃສ່ ປະຕິບັດ ແຜນດຳເນີນງານ ດ້ານວິຊາການ ໃຫ້ມີປະສິດທິຜົນ.

### 1.3.4 ແຜນດຳເນີນງານ ສົ່ງເສີມ ແລະ ບໍລິການ ເຕັກນິກ ກະສິກຳ ແລະ ປ່າໄມ້:

ສືບຕໍ່ ເອົາໃຈໃສ່ ຄຸ້ມຄອງ ບັນດາສູນ/ສະຖານີ ບໍລິການ ເຕັກນິກ ກະສິກຳ ແລະ ປ່າໄມ້ ມີ 187 ແຫ່ງ ໃນນັ້ນ ມີສູນບໍລິການ ເຕັກນິກ ກະສິກຳ ແລະ ປ່າໄມ້ ມີ 47 ແຫ່ງ ( ສູນທີ່ຂຶ້ນກັບ ສູນກາງ ຄຸ້ມຄອງມີ 3 ແຫ່ງ ແລະ ສູນທີ່ ຂຶ້ນກັບ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຄຸ້ມຄອງ 44 ແຫ່ງ), ສະຖານີ ບໍລິການ ເຕັກນິກ ກະສິ ກຳ ຈຳນວນ 140 ແຫ່ງ. ສືບຕໍ່ ປັບປຸງກຸ່ມ ທີ່ມີແລ້ວໃນປະຈຸບັນ ໃຫ້ເຂົ້າ ສູ່ລະບຽບຫຼັກການ, ສ້າງຕັ້ງກຸ່ມໃໝ່ ຕາມ ທ່າແຮງ ບ່ອນທີ່ມີເງື່ອນໄຂ, ລວມທັງ ກຸ່ມຮຽນຮູ້, ກຸ່ມປູກຝັງ, ກຸ່ມລ້ຽງສັດ, ສ້າງສະຫະກອນ ການຜະລິດ ກະສິກຳ ແລະ ຈົດທະບຽນ ສະຫະກອນ ຕາມດຳລັດ 136/ນຍ. ນອກນັ້ນ, ກໍ່ສືບຕໍ່ປະສານສົມທົບກັບ ທ້ອງຖິ່ນປັບປຸງ ແລະ ກໍ່ສ້າງສູນ/ສະຖານີ ບໍລິການ ເຕັກນິກກະສິກຳ ໃຫ້ມີຄວາມເຂັ້ມແຂງ, ໂດຍເລັ່ງໃສ່ບັນດາສູນທີ່ນອນຢູ່ໃນ 10 ແຂວງ ເປົ້າໝາຍ ຜະລິດສະບຽງອາຫານ ຂອງ ລັດຖະບານ ແລະ ໃນຂອບເຂດທົ່ວປະເທດ ໃຫ້ສາມາດ ເຮັດໜ້າທີ່ ໃນການ ບໍລິການ ດ້ານເຕັກນິກ ການຜະລິດ ໃຫ້ກັບຊາວກະສິກອນ. ພ້ອມດຽວກັນນີ້, ຕ້ອງສຳເລັດ ການສ້າງພາລະບົດບາດ ລວມຂອງສູນ ແລະ ສະຖານີບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ແລະ ສືບຕໍ່ສົມທົບກັບ ພະແນກ ກະສິກຳ, ປ່າໄມ້ ແລະ ພັດທະນາ ຊົນນະບົດ ແຂວງ, ນະຄອນຫຼວງ ເພື່ອສ້າງພາລະບົດບາດ ເປັນອັນສະເພາະຂອງບັນດາສູນ ແລະ ສະ ຖານີດັ່ງກ່າວໃຫ້ມີຄວາມ ສອດຄ່ອງກັບເງື່ອນໄຂ ແລະ ທ່າແຮງຂອງຕົນ. ສຳລັບ ວຽກສົ່ງເສີມ ການນຳໃຊ້ເຕັກນິກ ແລະ ກົນຈັກກະສິກຳ ຕ້ອງສຸມໃສ່ ການສົ່ງເສີມ ນຳໃຊ້ ກົນຈັກ ກະສິກຳ ໂດຍສ້າງກົນໄກ ການສຳພັນ ຮ່ວມມື ລະຫວ່າງ ລັດ, ຜູ້ປະກອບການ ແລະ ກຸ່ມຜູ້ຜະລິດ ແລະ ຊາວກະສິກອນ ໃນການ ບໍລິການ ກົນຈັກ ກະສິກຳ ຊຶ່ງຈະ ເລີ່ມ ທົດລອງຈັດຕັ້ງປະຕິບັດ ຢູ່ ສູນ ແລະ ສະຖານີ ບໍລິການເຕັກນິກ ກະສິກຳ ຢູ່ 3 ແຫ່ງ ຄື ແຂວງ ຄຳມ່ວນ, ສະ ຫວັນນະເຂດ ແລະ ໄຊຍະບູລີ. ນອກນີ້, ກໍ່ສຸມໃສ່ ສ້າງວິຊາການ ດ້ານກົນຈັກກະສິກຳ ໂດຍຜ່ານ ການຝຶກອົບຮົມ ການຄຸ້ມຄອງ ແລະ ນຳໃຊ້ກົນຈັກກະສິກຳ. ຄຽງຄູ່ກັນນີ້ ກໍ່ເອົາໃຈໃສ່ ວຽກງານ ຖານຂໍ້ມູນ ແລະ ການຕິດຕາມປະເມີນ ຜົນ ການນຳໃຊ້ ກົນຈັກກະສິກຳ ແລະ ລະບົບກົນຈັກ ກະສິກຳ ເພື່ອແນ່ໃສ່ ປັບປຸງ ລະບົບກົນຈັກ ກະສິກຳ ເຂົ້າໃນ ການຜະລິດ ທີ່ທັນສະໄໝ. ພ້ອມທັງ ເອົາໃຈໃສ່ ຝຶກອົບຮົມ ການຄຸ້ມຄອງ ນຳໃຊ້ກົນຈັກກະສິກຳ, ເຕັກນິກກ່ອນ ແລະ ຫຼັງການ ເກັບກ່ຽວ ຢູ່ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຊາວກະສິກອນ. ເຜີຍແຜ່ຂໍ້ມູນຂ່າວສານ ແມ່ນສຸມໃສ່ ສ້າງ ແລະ ພັດທະນາ ເຄື່ອງມື ສົ່ງເສີມ ກະສິກຳ ເຊັ່ນ ແຜ່ນພັບ, ປຶ້ມສະເຕີ, ປຶ້ມແນະນຳ ເຕັກນິກ ການປູກຝັງ, ການ ລ້ຽງສັດ; ນອກນີ້ ຈະໄດ້ສ້າງວາລະສານສົ່ງເສີມ, ສ້າງສາລະຄະດີ ວີດີໂອ ແລະ ພັດທະນາ ເວບໄຊສົ່ງເສີມ ກະສິກຳ ໃຫ້ມີຂໍ້ມູນຫຼາກຫຼາຍ ຕອບສະໜອງຄວາມຕ້ອງການຂອງຊາວກະສິກອນ.

## 2. ເສົາຄ້ຳທີ ສອງ: ປ່າໄມ້.

### 2.1 ແຜນງານຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້.

### 2.1.1 ແຜນດຳເນີນງານ ຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້.

ປ່າໄມ້ເປັນຊັບພະຍາກອນອັນລ້ຳຄ່າຂອງຊາດ ທີ່ມີຄວາມສຳຄັນສູງ ຕໍ່ການເຕີບໂຕ ແລະ ຄວາມຍືນຍົງ ຂອງ ການພັດທະນາເສດຖະກິດ-ສັງຄົມຂອງປະເທດ ກໍຄື ຕໍ່ການປັບປຸງຊີວິດການເປັນຢູ່ ແລະ ລຶບລ້າງຄວາມທຸກຍາກ ຂອງ ປະ ຊາຊົນບັນດາເຜົ່າ. ເຖິງແນວໃດກໍຕາມ, ໃນຊຸມປີຜ່ານມາ, ລັດຖະບານ ແຫ່ງ ສປປ ລາວ ມີຄວາມຈຳເປັນຕ້ອງໄດ້ ເອື່ອຍອີງໃສ່ປ່າໄມ້ ເພື່ອເປັນແຫຼ່ງລາຍຮັບໃນການສ້າງສາພັດທະນາປະເທດຊາດ ໃຫ້ຫຼຸດພົ້ນອອກຈາກ ຄວາມທຸກ ຍາກ. ຍ້ອນຄວາມຈຳເປັນດັ່ງກ່າວ ບວກໃສ່ກັບ ການຂາດສະຕິ ແລະ ຄວາມຮອບຮູ້ ກ່ຽວກັບ ການນຳໃຊ້ປ່າໄມ້ ແບບ ຍືນຍົງ ເຮັດໃຫ້ປ່າໄມ້ ຖືກທຳລາຍຢ່າງໜັກໜ່ວງ.

ເພື່ອແກ້ໄຂບັນຫາດັ່ງກ່າວ ໃນຊຸມປີຜ່ານມາ, ລັດຖະບານ, ກໍຄື ກະຊວງການກະສິກຳ ແລະ ປ່າໄມ້ໄດ້ ກຳນົດ ແນວ-ທາງນະໂຍບາຍ, ກຳນົດຍຸດທະສາດພັດທະນາປ່າໄມ້ ແລະ ອອກກົດໝາຍ ແລະ ລະບຽບການຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້ ຢ່າງຫຼວງຫຼາຍ, ໂດຍສະເພາະ ໄດ້ກຳນົດນະໂຍບາຍປ່າໄມ້ 2020 ທີ່ທິດທາງແຜນການ ແລະ ຄາດອັນຈະແຈ້ງ ແລະ ໄດ້ຜັນຂະຫຍາຍຍຸດທະສາດດັ່ງກ່າວເປັນ ແຜນການ ແລະ ໂຄງການອັນລະອຽດ ອັນເຮັດໃຫ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ໄດ້ຮັບການຄຸ້ມຄອງ ແລະ ປົກປັກຮັກສາ ດີຂຶ້ນເປັນກ້າວໆ.

ສຳລັບປີ 2019, ກະຊວງການປ່າໄມ້ ມີທິດທາງແຜນການ ແລະ ຄາດໝາຍສູ້ຊົນຕົ້ນຕໍ ໃນແຕ່ລະດ້ານດັ່ງລຸ່ມ ນີ້:

**1) ວຽກງານຄຸ້ມຄອງປ່າປ້ອງກັນ.**

- ລົງຊຸກຍູ້ ການກຳນົດເນື້ອທີ່ປ່າປ້ອງກັນແຫ່ງຊາດເພີ່ມ ເປົ້າໝາຍເພີ່ມທັງໝົດ 300.000 ເຮັກຕາ; ໃນປີ 2019 ໃຫ້ໄດ້ ຈຳນວນ 160.000 ເຮັກຕາ.
- ສ້າງຫຼັກໝາຍໃຫຍ່, ປ້າຍໃຫຍ່ ພ້ອມທັງຕິດຕັ້ງ ໝາຍຂອບເຂດ ພື້ນທີປ່າປ້ອງກັນແຫ່ງຊາດ ຈຳນວນ 04 ເຂດ, (ຫຼັກໝາຍໃຫ່ຍ ຈຳນວນ 4 ຫລັກ ແລະ ປ້າຍໃຫຍ່ ຈຳນວນ 07 ປ້າຍ).
- ສ້າງລະບຽບ ໃນການຄຸ້ມຄອງປ່າປ້ອງກັນ ໃຫ້ບັນດາບ້ານທີ່ຢູ່ໃນ, ຢູ່ອ້ອມຮອບ ແລະ ຢູ່ນອກເຂດປ່າປ້ອງກັນ.

**2) ວຽກງານຄຸ້ມຄອງປ່າສະຫງວນ.**

- ສືບຕໍ່ສ້າງແຜນຈັດສັນ, ແຜນຄຸ້ມຄອງປ່າສະຫງວນແຫ່ງຊາດ 24 ແຫ່ງໃຫ້ສຳເລັດໃນທ້າຍປີ 2019.
- ສ້າງຕັ້ງອຸທິຍານແຫ່ງຊາດ ໃຫ້ໄດ້ 02 ແຫ່ງ (ປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ, ແລະ ປ່າສະຫງວນແຫ່ງ ຊາດ ນ້ຳແອດ-ພູເລີຍ).
- ສົມທົບກັບ ກະຊວງຖະແຫຼງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ ສືບຕໍ່ສ້າງເງື່ອນໄຂ ແລະ ສະເໜີເອົາເຂດປ່າ ສະຫງວນແຫ່ງຊາດ ຫີນໜາມໜໍ່ ເຂົ້າເປັນ ມໍລະດົກໂລກ ທາງທຳມະຊາດ.
- ສືບຕໍ່ສ້າງຕັ້ງ ກອງຄຸ້ມປ່າສະຫງວນແຫ່ງຊາດໃຫ້ສຳເລັດ 11 ເຂດ ຄື: ປ່າສະຫງວນແຫ່ງຊາດ ນ້ຳຫ້າ, ນ້ຳກ່ານ, ນ້ຳປຸຍ, ນ້ຳກະດິງ, ພູຫີຜີ, ຫີນໜາມໜໍ່, ພູຊຽງທອງ, ເຊຊັບ, ດົງອຳພາມ, ພູຊ້າງແຮ່, ພູສະບົດ-ປຸ່ງຈອງ
- ສືບຕໍ່ ປະເມີນຄືນ ສະຖານະພາບ ຂອງຊີວະນາໆພັນ ຢູ່ໃນທຸກໆເຂດປ່າສະຫງວນແຫ່ງຊາດ.
- ສຳຫຼວດແບ່ງເຂດຫວງຫ້າມ,ເຂດຄຸ້ມຄອງ,ເຂດເຊື່ອມຕໍ່ ແລະ ກັນຊົນ ພ້ອມດ້ອຍວິເຄາະຂໍ້ມູນ ໃນພື້ນທີປ່າ ສະຫງວນ ແຫ່ງຊາດ 05 ເຂດ, ຈຳນວນ 300,000 ເຮັກຕາ.
- ສ້າງຫຼັກໝາຍ, ປ້າຍ ພ້ອມທັງຕິດຕັ້ງ ໝາຍຂອບເຂດ ພື້ນທີປ່າສະຫງວນແຫ່ງຊາດ ຈຳນວນ 05 ເຂດ, (ຫຼັກໝ າຍໃຫ່ຍ ຈຳນວນ 1.500 ຫລັກ ແລະ ປ້າຍນ້ອຍ ຈຳນວນ 2.000 ປ້າຍ).

**3) ວຽກຄຸ້ມຄອງປ່າຜະລິດ:**

- ການສຳຫລວດກ່ອນການຂຸດຄົ້ນ 18.000 ເຮັກຕາ;
- ສ້າງຕັ້ງກອງ ແລະ ຊັບຊ້ອນພະນັກງານ ປະຈຳກອງຄຸ້ມຄອງປ່າຜະລິດ ຈຳນວນ 16 ເຂດ.
- ສົ່ງເສີມ ແລະ ເອື້ອອຳນວຍ ການລົງທຶນປູກໄມ້ຂອງຜູ້ປະກອບການ ໃນເຂດປ່າຜະລິດ ໂດຍເລີ່ມຈາກ 1.000 ເຮັກຕາ ໃນປີ 2019.
- ຂະຫຍາຍເຂດຢັ້ງຢືນປ່າໄມ້ ຈຳນວນ 150.000 ເຮັກຕາ.
- ປັກຫລັກໝາຍ ຢູ່ເຂດຫລໍ່ແຫລມ ໃນພື້ນທີປ່າຜະລິດ ຈຳນວນ 330 ຫລັກ.
- ຕິດປ້າຍ ພື້ນທີ່ປ່າຜະລິດ ຈຳນວນ 210 ປ້າຍ.
- ສືບຕໍ່ຕິດຕາມ ຊຸກຍູ້ ການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ ກອງທຶນພັດທະນາບ້ານ ເພື່ອປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ຈຳນວນ 666 ບ້ານ ທີ່ໄດ້ໂອນເງິນເຂົ້າບັນຊີຂອງແຕ່ລະບ້ານແລ້ວ.

4) **ການປູກໄມ້ ແລະ ຟື້ນຟູປ່າ:**

- ປູກໄມ້ໃຫ້ໄດ້ 28.000 ເຮັກຕາ; (ໃນນັ້ນ ຜູ້ປະກອບການ ຈະປູກ 1.000 ເຮັກຕາ)
- ເກັບແກ່ນພັນໄມ້ໃຫ້ໄດ້ 60.000 ກິໂລ.
- ຜະລິດເບ້ຍໄມ້ ໃຫ້ໄດ້ 14.000.000 ເບ້ຍ.
- ຟື້ນຟູປ່າໄມ້ ໃຫ້ໄດ້ 368.500 ເຮັກຕາ, ໃນນັ້ນ: ຟື້ນຟູປ່າໃນເຂດປ່າສະຫງວນ 75.000 ເຮັກຕາ, ຟື້ນຟູປ່າໃນ ເຂດປ່າປ້ອງກັນ 230.000ເຮັກຕາ, ຟື້ນຟູປ່າໄມ້ຢູ່ໃນເຂດປ່າຜະລິດ ຈ□ານວນ 21.000 ເຮັກຕາແລະ ຟື້ນຟູ ນອກເຂດ 03 ປະເພດປ່າ 42.500 ເຮັກຕາ.
- ຂຶ້ນທະບຽນສວນປູກໄມ້ ໃຫ້ໄດ້ 250 ຕອນ, ໃນເນື້ອທີ່ 150.000 ເຮັກຕາ.

**5) ວຽກຄຸ້ມຄອງປ່າໄມ້ຂັ້ນບ້ານ ແລະ ເຄື່ອງປ່າຂອງດົງ**

- ວາງແຜນຈັດແລະຄຸ້ມຄອງປ່າໄມ້ຂັ້ນບ້ານ ໃຫ້ໄດ້ 300 ບ້ານ.
- ສົ່ງເສີມ ຊາວບ້ານປູກເຄື່ອງປ່າຂອງດົງ ເພື່ອເປັນສິນຄ້າ ໃຫ້ໄດ້ ຈຳນວນ 52 ເຮັກຕາ.
- ສືບຕໍ່ຈັດຕັ້ງປະຕິບັດ ການທົດສອບລະບົບ ການຟື້ນຟູປ່າໄມ້ ໂດຍການເປັນເຈົ້າການຂອງຊາວບ້ານ ຈຳນວນ 2 ເມືອງ (ເມືອງສັງທອງ ແລະ ເມືອງປາກຊອງ).

- ສັງລວມ ຂໍ້ມູນ ເຄື່ອງປ່າຂອງດົງ ສະເໜີລັດຖະບານ ເພື່ອອະນຸມັດໂກຕ້າ ຊຸດຄົ້ນປະຈໍາປີ 2019.
- ສັງລວມຊະນິດພັນ,ຈັດປະເພດ ແລະ ຂຶ້ນບັນຊີເຄື່ອງປ່າຂອງດົງ ຂອງ ສປປ ລາວ ຢ່າງເປັນທາງການ.

**6) ວຽກງານ ການຄຸ້ມຄອງສັດນ້ຳ-ສັດປ່າ**

- ຜັນຂະຫຍາຍ ແລະ ເຜີຍແຜ່ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 05/ນຍ ລົງວັນທີ 8/5/2018 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ກວດກາ ສັດນ້ຳສັດປ່າ ແລະ ພືດປ່າປະເພດຫວງຫ້າມ.
- ອອກຂໍ້ຕົກລົງ ຂອງ ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການຄຸ້ມຄອງຟາມລ້ຽງສັດນ້ຳ, ສັດປ່າ ແລະ ສວນສັດ ທົ່ວປະເທດ.
- ອອກແຈ້ງການ ຂອງ ລັດຖະມົນຕີກະຊວງ ກປ ວ່າດ້ວຍ ການຄຸ້ມຄອງ ອາວຸດລ່າສັດປ່າ ແລະ ການຫ້າມລ່າສັດປ່າ ຢູ່ໃນ ສ ປ ປ ລາວ.
- ສ້າງຄູ່ມື ການເກັບກໍາຂໍ້ມູນ ເພື່ອຂຶ້ນທະບຽນ ບັນຊີສັດນ້ຳ, ສັດປ່າ ແລະ ສິ້ນສ່ວນຂອງສັດປ່າ ໃຫ້ສໍາເລັດ.
- ສໍາຫລວດ ເກັບກໍາຂໍ້ມູນ ຈໍານວນປະຊາກອນ ສັດນ້ຳ ແລະ ສັດປ່າ ໃນຟາມລ້ຽງສັດປ່າ ທົ່ວປະເທດ.

**7) ວຽກງານ ຫຼຸດຜ່ອນການປ່ອຍ ອາຍເຮືອນແກ້ວ ຈາກການທໍາລາຍປ່າໄມ້ (REDD+)**

- ສືບຕໍ່ ການສ້າງຍຸດທະສາດ ຫລຸດຜ່ອນ ການປ່ອຍອາຍເຮືອນແກ້ວ ຂອງ ສ ປປ ລາວ ໃຫ້ສໍາເລັດ.
- ລິເລີ່ມ ຈັດຕັ້ງປະຕິບັດແຜນດໍາເນີນງານ ວຽກງານການຫລຸດຜ່ອນການປ່ອຍ ອາຍເຮືອນແກ້ວ ຈາກການທໍາລາຍປ່າໄມ້ (REDD+)ຂັ້ນແຂວງ ໃນ 6 ແຂວງເປົ້າໝາຍ ພາກເໜືອ (ແຂວງບໍ່ແກ້ວ, ອຸດົມໄຊ, ຫລວງນໍ້າທາ, ຫລວງພະບາງ, ຫົວພັນ ແລະ ຊຽງຂວາງ).
- ສ້າງຄວາມ ພ້ອມເພື່ອກະກຽມ ຈັດຕັ້ງປະຕິບັດ ແຜນງານ ເພື່ອຫລຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ ປ ປ ລາວ ທີ່ໄດ້ຮັບຮອງໃນກອງປະຊຸມ Climate Fund ຄັ້ງທີ 18 ທີ່ນະຄອນຫລວງປາຣີ, ປະເທດ ຝລັ່ງເສດ ຄັ້ງວັນທີ 22 ມິຖຸນາ 2018.
- ສ້າງໂຄງການຮ່ວມກັບອົງການ GIZ ເພື່ອສະເໜີຂໍທຶນຈາກກອງທຶນສີຂຽວ (Green Climate Fund) ມາຈັດຕັ້ງປະຕິບັດ ແຜນງານຫລຸດປ່ອຍອາຍເຮືອນແກ້ວ (ERP) ຂອງ ສ ປ ປ ລາວ.

8) **ວຽກງານຊ່ວຍໜູນຕ່າງໆ.**

- ປັບປຸງຍຸດທະສາດປ່າໄມ້ **2020** ໃຫ້ສອດຄ່ອງກັບສະພາບການຫັນປ່ຽນຕ່າງໆ ທີ່ເກີດຂຶ້ນຢູ່ພາຍໃນແລະສາກົນ.
- ລິເລີ່ມຜັນຂະຫຍາຍ ຍຸດທະສາດປ່າໄມ້ ອອກເປັນແຜນ ພັດທະນາປ່າໄມ້ **5** ປີ **2021-2025** ແລະ ສ້າງແຜນການດໍາເນີນງານປະຈໍາປີ **2020.**
- ສ້າງແຜນພັດທະນາການຈັດຕັ້ງ ແລະ ບຸກຄະລາກອນ ໃຫ້ສົມຄູ່ກັບ ຄວາມຮຽກຮ້ອງຕ້ອງການ ຂອງຍຸດທະສາດປ່າໄມ້ສະບັບປັບປຸງ.
- ສໍາເລັດການປັບປຸງກົດໝາຍປ່າໄມ້, ພ້ອມທັງ ຮ່າງລະບຽບການລຸ່ມກົດໝາຍຕ່າງໆທີ່ຈໍາເປັນ.
- ຍາດແຍ່ງການຊ່ວຍເຫຼືອ ຜ່ານວຽກງານການຮ່ວມມື ຫຼາຍຝ່າຍ ແລະ ສອງຝ່າຍ, ໂດຍສະເພາະ ຈາກອົງການຮ່ວມມືປ່າໄມ້ອາຊີ, ກອງທຶນສີຂຽວ **(Green Climate Fund)** ແລະ ແຫຼ່ງອື່ນໆ ທີ່ມີເງື່ອນໄຂ.
- ຂະຫຍາຍກອບການຮ່ວມມືດ້ານປ່າໄມ້ ກັບ ສສ ວຽດນາມ ແລະ ກໍາປູເຈັຍ, ໂດຍເພາະ ໃນດ້ານການຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູປ່າໄມ້, ລວມທັງການແລກປ່ຽນຂໍ້ມູນຂ່າວສານ ແລະ ຄວາມຮູ້ ແລະ ປະສົບການທີ່ກ່ຽວຂ້ອງ.
- ດຶງດູດ ແລະ ອໍານວຍຄວາມສະດວກໃຫ້ການການລົງທຶນ ໃນວຽກງານປ່າໄມ້, ໂດຍສະເພາະ ໃນຂົງເຂດປູກໄມ້ ແລະ ຟື້ນຟູປ່າ ແລະ ທ່ອງທ່ຽວທໍາມະຊາດ.
- ປັບປຸງ ແລະ ເສີມຂະຫຍາຍກອງທຶນພັດທະນາປ່າໄມ້ ໃຫ້ກາຍເປັນແຫຼ່ງທຶນທີ່ມີຄວາມຍືນຍົງ ສໍາລັບວຽກງານຄຸ້ມຄອງ ແລະ ພັດທະນາປ່າໄມ້.

## 3. ເສົາຄໍ້າທີ ສາມ: ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ:

### 3.1 ແຜນງານພັດທະນາ ຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ:

#### 3.1.1 ແຜນດໍາເນີນງານ ພັດທະນາ ຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ:

**1) ທິດທາງລວມ.**

ວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແມ່ນໜ້າທີ່ຂອງຄະນະພັກ, ອົງການປົກຄອງທຸກຂັ້ນ ທັງແມ່ນໜ້າທີ່ຂອງທົ່ວສັງຄົມ, ດັ່ງນັ້ນ, ພວກເຮົາມີຄວາມຈຳເປັນຕ້ອງປຸກລະດົມກຳລັງແຮງທັງຊາດ, ຂອງປະຊາຊົນ, ຜູ້ປະກອບການ, ນັກລົງທຶນ ແລະ ອົງການຈັດຕັ້ງ, ສະຖາບັນການເງິນພາຍໃນ, ການເງິນສາກົນ ແລະ ປະເທດເພື່ອນມິດ ເຂົ້າຮ່ວມໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢ່າງແຂງແຮງຕື່ມອີກ ໂດຍສືບຕໍ່ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຕາມທິດເຮັດຢ່າງຮອບດ້ານ, ມີຈຸດສຸມ ສົມທົບແໜ້ນກັບການເຮັດແບບທົ່ວໄປ; ສຸມໃສ່ແກ້ໄຂຄວາມທຸກຍາກຂັ້ນຄອບຄົວ, ບ້ານ ແລະ ເມືອງທີ່ຍັງທຸກຍາກ ໃຫ້ມີເງື່ອນໄຂບັນລຸມາດຕະ ຖານພົ້ນທຸກ; ສຸມໃສ່ພັດທະນາຈຸດສຸມຂອງສູນກາງ ແລະ ທ້ອງຖິ່ນ ໃຫ້ມີພື້ນຖານໂຄງລ່າງທີ່ໜັກແໜ້ນ ແລະມີເງື່ອນໄຂສ້າງເປັນບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ; ເອົາໃຈໃສ່ຈັດສັນພູມລຳເນົາ ແລະ ອາຊີບໃຫ້ປະຊາຊົນ ຢູ່ຈຸດສຸມຈັດສັນຂອງສູນກາງ, ທ້ອງຖິ່ນ ແລະ ບໍລິເວນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຂອງລັດ ແລະ ເອກະຊົນ ໄດ້ຮັບປະກັນມີທີ່ຢູ່ອາໄສໝັ້ນຄົງປອດໄພ, ມີບ່ອນທຳການຜະລິດຄົງທີ່ ແລະ ມີອາຊີບໝັ້ນຄົງ ຕາມກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ, ແກ້ໄຂການເຄື່ອນຍ້າຍແບບບໍ່ຖືກຕ້ອງຂອງພົນລະເມືອງໃຫ້ຫຼຸດລົງ; ສ້າງ ແລະ ປັບປຸງສະຫະກອນກະສິກຳ ໃນທົ່ວປະເທດ; ເອົາໃຈໃສ່ສ້າງນັກພັດທະນາກອນກັບທີ່ຢູ່ຂັ້ນບ້ານໃຫ້ພຽງພໍ; ຕັ້ງໜ້າປັບປຸງລະບົບການເມືອງຢູ່ຂັ້ນຮາກຖານ ໃຫ້ມີຄວາມເຂັ້ມແຂງ ຕາມທິດ 3 ສ້າງ ແລະ ຮັບປະກັນເຮັດໃຫ້ຮາກຖານ ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບປອດໄພ, ມີຄວາມເປັນລະບຽບ ຮຽບຮ້ອຍຢ່າງໜັກແໜ້ນ, ຍາດແຍ່ງການສະໜັບສະໜູນ ທາງດ້ານທຶນຮອນ ແລະ ວິຊາການກັບບັນດາປະເທດເພື່ອນມິດ, ອາຊຽນ, ພາກພື້ນ ແລະ ສາກົນ ຢ່າງກວ້າງຂວາງ.

**2) ຄາດໝາຍສູ້ຊົນ.**

– ສູ້ຊົນສ້າງຄອບຄົວໃຫ້ມີເງື່ອນໄຂບັນລຸມາດຕະຖານພົ້ນທຸກ ໃຫ້ໄດ້ 4.649 ຄອບຄົວ; ບ້ານມີເງື່ອນໄຂບັນລຸມາດຕະຖານພົ້ນທຸກ ໃຫ້ໄດ້ 220 ບ້ານ; ເມືອງພົ້ນທຸກ ໃຫ້ໄດ້ 2 ເມືອງ (ເມືອງຊ່ອນ, ແຂວງ ຫົວພັນ ແລະ ເມືອງນອງ, ແຂວງ ສະຫວັນນະເຂດ); ສູ້ຊົນສ້າງບ້ານພັດທະນາທີ່ເປັນຕົວແບບ ໃຫ້ໄດ້ 100 ບ້ານ; ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງໃນຊົນນະບົດໃຫ້ໄດ້ແຂວງລະ 1-2 ບ້ານ; ສູ້ຊົນຈັດສັນພູມລຳເນົາ ແລະ ອາຊີບ ຢູ່ 4 ຈຸດສຸມຂອງສູນກາງ, 70 ຈຸດສຸມຂອງທ້ອງຖິ່ນ, ບໍລິເວນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຂອງລັດ ແລະ ເອກະຊົນ ແລະ ການຍົກຍ້າຍຈັດສັນປະຊາຊົນຢູ່ເມືອງສະໜາມໄຊໃຫ້ມີປະສິດທິຜົນ ແລະ ຖືກຕ້ອງສອດຄ່ອງຕາມກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ.
– ສ້າງ, ປັບປຸງກຸ່ມ ແລະ ສະຫະກອນຜະລິດກະສິກຳ ຖືກຕ້ອງຕາມຂັ້ນຕອນນິຕິກຳ ໃຫ້ໄດ້ 140 ກຸ່ມ ແລະ ໃຫ້ໄດ້ 5 ສະຫະກອນ.
– ຂະຫຍາຍກອງທຶນພັດທະນາບ້ານ (ບ້ວງ 500 ລ້ານກີບ ຕໍ່ເມືອງທຸກຍາກ) ໃຫ້ເພີ່ມຂຶ້ນເປັນ 607 ກອງທຶນໃນທົ່ວປະເທດ.

3) **ວຽກງານຈຸດສຸມ.**

– ສືບຕໍ່ຊຸກຍູ້ ແລະ ຕິດຕາມການຜັນຂະຫຍາຍຈັດຕັ້ງຜັນປະຕິບັດ ດຳລັດເລກທີ 348/ລບ ວ່າດ້ວຍມາດຕະ ຖານພົ້ນທຸກ ແລະ ມາດຕະຖານພັດທະນາ ແລະ ບົດແນະນຳ 0830/ກປ ຂອງກະຊວງກະສິກຳ ແລະ ປ່າໄມ້ ຕິດພັນກັບຂະບວນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຮາກຖານບ້ານຢູ່ທ້ອງຖິ່ນຕ່າງໆໃນທົ່ວປະເທດ ໃຫ້ດຳເນີນໄປຕາມແຜນການທີ່ວາງໄວ້ ແລະ ໃຫ້ສຳເລັດ ໃນເດືອນ ມິຖຸນາ ປີ 2019; ສ້າງລະບົບຖານຂໍ້ມູນການພົ້ນທຸກ ແລະ ພັດ ທະນາໃນທົ່ວປະເທດ ແລະ ກະກຽມເງື່ອນໄຂຕ່າງໆ ເພື່ອຈັດຕັ້ງການປະເມີນການພົ້ນທຸກ ແລະ ພັດທະນາ ຕາມດຳລັດເລກທີ 348/ລບ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາໃນປີ 2020 ໂດຍຊຸກຍູ້ບັນດາຂະແໜງ ການທີ່ກ່ຽວຂ້ອງຄົ້ນຄວ້າ, ປັບປຸງ ກຳນົດມາດຕະຖານເງື່ອນໄຂລະອຽດຂອງຂະແໜງການ ກ່ຽວກັບຄອບຄົວ, ບ້ານ, ເມືອງພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ, ເມືອງເຂັ້ມແຂງຮອບດ້ານ ແລະ ຈັດຕັ້ງການປະເມີນການພົ້ນທຸກ ແລະ ພັດທະນາ ຕາມຂະແໜງການຕົນ ໃນປີ 2020.
– ຊຸກຍູ້ ບັນດາຂະແໜງການທີ່ກ່ຽວຂ້ອງເປັນເຈົ້າການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ສຸມໃສ່ແກ້ໄຂຄອບຄົວ, ບ້ານ ແລະ ເມືອງທຸກຍາກ ໃນຈຳນວນ 64.593 ຄອບຄົວ, ຈຳນວນ 1.536 ບ້ານ ແລະ 23 ເມືອງ

ທຸກຍາກ ໃຫ້ມີເງື່ອນໄຂພົ້ນທຸກ ໃນປີ 2019 ແລະ ປີ 2020. ໃນນີ້ ບ້ານທີ່ຍັງທຸກຍ້ອນບໍ່ມີເສັ້ນທາງເຂົ້າເຖິງ ຫຼື ທາງໄດ້ລະດູດຽວ ໃນຈຳນວນ 1.240 ບ້ານ, ບ້ານທີ່ຍັງທຸກຍ້ອນບໍ່ມີສຸກສາລາ, ບໍ່ມີຖົງຢາປະຈຳບ້ານ ຫຼື ໃຊ້ເວລາຍ່າງໄປໂຮງໝໍເມືອງ ຫຼາຍກວ່າ 2 ຊົ່ວໂມງ ຈຳນວນ 244 ບ້ານ, ບ້ານທີ່ທຸກຍ້ອນບໍ່ມີນ້ຳສະອາດ ຊົມໃຊ້ ຈານວນ 222 ບ້ານ ແລະ ບ້ານທີ່ທຸກຍ້ອນມີຄອບຄົວທຸກຍາກ ຫຼາຍກວ່າ 50% ຂຶ້ນເມືອ ຂອງ ຄອບຄົວທັງໝົດພາຍໃນບ້ານ ຈຳນວນ 657 ບ້ານ.

- ຕິດຕາມ, ຊຸກຍູ້ ບັນດາຂະແໜງການ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດໂຄງການຕ່າງໆ ທີ່ໄດ້ຮັບອະນຸມັດໃຫ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາ ທີ່ຍັງບໍ່ທັນສຳເລັດຢູ່ 64 ຈຸດສຸມພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ໃນນັ້ນ 11 ຈຸດສຸມຂອງສູນກາງ ແລະ 53 ຈຸດສຸມຂອງທ້ອງຖິ່ນ ໃຫ້ສຳເລັດຕາມຄາດໝາຍຂອງແຜນການໂຄງການທີ່ວາງໄວ້ ເພື່ອສ້າງເງື່ອນໄຂໃຫ້ບັນດາຈຸດສຸມຕ່າງໆ ມີພື້ນຖານໂຄງລ່າງທີ່ໜັກແໜ້ນ, ມີເງື່ອນໄຂສ້າງເປັນບ້ານໃຫ່ຍກາຍເປັນຕົວເມືອງຢູ່ໃນຊົນນະບົດ ເພື່ອເປັນໃຈກາງບໍລິການທາງດ້ານເສດຖະກິດ ແລະ ວັດ ທະນະທຳ-ສັງຄົມ ຢູ່ໃນຊົນນະບົດ; ສຳລັບໄລຍະ 2019-2020 ແມ່ນສຸມໃສ່ 28 ຈຸດສຸມ, ໃນນີ້ ຈຸດສຸມຂອງສູນກາງ ມີ 3 ຈຸດສຸມ ແລະ ຈຸດສຸມຂອງທ້ອງຖິ່ນ ມີ 25 ຈຸດສຸມ ເພື່ອສ້າງເປັນຕົວແບບ ທີ່ບັນລຸຕາມມາດຕະຖານພົ້ນທຸກ ແລະມາດຕະຖານພັດທະນາ ທີ່ກຳນົດໄວ້ໃນດຳລັດເລກທີ 348/ ລບ.
- ຕິດຕາມ, ຊຸກຍູ້ ບັນດາຂະແໜງການ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດໂຄງການຕ່າງໆ ທີ່ໄດ້ຮັບອະນຸມັດໃຫ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາ ທີ່ຍັງບໍ່ທັນສຳເລັດ ຢູ່ 74 ຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບ, ໃນນັ້ນ 4 ຈຸດສຸມຈັດສັນຂອງສູນກາງ ແລະ 70 ຈຸດສຸມຈັດສັນຂອງທ້ອງຖິ່ນ ໃຫ້ສຳເລັດຕາມຄາດໝາຍຂອງແຜນການໂຄງການທີ່ວາງໄວ້ ເພື່ອໃຫ້ຮັບປະກັນໃຫ້ປະຊາຊົນ ມີທີ່ຢູ່ອາໄສໝັ້ນຄົງ ປອດໄພ, ມີບ່ອນທຳການຜະລິດຄົງທີ່ ແລະ ມີອາຊີບໝັ້ນຄົງ ແລະ ມີຄວາມສະຫງົບອຸ່ນອ່ຽນໃນການທຳມາຫາກິນ ແລະແກ້ໄຂການຍົກຍ້າຍແບບບໍ່ຖືກຕ້ອງຕາມ ກົດໝາຍຂອງພົນລະເມືອງໃຫ້ຫຼຸດລົງ; ສຳລັບໄລຍະ 2019-2020 ແມ່ນສຸມໃສ່ 26 ຈຸດສຸມ, ໃນນີ້ ຈຸດສຸມຂອງສູນກາງ ມີ 4 ຈຸດສຸມ ແລະ ຈຸດສຸມຂອງທ້ອງຖິ່ນ ມີ 22 ຈຸດສຸມ ເພື່ອສ້າງເປັນຕົວແບບ ການຈັດສັນພູມລຳເນົາ ແລະ ອາຊີບ ທີ່ໄດ້ຕາມມາດຕະຖານ, ເງື່ອນໄຂ ຂອງກົດໝາຍ ວ່າດ້ວຍການຈັດສັນພູມລຳເນົາ ແລະອາຊີບ ສະບັບເລກທີ 45/ສພຊ;
- ສົມທົບກັບຂະແໜງການ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕິດຕາມ, ກວດກາ ແລະ ຊຸກຍູ້ ບັນດາໂຄງການພັດທະນາຕ່າງໆ ເປັນຕົ້ນແມ່ນໂຄງການກໍ່ສ້າງເຂື່ອນໄຟຟ້າ, ທາງລົດໄຟ, ທາງດ່ວນ, ໂຄງການຂຸດຄົ້ນແຮ່ທາດ ແລະ ອື່ນໆ ໃຫ້ດຳເນີນການຍົກຍ້າຍ-ຈັດສັນປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການໃຫ້ດຳເນີນໄປຕາມແຜນຂອງໂຄງ ການ ແລະ ຮັບປະກັນໃຫ້ຖືກຕ້ອງສອດຄ່ອງ ຕາມກົດໝາຍ ວ່າດ້ວຍການຈັດສັນພູມລາເນົາ ແລະ ອາຊີບ.

## 4. ບັນດາ 2 ແຜນດຳເນີງານ ສະໜັບສະໜູນໃຫ້ ການຈັດຕັ້ງປະຕິບັດແຜນການທັງໝົດ:

### 4.1 ແຜນດຳເນີນງານ ປ້ອງກັນ ແລະ ແກ້ໄຂ ຜົນກະທົບ ຈາກ ໄພພິບັດ:

ສືບຕໍ່ ປະສານສົມທົບກັບ ບັນດາ ຂະແໜງການ ແລະ ອົງການ ປົກຄອງທ້ອງຖິ່ນ ເພື່ອກຽມພ້ອມ ຕອບໂຕ້ ກັບ ສະພາບ ການປ່ຽນແປງ ດິນຟ້າອາກາດ ທີ່ນັບມື້ນັບຖີ່ຂຶ້ນ ທີ່ເປັນໄພຂົ່ມຂູ່ ຕໍ່ກັບ ການຜະລິດ ໂດຍສະເພາະ ບັນຫາ ການລະບາດ ຂອງ ຕັກກະແຕນຝູງ ທີ່ເກີດ ຂຶ້ນຢູ່ ແຂວງ ພາກເໜືອ. ພ້ອມນີ້, ກໍ່ກຽມພ້ອມ ການປ້ອງກັນ ພະຍາດສັດ ຕາມລະດູການ ແລະ ກໍ່ເອົາໃຈໃສ່ ເຝົ້າລະວັງ ຕິດຕາມ ສະພາບ ແຫ້ງແລ້ງ-ນ້ຳຖ້ວມຂັງ ເພື່ອກຽມພ້ອມ ລາຍງານ ແນ ໃສ່ແກ້ໄຂ ໃຫ້ທັນສະພາບການ. ສືບຕໍ່ພັດທະນາ ລະບົບ ການພະຍາກອນ ການປ່ຽນແປງ ດ້ານດິນຟ້າອາກາດ ທີ່ຈະກະທົບໃສ່ການຜະລິດ ກະສິກຳ ແລະ ປ່າໄມ້ ໝາຍວ່າ ຫັນລະບົບການພະຍາກອນ ໄປສູ່ທັນສະໄໝ. **ສຸມໃສ່ການຈັດຕັ້ງປະຕິບັດ** ມາດຕະການ **ດ້ານ**ວຽກງານຊົນລະປະທານ ໃນຕໍ່ໜ້າ ຄື: (1) ນຳສົ່ງຈັກສູບນ້ຳເຄື່ອນທີ່ຂະໜາດ 57 ແຮງມ້າ ລົງແກ້ໄຂສູບນ້ຳຫົດເນື້ອທີ່ນາໂຄງການທີ່ລະບົບຄອງເໝືອງຂາດ ແລະ ບໍ່ສາມາດສົ່ງນ້ຳເຂົ້າເຖິງເນື້ອທີ່ການຜະລິດໄດ້, (2) ນຳໃຊ້ທໍ່ຢາງດຳ HDPE, ທໍ່ພລາສຕິກ PVC ເພື່ອເຊື່ອມຕໍ່ແກ້ໄຂຈຸດທີ່ມີຄອງເໝືອງຂາດໃຫ້ສາມາດຫົດເນື້ອທີ່ນາໄດ້, (3) ສຸມຟື້ນຟູສ້ອມແປງລະບົບຊົນລະປະທານທີ່ເປ່ເພເສຍຫາຍເຊັ່ນ: ລະບົບຄູກັນນ້ຳ, ຝາຍນ້ຳລົ້ນ, ຈັກສູບນ້ຳ, ອ່າງເກັບນ້ຳ ແລະ ປະຕູນ້ຳຕ່າງໆທີ່ມີແລ້ວ ແລະ ຈຸດທີ່ຍັງບໍ່ທັນມີ ເພື່ອສຳຫຼວດອອກແບບ ແລະ ກໍ່ສ້າງໃໝ່ ຈຸດທີ່ຫຼໍ່ແຫຼມທີ່ບໍ່ຮັບປະກັນ ໃນການປ້ອງກັນນ້ຳຖ້ວມເຂົ້າເນື້ອທີ່ທຳການຜະລິດຂອງຊາວກະສິກອນ, (4) ເຮັດການ

ສຶກສາ ແລະ ຄົ້ນ ຄວ້າເຂດຫຼໍ່ແຫຼ້ມທີ່ມີຄວາມສ່ຽງໄພພິບັດ ເພື່ອວາງມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບທີ່ອາດຈະເກີດຂຶ້ນເປັນຕົ້ນຢູ່ບັນແຂວງ 7 ທົ່ງພຽງ, ທົ່ງພຽງກາງ ແລະ ທົ່ງພຽງນ້ອຍ ທີ່ມັກເກີດໄພນໍ້າຖ້ວມ, ນໍ້າປ່າໄຊ ແລະ ດິນເຈື່ອນ, (5) ສໍາຫຼວດຄືນບັນດາປະຕູຄວບຄຸມນໍ້າ ທີ່ເປ່ເພ ແລະ ຍົກຍ້າຍອອກນັ້ນ ໃຫ້ສາມາດນໍາໃຊ້ ແລະ ປ້ອງກັນອຸທົກກະໄພທີ່ເກີດຂຶ້ນໄດ້ ພ້ອມກັນນັ້ນກໍ່ຈະດໍາເນີນການວາງແຜນ ກໍ່ສ້າງປະຕູນໍ້າ ແລະ ຄູປ້ອງກັນນໍ້າຖ້ວມໃນຈຸດທີ່ເຫັນວ່າຫຼໍ່ແຫຼ້ມ ເພື່ອປ້ອງກັນພື້ນທີ່ການຜະລິດ ທີ່ຢູ່ອາໃສຂອງປະຊາຊົນບັນດາເຜົ່າໃນທົ່ວປະເທດ ພາຍຫຼັງນໍ້າລົງ, (6) ວຽກງານຄຸ້ມຄອງບໍລິຫານຈັດການນໍ້າ ຈະປະສານສົມທົບກັບ ກະຊວງພະລັງງານ ແລະ ບໍ່ແຮ່, ພາກສ່ວນຮັບຜິດຊອບບັນດາເຂື່ອນໄຟຟ້າຕ່າງໆ ໃນທົ່ວປະເທດ ເພື່ອເກັບກໍາຂໍ້ມູນໃນການຄຸ້ມຄອງບໍລິຫານຈັດການນໍ້າປ່ອຍນອອກຈາກອ່າງ ເກັບນໍ້າໃນລະດູຝົນ ເພື່ອແຈ້ງເຕືອນໃຫ້ບັນດາຂະແໜງຊົນລະປະທານກະກຽມປ້ອງກັນ ແລະ ຮັບມືບໍ່ໃຫ້ນໍ້າຖ້ວມເນື້ອທີ່ທໍາການຜະລິດກະສິກໍາ ແລະ ປະສານສົມທົບກັບບັນດາເຂື່ອນໄຟຟ້າ ທີ່ໂຄງການຊົນລະປະທານນໍາໃຊ້ນໍ້າລຸ້ມເຮືອນຈັກ (ໃຕ້ເຂື່ອນ) ໃນການວາງແຜນການປ່ອຍນໍ້າອອກຈາກເຂື່ອນ ເພື່ອສະໜອງນໍ້າໃຫ້ແກ່ເນື້ອທີ່ການຜະລິດລະດູແລ້ງ.

### 4.2 ແຜນດໍາເນີນງານ ພັດທະນາ ກົງຈັກ ການຈັດຕັ້ງ ແລະ ບຸກຄະລາກອນ:

ສືບຕໍ່ຈັດຕັ້ງຜັນຂະຫຍາຍຄໍາສັ່ງເລກທີ 03/ ແລະ ມະຕິກອງປະຊຸມຄົບຄະນະບໍລິຫານສູນກາງພັກ ຄັ້ງທີ 7 ສະໄໝທີ X ໂດຍເອົາໃຈໃສ່ຄົ້ນຄວ້າ ປັບປຸງ ພາລະບົດບາດ ແລະ ກ□ານົດກົງຈັກການຈັດຕັ້ງຄືນໃໝ່ ໃຫ້ກະທັດລັດ, ເຂັ້ມແຂງ, ມີປະສິດທິຜົນ, ໂປ່ງໃສ ແລະ ມີນໍ້າໃຈຮັບໃຊ້ປະຊາຊົນຢ່າງແທ້ຈິງ, ສອດຄ່ອງຕາມສະພາບທ່າແຮງ, ສຸມໃສ່ປັບປຸງສູນບໍລິການເຕັກນິກກະສິກໍາຂັ້ນຕ່າງໆ ໃຫ້ມີຄວາມເຂັ້ມແຂງ, ສາມາດເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ໄດ້ຢ່າງມີປະສິດທິພາບ; ສືບຕໍ່ຈັດຕັ້ງຜັນຂະຫຍາຍຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ໂດຍກໍານົດຄືນໃໝ່ຍຸດທະສາດການພັດທະນາບຸກຄະລາກອນຂອງຂະແໜງກະສິກໍາ ແລະ ປ່າໄມ້ພ້ອມມີແຜນຈັດຕັ້ງປະຕິບັດຕົວຈິງ; ສືບຕໍ່ສ້າງວິຊາການກັບທີ່ດ້ານກະສິກໍາ 3-5 ຄົນຕໍ່ບ້ານ ໂດຍປັບປຸງຫຼັກສູດຝຶກອົບຮົມທີ່ສອດຄ່ອງກັບເປົ້າໝາຍ, ມີການຈັດສັນງົບປະມານໃນການຈັດຕັ້ງປະຕິບັດ ແລະ ຈັດຝຶກອົບຮົມເພື່ອສ້າງຄູຝຶກຂອງສູນບໍລິການເຕັກນິກຂັ້ນເມືອງ ໃຫ້ເຂັ້ມແຂງເພື່ອສືບຕໍ່ຝຶກໃຫ້ຊາວກະສິກອນ; ປັບປຸງລະບົບການສຶກສາ ຂອງວິທະຍາໄລກະສິກໍາ ແລະ ປ່າໄມ້, ໂຮງຮຽນ ທີ່ຂຶ້ນກັບກະຊວງກະສິກໍາ ແລະ ປ່າໄມ້ ໂດຍສຸມໃສ່ ປັບປຸງລະບົບການບໍລິຫານ, ຍົກລະດັບຄູອາຈານ, ປະຕິບັດວຽກງານປະກັນຄຸນນະພາບການສຶກສາ, ປັບປຸງພື້ນຖານໂຄງລ່າງ ໂດຍສະເພາະ ຫ້ອງຄົ້ນຄວ້າທົດລອງ ດ້ານ ການປະມົງ, ສັດຕະວະແພດ, ປ້ອງກັນພືດ, ວິທະຍາສາດດິນ, ກົນຈັກກະສິກໍາ ພ້ອມທັງປັບປຸງກົນໄກການປະສານສົມທົບກັບສະຖາບັນການສຶກສາ, ມະຫາວິທະຍາໄລ ໃນການປັບປຸງຫຼັກສູດການຮຽນການສອນ ເພື່ອໃຫ້ສອດຄ່ອງຕາມສະພາບການນໍາໃຊ້ຕົວຈິງ ຕາມຍຸດທະສາດ ແລະ ວິໄສທັດການພັດ ທະນາບຸກຄະລາກອນ ທີ່ກໍານົດໄວ້.

## III. ແຜນວຽກສະໜັບສະໜູນດ້ານນະໂຍບາຍ ແລະ ນິຕິກໍາ.

ສືບຕໍ່ສ້າງຄວາມເຂັ້ມແຂງວຽກງານນະໂຍບາຍ ໃຫ້ແກ່ພະນັກງານ ພາຍໃນຂະແໜງກະສິກໍາ ແລະ ປ່າໄມ້; ພັດທະນາຫຼັກສູດຝຶກອົບຮົມສ້າງຄວາມເຂັ້ມແຂງ ຫົວຂໍ້ "ຂະບວນການພັດທະນານະໂຍບາຍ ສໍາລັບວຽກງານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ" ແລະ "ເຄື່ອງມື ແລະ ວິທີການໃຊ້ໃນການພັດທະນານະໂຍບາຍ"; ສຶກສາກ່ຽວກັບແຮງງານໃນຂະແໜງການກະສິກໍາ ແລະ ປ່າໄມ້ ເພື່ອນໍາໃຊ້ເປັນບ່ອນອີງໃນການສະເໜີດ້ານນະໂຍບາຍກ່ຽວກັບແຮງງານ; ສັງລວມ ແລະ ວິເຄາະ ນະໂຍບາຍ, ຍຸດທະສາດ, ນິຕິກໍາຕ່າງໆ ທີ່ຕິດພັນກັບກະສິກໍາຮ່ວມສໍາພັນ ເພື່ອນໍາມາໃຊ້ໃນການສ້າງນະໂຍບາຍ; ສ້າງຖານຂໍ້ມູນດ້ານນະໂຍບາຍ ຂອງຂະແໜງກະສິກໍາ ແລະ ປ່າໄມ້; ພັດທະນາທິດທາງ ແລະ ຮູບແບບ ສໍາລັບການພັດທະນາກະສິກໍາສີຂຽວ ແລະ ຍືນຍົງ; ລົງຕິດຕາມ ແລະ ປະເມີນຜົນການນໍາໃຊ້ເນື້ອທີ່ດິນສໍາປະທານປູກໄມ້ອຸດສາຫະກໍາ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ ແລະ ສ້າງແຜນແມ່ບົດການພັດທະນາຊົນລະກະເສດ ແລະ ການຈັດການນໍ້າ.

ສ້າງ ແລະ ປັບປຸງນິຕິກໍາຂອງຂະແໜງການ ທີ່ນອນໃນແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ແລະ ແຜນຄາດຄະເນຫົວຂໍ້ກອງປະຊຸມລັດຖະບານປະຈໍາປີ 2019 ເພື່ອໃຫ້ຖືກຕ້ອງຕາມຫຼັກການ ແລະ ຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກໍາ; ຄົ້ນຄວ້າ, ຮັບຮອງ ແລະ ປະກາດໃຊ້ນິຕິກໍາຂອງກະຊວງ ເພື່ອຜັນ

ຂະ ຫຍາຍບັນດາກົດໝາຍ ແລະ ດຳລັດ ໃຫ້ເປັນອັນລະອຽດ; ຈັດພິມປຶ້ມຄວາມຮູ້ພື້ນຖານກ່ຽວກັບ 08 ກົດໝາຍ ຂະ ແໜງ ຂອງການກະສິກຳ ແລະ ປ່າໄມ້, ສ້າງຫຼັກສູດ: (1) ເຕັກນິກການສ້າງນິຕິກຳ, (2) ເຕັກນິກການກວດກາຄວາມສອດຄ່ອງຂອງຮ່າງນິຕິກຳ, (3) ເຕັກນິກການສ້າງເອກະສານທາງລັດຖະການ ແລະ (4) ເຕັກນິກການໂຄສະນາເຜີຍແຜ່ກົດໝາຍ, ຈັດຝຶກອົບຮົມເຕັກນິກການສ້າງນິຕິກຳ ໃຫ້ຜູ້ຮັບຜິດຊອບວຽກງານນິຕິກຳຂອງຫ້ອງການ, ບັນດາກົມ ແລະ ສະຖາບັນອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ຄັ້ງທີ IV.

ແຕ່ງຕັ້ງສະມາຊິກສະພາວິທະຍາສາດເຕັກນິກ ກະສິກຳ ແລະ ປ່າໄມ້ ພ້ອມທັງສ້າງຈຸດປະສານງານ ລະຫວ່າງກົມອ້ອມຂ້າງ ແລະ ທ້ອງຖິ່ນ; ເປີດກອງປະຊຸມ ສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້ ປະຈຳປີ 2019; ສ້າງຖານຂໍ້ມູນສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້; ສ້າງຄູ່ມືການຈັດຕັ້ງປະຕິບັດຂອງ ສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້; ລົງຊຸກຍູ້ວຽກງານການສ້າງນະວັດຕະກຳໃໝ່ຂອງຂະແໜງກະສິກຳ, ປ່າໄມ້ ຢູ່ທ້ອງຖິ່ນ ແລະ ສະເໜີ ພາລະບົດບາດ ແລະ ຄວາມສຳຄັນ ຂອງສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້ທົ່ວປະເທດ.

## IV. ວຽກງານກວດກາລັດ.

- ສືບຕໍ່ກວດກາການຈັດຕັ້ງປະຕິບັດແຜນພັດທະນາກະສິກຳ ແລະ ປ່າໄມ້, ພາລະບົດບາດ, ແຜນການເຄື່ອນໄຫວ, ການຈັດຕັ້ງປະຕິບັດງົບປະມານລາຍຮັບ-ລາຍຈ່າຍ, ໂຄງການລົງທຶນຂອງລັດ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມທັງພາຍໃນ ແລະ ຕ່າງປະເທດຂອງບັນດາກົມ, ຫ້ອງການ, ສະຖາບັນອອ້ມຂ້າງກະຊວງ.
- ສືບຕໍ່ເຂົ້າຮ່ວມເປັນຄະນະກວດກາການປະຕິບັດຄຳສັ່ງ ເລກທີ 15/ນຍ ກວດກາໄມ້ຢູ່ແຂວງຊຽງຂວາງ.
- ສືບຕໍ່ເຂົ້າຮ່ວມເຮັດວຽກກັບອົງການກວສອບແຫ່ງລັດ ໃນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2016 ແລະ 03 ເດືອນຂ້າມຜ່ານຂອງກະຊວງ ກະສິກ□າ ແລະ ປ່າໄມ້ ແລະ ກວດສອບຄືນການຈັດຕັ້ງປະຕິບັດຕາມມະຕິກອງປະຊຸມສະພາແຫ່ງຊາດ, ຜົນການຈັດຕັ້ງປະຕິບັດຄຳແນະນຳກວດສອບສົກປີຜ່ານມາ ປະຈຸບັນແມ່ນສຳເລັດແລ້ວ 5 ພາກສ່ວນ.
- ເຂົ້າຮ່ວມເປັນຄະນະຕິດຕາມກວດກາປະເມີນຜົນຂອງໂຄງການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ພາຍຫຼັງໂຄງການສິ້ນສຸດ.
- ສືບຕໍ່ຕິດຕາມກວດກາໂຄງການລົງທຶນຂອງລັດແຕ່ຫົວທີໂຄງການກໍ່ສ້າງສຳນັກງານຕຶກກະຊວງ ກະສິກຳ ແລະ ປ່າໄມ້ຫຼັງໃໝ່.
- ກະກຽມແຜນການເຄື່ອນໄຫວເພື່ອລົງຊຸກຍູ້ຕິດຕາມກວດກາປະເມີນຜົນໂຄງການ ບາງໂຄງການທີ່ສຳເລັດ ແລະ ບາງຄງການທີ່ກຳລັງດຳເນີນຈັດຕັ້ງປະຕິບັດຢູ່ໃນປະຈຸບັນ.
- ສືບຕໍ່ປະຕິບັດວຽກງານຕາມແຜນການ, ການຊີ້ນຳຂອງຂັ້ນເທິງ.

## V. ວຽກງົບປະມານ ການລົງທຶນ ສຸມໃສ່ ຂະແໜງ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

### 1. ການລົງທຶນຂອງລັດປະຈຳສົກປີ(PIP).

ງົບປະມານສະເພາະ PIP: ງົບປະມານການລົງທຶນ ແລະ ລາຍຈ່າຍບໍລິຫານ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະເພາະປີ 2019 ມີທັງໝົດ **213.258,35** ລ້ານກີບ,ໃນນັ້ນ:

- ເງິນເດືອນ ແລະ ເງິນອຸດໜູນຕ່າງໆ (ພາກ 60) ຈຳນວນ 49.170,12 ລ້ານກີບ
- ເງິນນະໂຍບາຍ ແລະ ເງິນຊ່ວຍໜູນຕ່າງໆ (ພາກ61) ຈຳນວນ 13.158,00 ລ້ານກີບ
- ເງິນ ລາຍຈ່າຍບໍລິຫານປົກກະຕິ (ພາກ 62) ຈຳນວນ 8.174,55 ລ້ານກີບ
- ລາຍຈ່າຍ ດັດສົມ, ສິ່ງເສີມ ແລະ ເງິນບຳລຸງ (ພາກ63) ຈຳນວນ 29.782,56 ລ້ານກີບ
- ລາຍຈ່າຍ ຊື້ຊັບສົມບັດ ຄົງທີ່ ຮັບໃຊ້ກົງຈັກບໍລິຫານ (ພາກ 66) ມີ 0 ລ້ານກີບ
- ລາຍຈ່າຍ ພາກການລົງທຶນ (ພາກ 67) ຈຳນວນ 83.190,56 ລ້ານກີບ ໃນນັ້ນ **ກະສິກຳ ແລະ ປ່າໄມ້** ຈຳນວນ 175 ໂຄງການ ມູນຄ່າ 43.647,56 ລ້ານກີບ, **ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ** ຈຳນວນ 173 ໂຄງການ ມູນຄ່າ 39.543,00 ລ້ານກີບ.

**2. ການລົງທຶນຂອງຕ່າງປະເທດ(ODA).**

ການຄຸ້ມຄອງການລົງທຶນ ຂອງຕ່າງປະເທດ ທີ່ກຳລັງຈັດຕັ້ງປະຕິບັດ ໃນປີ 2019 ມີທັງໝົດ 102 ໂຄງການ, ຊຶ່ງປະກອບມີ ສອງພາກສ່ວນຄື:

- ໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ ຈຳນວນ 71 ໂຄງການ ມີມູນຄ່າ ທັງໝົດ 128,70 ລ້ານໂດລາ, ໃນນັ້ນ ທຶນຕ່າງປະເທດ ມີ 117,85 ລ້ານໂດລາ, ທຶນພາຍໃນ 10,85 ລ້ານໂດລາ.
- ໂຄງການ NGO ຈຳນວນ 31 ໂຄງການ.

## VI. ມາດຕະການຈັດຕັ້ງປະຕິບັດ.

1. ຕ້ອງໂຄສະນາເຜີຍແຜ່ຢ່າງກວ້າງຂວາງໃຫ້ແກ່ສັງຄົມ, ນັກທຸລະກິດ, ຜູ້ປະກອບການ ເຂົ້າໃຈແຈ້ງກ່ຽວກັບຈຸດປະສົງ, ລະດັບຄາດໝາຍ, ກົນໄກ ແລະ ນະໂຍບາຍຕ່າງໆໃຫ້ຈະແຈ້ງ ແລະ ຕ້ອງດຳເນີນໄປຢ່າງຕໍ່ເນື່ອງ; ຖືເອົາວຽກງານດັ່ງກ່າວນີ້ ເປັນເນື້ອໃນ ເພື່ອເປີດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຕາມຫຼັກການ "ເຮັດດີ, ເຮັດຫຼາຍ ຖືກກົດໝາຍ"; ດ□າເນີນການສະຫຼຸບ ການແຂ່ງຂັນຍ້ອງຍໍ ໃຫ້ແກ່ການຈັດຕັ້ງ ແລະ ບຸກຄົນ ໃນທ້າຍປີ 2020.
2. ຄົ້ນຄວ້າອອກນະໂຍບາຍ ແລະ ນິຕິກຳ ອັນຈຳເປັນ ເພື່ອສົ່ງເສີມວິຫາຫະກິດ, ຜູ້ປະກອບການ ເຂົ້າໃນການລົງທຶນພັດທະນາບັນດາຈຸດສຸມ.
3. ພວກເຮົາ ຕ້ອງເປັນເຈົ້າການ ແລະ ເປັນໃຈກາງ ຕິຈັງຫວະ ຮ່ວມກັບ ພາກສ່ວນກ່ຽວຂ້ອງ ພາຍໃນ ຂະແໜງການ ແລະ ຂະແໜງການອື່ນ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເອົາໃຈໃສ່ ສຸມໃສ່ ໂດຍສະເພາະ ການຜັນຂະຫຍາຍ 3 ເສົາຄ້ຳ, 4 ແຜນງານ, 10 ແຜນດຳເນີນງານ ແລະ 13 ນະໂຍບາຍ ສຳລັບ ການຜະລິດ ເຂົ້າ ແລະ ພືດເສດ ຖະກິດ 08 ວຽກຫຼັກ ແລະ 08 ນະໂຍບາຍ ສຳລັບ ການລ້ຽງສັດ ແລະ ສັດນ້ຳ ແລະ 08 ນະໂຍບາຍ ສຳລັບ ການຄຸ້ມຄອງປ່າໄມ້ ໃຫ້ເປັນ ຮູບປະທຳ ທີ່ປະຕິບັດໄດ້ແທ້ ໂດຍສ້າງເປັນແຜນການ, ໂຄງການ ທີ່ມີການຮັບຮອງຈາກ ການນຳ ກະຊວງ ພ້ອມນີ້ ກໍ່ຕ້ອງ ຫັນລົງໄປສູ່ ທ້ອງຖິ່ນຈຸດສຸມ ໂດຍມີ ການເຊື່ອມໂຍງ ກັບແຜນການ ແລະ ໂຄງການ ຂອງ ແຂວງ ແລະ ເມືອງ ທີ່ຮັບຮອງຈາກ ການນຳ ຂັ້ນຕ່າງໆ ຂອງທ້ອງຖິ່ນ.
4. ດຳເນີນການສຳຫຼວດທ່າແຮງບົ່ມຊ້ອນ, ດ້ານຊັບພະຍາກອນດິນ ໃນທົ່ວປະເທດ, ເຂດແຄ້ວນ, ທ້ອງຖິ່ນ ໃຫ້ເຫັນແຈ້ງ ທ່າແຮງການປູກ, ການລ້ຽງ, ມູນເຊື້ອການປູກ, ການລ້ຽງ ຂອງທ້ອງຖິ່ນ; ກຳນົດໃຫ້ໄດ້ຜະລິດຕະພັນປາຍແຫຼມ ທີ່ເປັນຍຸດທະສາດ ຕິດພັນກັບການກຳນົດເຂດປູກ, ເຂດລ້ຽງ ແລະ ປັກຫຼັກໝາຍ ທີ່ດິນສະຫງວນໄວ້ ເປັນແຕ່ລະທ້ອງຖິ່ນ, ເຂດແຄ້ວນແລ້ວ ສ້າງເປັນໂຄງການພັດທະນາແຕ່ລະປະເພດ ຜະລິດຕະພັນ, ສົດ, ສະອາດ,ປອດສານພິດ ເພື່ອສົ່ງອອກ, ສົ່ງອອກກັບທີ່; ບໍລິໂພກພາຍໃນ, ເປັນແຫຼ່ງວັດຖຸດິບ ໃຫ້ແກ່ອຸດສາຫພກຳປຸງແຕ່ງກັບທີ່.
5. ການລົງທຶນພັດທະນາຈຸດສຸມ ເປັນພາກສ່ວນໜຶ່ງ ທີ່ບໍ່ສາມາດຕັດແຍກອອກຈາກແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ. ດັ່ງນັ້ນ, ການຈັດຕັ້ງປະຕິບັດໂຄງການ, ບັນດາກິດຈະກຳຕ່າງໆ ຂອງບັນດາວິສາຫະກິດ, ຜູ້ປະກອບການຢູ່ບໍລິເວນຈຸດສຸມ ຕ້ອງຕິດພັນຢ່າງສະໜິດແໜ້ນ ກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງ ທ້ອງຖິ່ນ; ເຮັດໃຫ້ບັນດາໂຄງການວຽກງານເຊື່ອມສານ ແລະ ເຂົ້າເຖິງກົນໄກນະໂຍບາຍຂອງແຜນງານ ໂຄງການອື່ນໆຂອງລັດ ທີ່ພວມຈັດຕັ້ງປະຕິບັດຢູ່ໃນພື້ນທີ່; ທັງສາມາດເຂົ້າເຖິງ, ທັງສາມາດມີຄວາມສະດວກເຂົ້າເຖິງ ນະໂຍບາຍ, ກອງທຶນພັດທະນາວິສາຫະກິດຂະໜາດນ້ອຍ-ຂະໜາດກາງ (SMEs) ເພື່ອພັດທະນາເສດຖະກິດຮ່ວມມື, ຟາມປະເພດຕ່າງໆ ນັບທັງອຸດສາຫະກຳປຸງແຕ່ງຂະໜາດນ້ອຍ-ຂະໜາດກາງ, ການຄ້າ ການບໍລິການ ແລະ ການທ່ອງທ່ຽວຢູ່ຊົນນະບົດ.
6. ເພີ້ມທຶນຮອນ ເຂົ້າໃນການຄົ້ນຄວ້າວິທະຍາສາດ ດ້ານກະສິກຳ ແລະ ປ່າໄມ້ ໃຫ້ເປັນລະບົບ ແລະ ຕໍ່ເນື່ອງ ເປັນຕົ້ນແມ່ນ: ພື້ນຖານໂຄ່ງລ່າງ, ອຸປະກອນ, ເຄື່ອງມື ທີ່ທັນສະໄໝ ໃຫ້ຍັບເຂົ້າໃກ້ຄຽງກັບບັນດາປະເທດອາຊຽນ ເພື່ອເພີ້ມຂີດຄວາມສາມາດ ຂອງນັກວິທະຍາສາດ, ນັກຄົ້ນຄວ້າປະເທດເຮົາ ສາມາດເຊື່ອມໂຍງວຽກງານ, ການຄົ້ນຄວ້າໃຫ້ມີປະສິດທິພາບ ຮັບໃຊ້ໃຫ້ແກ່ຂະແໜງກະສິກຳ, ປ່າໄມ້ ລາວ ມີບາດກ້າວບຸກທະລຸ; ພ້ອມດຽວກັນນັ້ນ ກໍ່ຫັນປ່ຽນວຽກງານການຄົ້ນຄວ້າ ຂອງສະຖາບັນ, ສູນສົ່ງເສີມ ຈາກການຄົ້ນຄວ້າແຕ່ດ້ານດຽວ ໄປສູ່ການ

ຄົ້ນຄວ້າ ເພື່ອຮັບໃຊ້ໃຫ້ແກ່ການຜະລິດ; ການດຳເນີນທຸລະກິດ ຂອງວິສາຫະກິດກະສິກຳ ແລະ ການຕະຫຼາດ ພາຍໃນ ແລະ ຕ່າງປະເທດ.

7. ຊຸກຍູ້ສົ່ງເສີມການຜະລິດ ຂອງຄອບຄົວປະຊາຊົນເຂົ້າເປັນກຸ່ມ, ຕື່ມຕົວຈັດຕັ້ງເປັນສະຫະກອນ, ເປັນຟາມ, ຕິດພັນກັບການບໍລິການ 2 ສົ້ນ ຂອງວິສາຫະກິດພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ມີຄວາມສະດວກເຂົ້າເຖິງແຫຼ່ງທຶນ, ຕະຫຼາດ, ຖ່າຍໂອນເອົາເຕັກໂນໂລຢີ; ການຈັດຕັ້ງ ແລະ ແບບວິທີການຜະລິດ ການຄຸ້ມຄອງທີ່ທັນສະໄໝ ໄດ້ໄວກວ່າເກົ່າ ທັງສາມາດຫຼຸດຜ່ອນຄວາມສ່ຽງໄດ້ຫຼາຍຂຶ້ນ, ສ້າງຕົວແບບໃຫ້ຫຼາຍ.
8. ພັດທະນາຊັບພະຍາກອນມະນຸດ ຂອງຂະແໜງກະສິກຳ, ປ່າໄມ້ ຕິດພັນກັບຍຸດທະສາດ ພັດທະນາຜະລິດຕະພັນສິນຄ້າກະສິກຳລາວ ໃຫ້ມີຄວາມສາມາດ, ມີຈຳນວນພຽງພໍ ເພື່ອຊ່ວຍຊາວກະສິກອນລາວ ໃຫ້ມີທັກສະ ກະສິກຳສະໄໝໃໝ່ ແບບມີຈຸດສຸມ ແລະ ໃຫ້ເປີດກ້ວາງອອກໄປທົ່ວປະເທດ ໃນໄລຍະຍາວ; ພ້ອມດຽວກັນນັ້ນ ກໍ່ສ້າງໃຫ້ສູນສົ່ງເສີມ, ສະຖານີ ຂັ້ນທ້ອງຖິ່ນ ສາມາດເປັນຫຼັກແຫຼ່ງ ໃນການນຳພາຊາວກະສິກອນຮຽນຮູ້ ຈາກການແລກປ່ຽນຄວາມຄິດ, ຄວາມເຫັນ ເພື່ອພັດທະນາການຜະລິດສິນຄ້າ ແລະ ການບໍລິການຢ່າງເປັນປົກກະຕິ. ເອົາວຽກງານດັ່ງກ່າວນີ້ ຕິດພັນກັບຂະບວນການ ສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ ແລະ ເມືອງເຂັ້ມແຂງຮອບດ້ານ ເປັນພື້ນຖານໃຫ້ແກ່ການສ້າງແຂວງເປັນຫົວໜ່ວຍຍຸກທະສາດຢ່າງແທ້ຈິງ.
9. ປັບປຸງຍຸດທະສາດ ພັດທະນາຂະແໜງການ ໃຫ້ສອດຄ່ອງ ຕາມທິດຮ່ວມສຳພັນ ທີ່ແໜ້ນແຟ້ນ, ກົມກ່ຽວກັບຂະແໜງການ ທີ່ກ່ຽວຂ້ອງ.
10. ສ້າງແຜນຍຸດທະສາດ ພັດທະນາຊົນລະກະເສດ ແລະ ການບໍລິຫານຈັດການນ້ຳ ເພື່ອຕ້ານແລ້ງ, ຕ້ານຖ້ອມ.
11. ສ້າງນະໂຍບາຍສົ່ງເສີມ ການພັດທະນາຊົນລະກະເສດ ໂດຍລວມ, ໂດຍສະເພາະແມ່ນນະໂຍບາຍ ຊຸກຍູ້ສົ່ງເສີມໃຫ້ວິສາຫະກິດ ທັງພານໃນ ແລະ ຕ່າງປະເທດ ນຳໃຊ້ເຕັກໂນໂລຢີ ທີ່ທັນສະໄໝ ເຂົ້າໃນການຜະລິດກະສິກຳສະອາດ, ປອດສານພິດ ໃຫ້ເປັນສິນຄ້າ ທີ່ໄດ້ປຽບຂອງປະເທດເຮົາ.
12. ແກ້ໄຂຂາດຕົວ ຂອດອຸດຕັນ, ສະຫງັກຊັກຊ້າ ໃນການບໍລິການ, ອຳນວຍຄວາມສະດວກ, ໃຫ້ແກ່ປະຊາຊົນ, ໃຫ້ແກ່ຜູ້ປະກອບການ, ຫົວໜ່ວຍວິສາຫະກິດ, ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໄດ້ເຂົ້າສູ່ການຜະລິດການຄ້າ ແລະ ການບໍລິການໄວຂຶ້ນ.
13. ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ຂະແໜງກະສິກຳ, ປ່າໄມ້ ຂອງທ້ອງຖິ່ນ ໃຫ້ມີຄວາມສາມາດໃນການຈັດຕັ້ງປະຕິບັດວຽກງານ ແລະ ຄົ້ນຄ້ວາດ້ານວິທະຍາສາດ, ຮູ້ຈັກເສີມຂະຫຍາຍ ນຳໃຊ້ໝາກຜົນ ຂອງການຄົ້ນຄ້ວາວິທະຍາສາດ, ຮູ້ຈັກດຶງດູດ ການລົງທຶນ, ຊອກຕະຫຼາດ, ຮູ້ຈັກຈັດຕັ້ງການຜະລິດ; ສ້າງກົນໄກມອບສິດຄວາມຮັບຜິດຊອບ ຕົກລົງບັນຫາການຜະລິດ, ການລົງທຶນ ຂອງພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດຕາມກົດໝາຍກຳນົດ, ສູນກາງເຮັດໜ້າທີ່ຄຸ້ມຄອງມະຫາພາກ, ຄຸ້ມຄອງກວດກາຕິດຕາມການປະຕິ ບັດກົດໝາຍ ສ້າງພະນັກງານ.
14. ຫັນເອົາຫົວໜ່ວຍວິຊາການ, ສະຖາບັນ, ສູນ ໄລ່ລຽງເສດຖະກິດກຸ້ມຕົນເອງ ດ້ານງົບປະມານ ບໍລິຫານ, ການຄົ້ນຄ້ວາກ້າວໄປເຖິງສາມາດຈ້າງພະນັກງານ ນັກຄົ້ນຄ້ວາ ແລະ ວິຊາການຮັບໃຊ້ໃຫ້ສະຖາບັນ ແລະ ສູນຄົ້ນຄ້ວາ, ພັດທະນາທົ່ວປະເທດ ເປັນເຈົ້າດ້ານງົບປະມານ ຈາກຫຼາຍແຫຼ່ງ.
15. ປັບປຸງກົດໝາຍ, ສ້າງນະໂຍບາຍສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນ, ການຜະລິດ ແລະ ການບໍລິການ, ເຜີຍແຜ່, ເຊື່ອມຊຶມ ຢ່າງທົ່ວເຖິງ ຮອດຮາກຖານ ແລະ ຄອບຄົວປະຊາຊົນ.
16. ຕ້ອງມີ ການຕິດຕາມ ກວດກາ ແລະ ປະເມີນຜົນແຕ່ຫົວທີ ແລະ ເປັນລະບົບປົກກະຕິ ຕໍ່ເນື່ອງໃນແຕ່ລະໄຕມາດ ຊຶ່ງປະເດັນ ສຳຄັນ ແມ່ນ ເອົາໃຈໃສ່ ຍົກລະດັບ ໃນວຽກ 04 ຮ່ວມ 04 ປະສານ ລະຫວ່າງ ພາກລັດ, ຜູ້ຜະລິດຜູ້ປະກອບການ, ທະນາຄານ/ສະຖາບັນ ການເງິນ ໃຫ້ກົມກຽວ ລ່ອງລຽນ ໄປລວງດຽວກັນ.
17. ບັນດາຂະແໜງການ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ສຸມວຽກ, ສຸມງົບປະມານ, ສຸມພະນັກງານ ເພື່ອຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກ ໃຫ້ໄປຕາມທິດລວງດຽວກັນ ໃຫ້ສຳເລັດເປັນແຕ່ລະຈຸດສຸມ ໂດຍສະເພາະເລັ່ງໃສ່ 20 ຈຸດສຸມຂອງສູນກາງ 71 ,ຈຸດສຸມຂອງທ້ອງຖິ່ນ ແລະ 145 ຈຸດສຸມຈັດສັນພູມລຳເນົາຄົງທີ່ ເພື່ອຍົກສູງການຜະລິດເປັນສິນຄ້າເພີ່ມລາຍຮັບໃຫ້ປະຊາຊົນ ,ຄຽງຄູ່ກັບການພັດທະນາຄູນນະພາບຊີວິດການເປັນຢູ່ຂອງປະຊາຊົນໃນເຂດຊົນນະບົດໃຫ້ດີຂຶ້ນ ແລະ ເຮັດໃຫ້ອັດຕາຄວາມທຸກຍາກຂອງປະຊາຊົນຫຼຸດລົງເປັນກ້າວໆ.

18. ຊ່ວຍທ້ອງຖິ່ນ ຈັດຕັ້ງປະຕິບັດ 6 ກຸ່ມຕົວຊີ້ບອກ ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດ348/ລບ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ, ບົດແນະນຳ 0830/ກປ ຂອງກະຊວງກະສິກຳ ແລະ ປ່າໄມ້ ຕິດພັນກັບການຊຸກຍູ້ ຂະບວນການ ເພື່ອດຳເນີນກອງປະຊຸມໃຫຍ່ຮາກຖານບ້ານ ແລະ ບ້ານໃຫຍ່ພັດທະນາທົ່ວປະເທດ.
19. ປຸກລະດົມຫົວໜ່ວຍວິສາຫະກິດ ທັງພາຍໃນ ແລະ ຕ່າງປະເທດ, ຜູ້ປະກອບການ ດ້ວຍການສ້າງບ້ານແບບຢ່າງພົ້ນທຸກ, ບ້ານແບບຢ່າງພັດທະນາ ໂດຍກົງ ຫຼື ປຸກລະດົມ ໃຫ້ລົງທຶນສ້າງວິສາຫະກິດກະສິກຳ ດ້ວຍການມີສ່ວນຮ່ວມຂອງຊາວກະສິກອນ ດ້ວຍຮູບແບບຕ່າງໆ ທີ່ມີຜົນປະໂຫຍດຮ່ວມກັນ, ພ້ອມກັນເຂົ້າສູ່ຕະຫຼາດທີ່ໝັ້ນຄົງ. ສືບຕໍ່ສົ່ງເສີມນຳໃຊ້ ສູນທີ່ມີຢູ່ເພື່ອຝຶກອົບຮົມຄູຝຶກ ໃຫ້ສູນສົ່ງເສີມຂັ້ນແຂວງ ແລະ ສາຖະນີບໍລິການເຕັກນິກຂັ້ນເມືອງ, ຝຶກອົບຮົມອາສາສະໝັກບ້ານ, ຊາວກະສິກອນ ແລະ ຜູ້ປະກອບການວິສາຫະກິດກະສິກຳຂະໜາດນ້ອຍ ຢ່າງຕັ້ງໜ້າເພື່ອຮັບໃຊ້ໃຫ້ແກ່ການຜະລິດກະສິກຳເປັນສິນຄ້າພັດທະນາຊົນນະບົດ ຢູ່ບໍລິເວນຕ່າງໆ.
20. ອົງການປົກຄອງແຂວງ ຕ້ອງມີກົນໄກ ໃນການຊີ້ນຳ ຄຸ້ມຄອງ ແລະ ສ້າງເງື່ອນໄຂ ອຳນວຍຄວາມສະດວກ, ກວດກາ-ຕິດຕາມ ຊຸກຍູ້ໃຫ້ແກ່ເມືອງ ໃຫ້ແກ່ວິສາຫະກິດ ຜູ້ປະກອບການ ສົມທົບກັບເມືອງ ປຸກລະດົມຄວາມຕື່ນຕົວ ເປັນເຈົ້າ ເຂົ້າຮ່ວມຂອງການຈັດຕັ້ງບ້ານ, ຊຸມຊົນ ແລະ ປະຊາຊົນຕາມພາລະບົດບາດຂອງຕົນ.

ດັ່ງນັ້ນ, ຈຶ່ງເຮັດບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາ ແລະ ກຳນົດທິດທາງແຜນການ ສະບັບນີ້ ໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້**